

# ກິ່ນນາງ

ພ.ພວງສະບາ

500

# ສີ່ນາງ

ພ. ພວງສະບາ

ພິມຄັ້ງທີ 1

ອຸທິນ ບຸນຍາວົງ

ສຳນັກພິມແລະຈຳໜ່າຍແຫ່ງລັດ ສ.ປ.ປ. ລາວ.

ວຽງຈັນ 1992

ຄະນະຈັດທຳ

- ມ. ອຳພາພອນ ປະທຸມມະລັດ

- ມ. ຄຳຮັກ ແກ້ວບຸນທວນ

ທ. ບຸນຊູ ພັນທະວີໄຊ

- ທ. ບຸນນອງ ໄຊຍະເສນ

ພິມດີດ ມ. ຈັນທອນ

ດັດແກ້ນາແກັດ ມ. ອຳພາ

ແຕ້ມໜ້າປົກໂດຍ: ທ. ທອງໃບ ໂພທິສານ

ອ.ພ ...15-9-92....../ສພປ

ທ ບ .385/16-9-92..../ ພ.ປ

ພິມທີ່ໂຮງພິມ ................

ຈຳນວນ .250.....ຫົວ, ຂະໜາດ 13 × 19 ຊມ

# ບົດນຳ

ຜ່ານມາສຳນັກພິມ ແລະ ຈຳໜ່າຍປື້ມແຫ່ງລັດ ສ.ປ.ປ.ລາວ ເຄີຍໄດ້ພິມຈຳໜ່າຍປື້ມ ທີ່ເປັນບົດຂຽນຂອງ ພ.ພວງສະບາ ມາ ແລ້ວມີທັງເລື່ອງສັ້ນ, ກາບກອນ, ເລື່ອງສຳລັບເດັກນ້ອຍແລະວັນ ນະ ຄະດີບູຮານຫລາຍຫລັ້ມ. ອີກເທື່ອໜຶ່ງທາງສຳນັກພິມແລະຈຳໜ່າຍ ປື້ມແຫ່ງລັດ ສ.ປ.ປ.ລາວຂອງພວກເຮົາ ໄດ້ຈັດພິມປື້ມບົດ ເລື່ອງ **ສັ້ນ** ຂອງ ພ.ພວງສະບາໃນຊຸດ "ກິ່ນນາງ" ອອກສູ່ສາຍຕາ ຂອງ ທ່ານຜູ້ອ່ານທົ່ວໄປ ແລະ "ເພື່ອນ" ປາກກາຂອງເຂົາ.

ການຈັດພິມຈຳໜ່າຍຊຸດ " ກິ່ນນາງ " ໃນເທື່ອນີ້ພວກ ເຮົາ ຫວັງວ່າຈະໄດ້ຮັບການອູ້ມຊູ ສະໜັບສະໜູນຈາກບັນດາທ່ານຜູ້ອ່ານ ພໍສົມຄວນ. ຊຸດ " ກິ່ນນາງ " ຂອງເຂົາ ໄດ້ບັນຈຸ **ໄວ້ເຊິ່ງ** ເນື້ອຫາສາລະໃນທາງສ້າງສັນ ເຊິ່ງເຄົ້າມູນທັງໝົດ ມັນແມ່ນ ປະ ກົດການແລະ ຜູກພັນຢູ່ໃນຊີວິດຈິງຂອງສັງຄົມ.

ດັ່ງນັ້ນ, ຊຸດ "ກິ່ນນາງ" ຈຶ່ງເປັນອຸທາຫອນໃຫ້ທ່ານໄດ້ນຳໄປ ໄຕ່ຕອງ ເພື່ອຊ່ອຍກັນປົກປັກຮັກສາຮີດຄອງປະເພນີ ແລະ ຄຸ້ມຄອງ ສະພາບສິ່ງແວດລ້ອມຂອງສັງຄົມໃຫ້ດີຂື້ນ.

ດ້ວຍຄວາມຮັກແພງແລະນັບຖື,

ວຽງຈັນ, ວັນທີ່ 28-2-1992

ສຳນັກພິມ ແລະ ຈຳໜ່າຍປື້ມແຫ່ງລັດ ສ.ປ.ປ.ລາວ

ຜູ້ອຳນວຍການ



ພ. ພວງສະບາ. ເກີດທີ່ບ້ານເວີນໄຊ ຕາແສງເວີນໄຊ ເມືອງໂພນທອງ ແຂວງຈຳປາສັກ. ຊີວິດສ່ວນໜຶ່ງຂອງເຂົາ ໃຫ່ຍຂຶ້ນມາດ້ວຍເຂົ້າກົ້ນບາດ ການສຶກສາຈົບພຽງຊັ້ນມັດທະຍົມເອກຈາກ ໂຮງຮຽນປາລີ ປະລິຍັດຕິທຳ.

ເລີ່ມເຂົ້າສູ່ວົງການ ນັກຂ່າວ, ນັກໜັງສືພິມ, ນັກປະພັນ, ນັກກະວີເມື່ອປີ 1964. ເຂົາຂຽນທັງບົດຂ່າວ, ບົດຄວາມ, ບົດວິຈານ , ສາລະຄະດີ, ບົດບັນນາທິການ, ບົດເລື່ອງສັ້ນ, ບົດກະວີ ແລະ ຮິບໂຮມຮຽບຮຽງວັນນະຄະດີບູຮານມາແລ້ວຫລາຍເຫລັ້ມ.

ບົດຂຽນຂອງເຂົາຖືກນຳໄປແປພິມຈຳໜ່າຍເປັນພາສາລັດເຊຍ ພາສາຝະລັ່ງ ແລະ ພາສາ ໄທ.

# ພາກຮັງ

ຂະນະທີ່ນາງພອນ ພວມນັ່ງເຊີເຂົ້າໃສ່ຫວດຢູ່ຊານ ນາງ ແນມໄປທາງໂພນກົກຈິກຢູ່ກາງນາ ໄດ້ເຫັນທ້າວຄຳຫລ້າຜູ້ເປັນນ້ອງຊາຍແລ່ນອອກຈາກໂພນກົກຈິກວັບໆຂຶ້ນມາຫາຖຽງນາ, ນາງພອນ ແນມເບິ່ງຄຳຫລ້າຕັ້ງແຕ່ເລີ້ມຕົ້ນແລ່ນອອກໂພນກົກຈິກ ທັງພ້ອງຟາຍເຂົ້າມ່າໃສ່ຫວດໄປນຳເລື້ອຍໆ. ບຶດໜຶ່ງຄຳຫລ້າກໍແລ່ນເຊົ່າວາບໆ ມາຮອດແຄມຊານ ແລ້ວກໍເອີ້ນໃສ່ນາງພອນຜູ້ເປັນເອື້ອຍສຽງສັ່ນ ສຽງເຊັນ

" ເອື້ອຍພອນ...ເອື້ອຍພອນ ເບິ່ງນີ້ແມ ເຮົາໄດ້ໄຂ່ນົກ 3 ໜ່ວຍຢູ່ໃນໂກນກົກຈິກ ມີແຕ່ໜ່ວຍງາມໆ "

ຄຳຫລ້າທັງເວົ້າທັງພ້ອງຍົກໄຂ່ນົກຢູ່ໃນກຳມືຂຶ້ນໃຫ້ນາງພອນ ຜູ້ເປັນເອື້ອຍໄດ້ເຫັນ ເພື່ອຢາກໃຫ້ນາງພອນຍ້ອງຍໍວ່າ ຄຳຫລ້າເປັນລົມເກັ່ງສາມາດຊອກໄດ້ໄຂ່ນົກມາຕ່ອນ.

ນາງພອນ ແລະ ທ້າວຄຳຫລ້າສອງເອື້ອຍນ້ອງ ພວມຮຽນຢູ່ຊັ້ນປະຖົມນຳກັນ ຕ່າງແຕ່ວ່າປີນີ້ ນາງພອນຮຽນຢູ່ຊັ້ນປະຖົມປີທີສີ່ ທ້າວຄຳຫລ້າຮຽນຢູ່ຊັ້ນປະຖົມປີທີສອງ, ເວົ້າແທ້ນາງພອນ ແລະ ທ້າວ

ຄຳຫລ້ານັ້ນ ຖ້າໃຫ້ສົມກັບອາຍຸແທ້ ປີນີ້ນາງພອນ ຄົງຈະຮຽນ ຢູ່ຊັ້ນມັດທະຍົມປີທີສອງ ທ້າວຄຳຫລ້າກໍຮຽນຢູ່ຊັ້ນປະຖົມປີສຸດທ້າຍ. ແຕ່ຍ້ອນວ່າຄອບຄົວຂອງເຂົາພໍ່ຕາຍຕັ້ງແຕ່ຕອນ ທ້າວຄຳຫລ້າອາຍຸ ໄດ້ 5 ປີພຸ້ນ ຈຶ່ງມີແຕ່ປ້າສອນຜູ້ເປັນແມ່ ແລະ ທ້າວບຸນຄ້ຳຜູ້ເປັນອ້າຍກົກ ພາກັນເຮັດນາລ້ຽງເລື້ອຍໆມາ. ເມື່ອຄອບຄົວຂາດພໍ່ຜູ້ເປັນກຳລັງແຮງອັນຕົ້ນຕໍ ຍ່ອມປະສົບກັບຄວາມຂາດເຂີນເປັນທຳມະດາ ຈຶ່ງເຮັດໃຫ້ນາງພອນ ແລະ ທ້າວຄຳຫລ້າໄດ້ເຂົ້າໂຮງຮຽນຊ້າວຊ້າແດ່. ສ່ວນປ້າສອນຜູ້ເປັນແມ່ນັ້ນ ເຖິງຈະເປັນຜູ້ຍິງ ແຕ່ກໍສາມາດ ເຮັດວຽກໄຮ່ການນາ ໄດ້ດີພໍປານຜູ້ຊາຍອີກສາມສອງພຸ້ນແຫລະ.

ທ້າວຄຳຫລ້າຍື່ນໄຂ່ນົກຢູ່ໃນມື ຫວັງຈະໃຫ້ນາງພອນຮັບເອົາໄປເບິ່ງ ແຕ່ນາງພັດຄາຟາຍເຂົ້າໃສ່ຫວດບໍ່ແລ້ວ ຈຶ່ງບໍ່ມີໂອກາດ ຮັບເອົາໄຂ່ນົກນຳຄຳຫລ້າ, ເມື່ອນາງພອນຍົກເອົາຫວດເຂົ້າໄປໃສ່ໝໍ້ໜຶ້ງເຂົ້າຢູ່ເຕົາໄຟໃນເຮືອນຄົວແລ້ວ ກໍຟ້າວລົງຂັ້ນໄດຊານມາ ຫາຄຳຫລ້າ ເຊິ່ງພວມສຳຫລວດເບິ່ງໄຂ່ນົກຢູ່ໃນກຳມື, ນາງພອນ ຈຶ່ງຮ້ອງຂຶ້ນດ້ວຍທ່າທາງຕົກອົກຕົກໃຈ.

" ຕາຍ...ຕ໋າຍ... ໄຂ່ນົກນີ້ຈັ່ງແມ່ນໜ້ອຍງາມໆ ນ້ອງ ໄດ້ໄຂ່ນົກນີ້ມາຈາກໃສ ?"

ທ້າວຄຳຫລ້າ ຈຶ່ງຟ້າວຕອບຄຳຖາມຂອງນາງພອນຜູ້ເປັນເອື້ອຍວ່າ

" ໄດ້ມາຈາກໂກນກົກຈິກ ຢູ່ໂພນກາງນາພັ້ນດາ... ເອື້ອຍພອນເອົາໄປໃສ່ໃນໝໍ້ໜຶ້ງເຂົ້າໃຫ້ນ້ອງແດ່ ນ້ອງຈະເອົາກິນກັບໜຶ້ງເຂົ້າໃໝ່ "

ຄຳຫລ້າທັງເວົ້າທັງສະແດງທ່າທີ ພໍອົກພໍໃຈໃນຄວາມສາ ມາດຂອງເຂົາ ພ້ອມທັງຍື່ນໄຂ່ນົກທັງ 3 ໜ່ວຍໃຫ້ນາງພອນ, ນາງພອນຮັບເອົາໄຂ່ນົກນຳຄຳຫລ້າແລ້ວ ແທນທີ່ຈະຟ້າວເອົາໄປໃສ່ໃນ ໝໍ້ໜຶ້ງເຂົ້າ ເພື່ອໃຫ້ຄຳຫລ້າໄດ້ກິນກັບເຂົ້າໃໝ່ຕາມຄຳສະເໜີ, ແຕ່ນາງພອນຍັງຢືນຢູ່ບ່ອນເກົ່າ ນາງເອົາໄຂ່ນົກທັງ 3 ໜ່ວຍວາງລົງເທິງຝ່າມືຂອງນາງ ແລະ ນາງກົ້ມເບິ່ງໄຂ່ນົກດ້ວຍຄວາມພິນິດພິຈາລະນາຮື່ນຕອງ. ສາຍລົມຍາມເດືອນສິບເອັດພັດຜ່ານມາ ເຮັດ ໃຫ້ເສັ້ນຜົມຂອງນາງຈຳນວນໜຶ່ງປິວລົງມາປົກແສງຕາ ນາງເອົາ ມືເບື້ອງໜຶ່ງປ້າຍຜົມອອກ ພ້ອມທັງເງີຍໜ້າເບິ່ງຄຳຫລ້າຜູ້ເປັນ ນ້ອງນາງຈຶ່ງຖາມຄຳຫລ້າວ່າ

" ຄຳຫລ້າກ້າກິນໄຂ່ນົກຫວະ ?"

ຄຳຫລ້າຟ້າວຕອບນາງພອນແບບບໍ່ຕ້ອງຄິດ ທັງອ້າງອີງ ບ່ອນເຄີຍໄດ້ກິນ ເພື່ອອວດນາງພອນ.

" ກ້າແທ້ເອື້ອຍພອນ ເຮົາກິນມາຫລາຍໜ່ວຍແລ້ວ ກິນນຳລຸງທຳຕົ້ນເດ "

ຄຳຫລ້າທັງຕອບທັງອ້ອນວອນໃຫ້ນາງພອນເອົາໄຂ່ນົກໄປໃສ່ໝໍ້ໜຶ້ງເຂົ້າ.

" ບາບເດີ ! "

ນາງພອນບອກຄຳຫລ້າ, ນາງພອນເຖິງຍັງນ້ອຍກໍຈິງແຕ່ນາງກໍຮູ້ຈັກຄຳວ່າ " ບຸນ-ບາບ " ເພາະນາງພອນເຄີຍໄປວັດນຳ ປ້າສອນຜູ້ເປັນແມ່ຢູ່ເລື້ອຍໆ, ບາງເທື່ອປ້າສອນກໍໃຊ້ໃຫ້ນາງພອນ ໄປສົ່ງຈັງຫັນຈັງເພນແທນ ເພື່ອວ່າຈະໄດ້ເປັນສ່ວນແບ່ງບຸນກຸສົນໄປຫາ

ພໍ່ຜູ້ຕາຍໄປແລ້ວ, ດັ່ງນັ້ນນາງພອນຈຶ່ງມັກໄດ້ຍິນຄູບາຫລືວ່າຊຸມ ຜູ້ເຖົ້າມັກເວົ້າກັນເຖິງເລື່ອງບາບບຸນຄຸນໂທດເລື້ອຍໆ.

" ບາບຄືຈັ່ງໃດທີເອື້ອຍພອນ "

ຄຳຫລ້າເລີ່ມສົນໃຈ ໃນຄຳວ່າບາບ, ນາງພອນຈຶ່ງເວົ້າໃຫ້ຟັງ ຕາມຄວາມເຂົ້າໃຈຂອງນາງ ທີ່ໄດ້ຍິນຄົນມັກເວົ້າວ່າຜູ້ເຮັດບາບ ຂີ້ກາກກິນຫົວນາງຈຶ່ງບອກຄຳຫລ້າວ່າ

" ບາບກໍຂີ້ກາກກິນຫົວໂລດແຫລ້ວ ! "

ໄດ້ຍິນຄຳວ່າຂີ້ກາກກິນຫົວ ເຮັດໃຫ້ຄຳຫລ້າຄິດຊິງລິງຢູ່, ສ່ວນ ນາງພອນເອງກໍເຮັດຊິງລິງຄືກັນ ຄ້າຍກັບວ່າບໍ່ທັນແນ່ໃຈໃນ ຄວາມ ເວົ້າຫວ່າງກີ້ນີ້ເພາະບໍ່ເຫັນຄຳຫລ້າສະແດງທ່າທີຢ້ານກົວຫຍັງຫມົດ, ນາງພອນຈຶ່ງຄິດອອກໄດ້ຄຳເວົ້າອັນໃຫມ່ວ່າ.

" ບາບກໍເສັງໂຮງຮຽນບໍ່ໄດ້ຫັ້ນລະ "

ຕອນນີ້ຄຳຫລ້າມີອາການວອກແວກ ແບບຢ້ານກົວເພາະວ່າຄຳ ຫລ້າ ຮຽນຫນັງສືບໍ່ຄ່ອຍເກັ່ງປານໃດ ຈຶ່ງຟ້າວຖາມນາງພອນວ່າ

" ຄັນຊັ້ນເອົາໄຂນົກໄປໃຫ້ລູງທຳບໍ "

" ແຮ່ງບາບ ແລະ ແຮ່ງເສັງຕົກໄວ "

ຄຳຫລ້າມີທ່າທີກະວົນກະວາຍເປະຍຸ້ມເປະແຍ້ມແບບວ່າບໍ່ຈັກ ຊິເຮັດແນວໃດ, ນາງພອນດຶງແຂນຂອງຄຳຫລ້ານັ່ງລົງຮຽງກັນອ່ອາຍ ຫນ້າໄປທາງກົກຈິກໂພນກາງນາ ແລ້ວນາງພອນເວົ້າຂຶ້ນຊາໆ

" ນ້ອງເອົາຄືນໄປໄວ້ໂກນກົກຈິກຂອງເກົ່າໃຫ້ແມ່ມັນເອງນ້ອງ ເອົາໄຂ່ມາແມ່ມັນກໍຄິດຮອດ... ຟ້າວເອົາໄປສົ່ງຈັກຫນ່ອຍມັນ ຊິເປັນໄຂ່ຮ້ອນຄືກັບໄຂ່ໄກ່ແມ່ດຳຂອງເຮົາໂຕນັ້ນ "

ນາງພອນທັງເວົ້າທັງຊີ້ມືໄປທາງກົກຈິກຢູ່ໂພນກາງນານາງບອກໃຫ້ຄຳຫລ້າເບິ່ງນົກເຄົ້າໂຕໜຶ່ງບິນເຈີດຊ້າຍເຈີດຂວາ ອ້ອມ ປາຍກົກຈິກ, ນົກເຄົ້າໂຕນັ້ນມັນແມ່ນເຈົ້າຂອງໄຂ່ 3 ໜ່ວຍນັ້ນເອງ . ຕາມປົກກະຕິແລ້ວ ນົກເຄົ້າມັນຈະບໍ່ອອກບິນກາງເວັນ ຖ້າບໍ່ມີຄົນໄປລົບກວນມັນ, ນົກເຄົ້າມີແຕ່ອອກຫາກິນຍາມກາງຄືນ ພໍຕາເວັນ ຂຶ້ນນົກເຄົ້າກໍຈະຫລັບນອນ, ແຕ່ຍ້ອນຄຳຫລ້າປີນຂຶ້ນໄປກົກຈິກແລ້ວເອົາໄມ້ໄປແຫ່ຍໂກນກົກຈິກ ຫລື້ນນົກເຄົ້າຈິ່ງຕື່ນ ແລ້ວບິນອອກຈາກ ໂກນໄປ, ຄຳຫລ້າຮູ້ວ່າຢູ່ໃນໂກນມີນົກ ຈິ່ງເອົາມືຈົກເຂົ້າໄປໃນໂກນ ກໍເລີຍໄດ້ໄຂ່ນົກ 3 ໜ່ວຍນີ້ມາ.

ຂະນະທີ່ສອງເອື້ອຍນ້ອງນັ່ງໂສເຫລກັນຢູ່ນັ້ນ ກໍພໍດີປ້າສອນ ຜູ້ເປັນແມ່ ແລະ ທ້າວບຸນຄ້ຳຜູ້ເປັນອ້າຍຂຶ້ນຈາກຂົນເຂົ້າໄປໄວ້ ລານມາພໍ້ ຈິ່ງຟ້າວສໍ້ຖາມລູກທັງສອງ ນາງພອນໄດ້ເລົ່າສູ່ແມ່ ແລະ ອ້າຍຟັງຕັ້ງແຕ່ຕົ້ນມາ ພ້ອມທັງຍື່ນໄຂ່ນົກ 3 ໜ່ວຍໃຫ້ແມ່ເບິ່ງ,ປ້າສອນບໍ່ພຽງແຕ່ບໍ່ຢາກແນມເບິ່ງ ຍັງສະແດງທ່າທາງອ່ອນອົກອ່ອນໃຈໃນຄວາມຊົ່ດື້ຂອງຄຳຫລ້າຕື່ມອີກ ປ້າສອນເວົ້າວ່າ

" ລູກບໍ່ສົມຄວນໄປລັກເອົາໄຂ່ນົກມັນບາບ... ແລະ ລູກ ຍັງນ້ອຍເປັນຫຍັງຈິ່ງກ້າປີນຂຶ້ນໄປເທິງກົກຈິກ ບາດວ່າຈັບບໍ່ໝັ້ນ ຕົກລົງ...ໂອຍ... "

ປ້າສອນຜູ້ເປັນແມ່ເວົ້າບໍ່ສຸດຮອດປະໂຫຍກ ກໍສະແດງຄວາມອິດເມື່ອຍໃນການກະທຳຂອງຄຳຫລ້າ. ເມື່ອຫລາຍຄົນຫຸ້ມເວົ້າຈິ່ງເຮັດໃຫ້ຄຳຫລ້ານ້ຳຕາໄຫລອອກມາຄືກັບວ່າເຂົາພວມຮູ້ສຶກຮັບຜິດ ຕໍ່ການກະທຳຂອງເຂົາໃນເທື່ອນີ້ ຄຳຫລ້າໄດ້ບອກໃຫ້ບຸນຄ້ຳຜູ້ເປັນ ອ້າຍ

ເອົາໄຂ່ນົກຄືນໄປສົ່ງໃຫ້ແມ່ຂອງມັນ ເຊິ່ງປ້າສອນ ແລະ ນາງພອນ ກໍເວົ້ານຳບຸນຄ້ຳຊ່ອຍ ເພາະຢ້ານວ່າຄຳຫລ້າໄປສົ່ງເອງຈະບໍ່ ປອດໄພເວລາຂຶ້ນໄປຫາໂກນກົກຈິກນັ້ນ.

ຄາບເຂົ້າແລງມື້ນັ້ນທັງສີ່ແມ່ລູກ ທັງກິນທັງລົມກັນໄປນຳພ້ອມ , ປ້າສອນໄດ້ເວົ້າຄືນກ່ຽວກັບການກະທຳຂອງຄຳຫລ້າວ່າ ຕໍ່ໄປນີ້ບໍ່ໃຫ້ເຮັດຕື່ມອີກ ມັນເປັນບາບເປັນກຳ ແລະ ຢູ່ນາເຮົາກໍມີນົກເຄົ້າ ໂຕດຽວທີ່ນີ້ທີ່ມາອາໄສນອນຢູ່ໂກນໄມ້ຈິກ ສ່ວນວ່ານົກອື່ນໆກໍມີຫລາຍ ຢູ່ດອກ ແຕ່ຄ່ຳມາບໍ່ຮູ້ວ່າມັນບິນໄປນອນຢູ່ບ່ອນໃດ ຄັນລູກໄປເອົາ ໄຂ່ມັນມາກິນມັນກໍຈະບໍ່ມີນົກເຄົ້າເກີດຂຶ້ນຕື່ມອີກຫລາຍໂຕ, ນົກເຄົ້າ ນີ້ເຖິງເປັນນົກທີ່ຂ່າວຮ້າຍແດ່ໜ້ອຍໜຶ່ງແຕ່ກໍຫາກເປັນນົກມີອິນສີງາມເປັນຕາເບິ່ງ ໂດຍສະເພາະແມ່ນບ່ອນໜ້ານົກເຄົ້ານັ້ນ ເປັນຄືນມົນວົງຕາບັກໃຫ່ຍໆເປັນຕາຢາກຫົວ ແລ້ວທຸກຄືນກໍພາກັນຫົວຂຶ້ນ ກາງຄວາມເວົ້າຂອງປ້າສອນ; ແຕ່ປ້າສອນໄດ້ເວົ້າເນັ້ນໜັກວ່າ

" ນົກເຄົ້າມັນອົ່ນຄອນຍາມເຊົ້າຂອນຊິແຈ້ງນັ້ນ ເປັນຕາຟັງແທ້ໃດ ຄັນນົກເຄົ້າອົ່ນຄອນແລ້ວຄືນກໍລຸກໜຶ້ງເຂົ້າເປົ່າໄຟໂລດ "

ຄຳຫລ້າຟ້າວກືນຄຳເຂົ້າລົງຄໍແລ້ວ ເວົ້າຂັດຈັງຫວະຂອງແມ່ວ່າ

" ນົກເຄົ້າຢູ່ນາເຮົາມັນຄືບໍ່ອົ່ນຄອນຊັ້ນນ່າ "

ປ້າສອນຍັງບໍ່ທັນໄດ້ຕອບ ແຕ່ນາງພອນຄິດຄັນແຂ່ວຕາງຈຶ່ງຕອບແທນແມ່ວ່າ

" ອື່ນລະບີ...ຄືນກ່ອນນີ້ເອື້ອຍກໍໄດ້ຍິນ "

ປ້າສອນກໍເວົ້າຂຶ້ນເປັນການສະໜັບສະໜູນ ຄຳເວົ້າຂອງນາງພອນວ່າ

" ແມ່ນແທ້...ລູກຫລານນອນບໍ່ຮູ້ເມື່ອເຂວຕ່າງຫາກ "

ນັບແຕ່ນັ້ນເປັນຕົ້ນມາ ຄຳຫລ້ານອນກໍພະຍາຍາມໃຫ້ຮູ້ ເມື່ອຕອນຂ້ອນຊິແຈ້ງ ເພື່ອຢາກຟັງສຽງນົກເຄົ້າອື່ນຄອນ, ມີບາງມື້ກໍໄດ້ຍິນບາງມື້ກໍບໍ່ໄດ້ຍິນ ເພາະຄຳຫລ້ານອນບໍ່ຮູ້ເມື່ອຄືຜູ້ອື່ນ.

ເຂົ້າຢູ່ທົ່ງນາຂອງປ້າສອນ ໄດ້ເກັບກ່ຽວຈົນກາຍໃຊ້ໂພນກົກຈິກໄປຫລາຍເຕີບແລ້ວ, ທຸກໆແລງພໍຕາເວັນໃກ້ຈະລັບທິວພູບັນດາພວກເລາະຫາງຕົ້ງບານກໍແບກຕົ້ງບານຫມູ່ 2-3 ຄົນ, ແຕ່ງໃດ ກາຍຜ່ານມາ ປ້າສອນກໍບອກວ່າ ຢ່າມາຫາງຕົ້ງບານຢູ່ນາມື້ ປ້າສອນຍັງຕິວະຕື່ມວ່າ ຢູ່ນາທົ່ງນີ້ບໍ່ມີນົກມີຫນູດອກ.

ເຊົ້າມື້ນັ້ນປ້າສອນພາລູກລຸກເດິກກວ່າທຸກໆມື້ ທີ່ຜ່ານມາ ເພາະຈະໄດ້ພາພວກລູກກ່ຽວເຂົ້າຊຸ້ມສຸດທ້າຍ ທັງເປັນວັນອາທິດ ນາງພອນ ແລະ ຄຳຫລ້າກໍພັກໂຮງຮຽນ, ເຊົ້າມື້ນີ້ທຸກຄົນຮູ້ສຶກຜິດປົກກະຕິ ເພາະລຸກເດິກປານນີ້ກໍຍັງບໍ່ໄດ້ຍິນສຽງນົກເຄົ້າອື່ນຄອນ, ແຕ່ລະຄົນກໍເຂົ້າໃຈໄປຄົນລະຢ່າງ ແລ້ວກໍໂສເຫລັກັນໄປຕາມຄວາມ ເຂົ້າໃຈໃຜມັນ ປ້າສອນເວົ້າວ່ານົກເຄົ້າອາດຈະຝັກໄຂ່ຕີບໍ່ຈົ່ງບໍ່ອື່ນຄອນ, ນາງພອນວ່ານົກເຄົ້າອາດຖືກແຫລວຊູດເອົາໄປ, ທ້າວບຸນຄ້ຳ ເວົ້າແບບຫມາກນາວບໍ່ມີນ້ຳວ່າ ມັນຂີ້ຄ້ານອື່ນຄອນເພາະອື່ນທຸກມື້ ໂພດ ສ່ວນທ້າວຄຳຫລ້າເວົ້າຕາມປະສາຄວາມເຂົ້າໃຈແບບເດັກນ້ອຍ ວ່ານົກເຄົ້າໄປຫາກິນໄກມາບໍ່ທັນອື່ນຄອນ.

ພໍແຕ່ແສງຕາເວັນພົ້ນອອກຈາກຂອບຟ້າ ທ້າວຄຳຫລ້າກໍ ວາງກ່ຽວໄວ້ຜ່ອນເຂົ້າ ຟ້າວແລ່ນວັບໆໄປໂພນກົກຈິກກ່ອນຫມູ່ ເພື່ອຢາກຮູ້ວ່າ ນົກເຄົ້າເປັນຫຍັງບໍ່ອື່ນຄອນຕອນຂ້ອນຊິແຈ້ງນີ້, ທ້າວຄຳຫລ້າ

ແລ່ນໄປຮອດຕີນໂພນກົກຈິກກໍຢຸດຈິກກັບບາດ ເພາະເຫັນວ່າຂາວ ໆ ໂພນກົກຈິກມີເດື່ນນ້ອຍໆແປນໆກົ່ຽວຮາບ ແລະ ແນມເຫັນອົນ ນົກເຄົ້າຊະຢູ່ຫລາຍສິບອົນ, ຄຳຫລ້າຢືນພິຈາລະນາເຫິງເຕີບ ຈຶ່ງ ກົ້ມເກັບເອົາອົນນົກເຄົ້າຈຳນວນໜຶ່ງແລ່ນຄືນມາຫາແມ່, ອ້າຍ ແລະ ເອື້ອຍ ເຊິ່ງພວມກ່ຽວເຂົ້າຢູ່. ຄຳຫລ້າແລ່ນມາຮອດໃກ້ໆກໍຍົກ ອົນນົກໃຫ້ທຸກຄົນເບິ່ງ ພ້ອມທັງເວົ້າສຽງສັ່ນສຽງເຊັນ

" ເຂົາຫ້າງຕັ້ງບານເອົານົກເຄົ້າໄປແລ້ວ !"

ປ້າສອນ, ທ້າວບຸນຄ້ຳ ແລະ ນາງພອນພາກັນຕົກສະເງີ້ຕໍ່ ຄຳບອກກ່າວຂອງຄຳຫລ້າ, ທຸກໆຄົນຟ້າວຍ່າງມາຫາຄຳຫລ້າ ດ້ວຍຄວາມກັງວົນສົນໃຈ ເມື່ອຍ່າງມາຮອດຄຳຫລ້າ ຈຶ່ງຍື່ນອົນນົກ ເຄົ້າໃຫ້ປ້າສອນ, ປ້າສອນຈັບເອົາອົນນົກເຄົ້າຈາກມືຂອງຄຳຫລ້າຍົກຂຶ້ນເບິ່ງອີກເທື່ອໜຶ່ງ ເພື່ອຄວາມແນ່ໃຈວ່າ ແມ່ນອົນນົກເຄົ້າແທ້ບໍ ປ້າສອນຫລິ່ງຮອງຂຶ້ນໜັກແຮງວ່າ

" ຕາຍແລ້ວ...ແມ່ນນົກເຄົ້າຢູ່ໂກນກົກຈິກເຮົາແທ້ໆ" ຈາກນັ້ນ ທ້າວບຸນຄ້ຳ ແລະ ນາງພອນກໍພາກັນຍາດເບິ່ງທັງພ່ອງເວົ້າກັນວ່າ ຊຳພໍ່ບໍ່ໄດ້ຍິນສຽງມັນອື່ນຄອນ ຕອນຂ້ອນແຈ້ງມື້ນີ້, ທຸກຄົນຕ່າງກໍສະແດງຄວາມຄິດຄວາມເຫັນໄປຄົນລະຢ່າງຕາມແຕ່ຄວາມເຂົ້າໃຈເຊິ່ງສະຫລຸບແລ້ວທຸກຄົນເຂົ້າໃຈວ່າ ຕ້ອງແມ່ນພວກເລາະຫ້າງ ຕັ້ງບານໄປໆມາໆຢູ່ແຖວລຽບນາມື້ແຫລະລັກມາຫ້າງເອົານົກເຄົ້າໄປກິນ

ຖຽງນາຂອງລຸງທຳກັບຖຽງນາຂອງປ້າສອນ ຢູ່ຫ່າງກັນຄົນ ລະຟາກດອນນ້ອຍຫົວນາ, ຕອນທ່ຽງມື້ນັ້ນໄດ້ຍິນສຽງຟັກລາບຢູ່ຖຽງລຸງທຳ, ປ້າສອນຈຶ່ງໃຊ້ໃຫ້ຄຳຫລ້າໄປສ້ວງຊອມເບິ່ງຍ້ານວ່າລຸງທຳ ຈະ

ມາລັກຫ້າງຕັ້ງບານເອົານົກເຄົ້າໄປກິນ, ລຸງທຳກໍແມ່ນໜຶ່ງໃນ ບັນດາພວກເລາະຫ້າງຕັ້ງບານເອົານົກ ຍາມກາງຄືນລຸງທຳເຮັດ ຕັ້ງບານຫ້າງເອົານົກມານັ້ນບໍ່ໄດ້ຫລາຍສິບປີມາແລ້ວ ແຕ່ລະປີນົກຖືກຕັ້ງບານຂອງລຸງທຳນັບເປັນຮ້ອຍໂຕ; ເມື່ອປ້າສອນໃຊ້ໃຫ້ໄປລ້ຽງ ຊອມເບິ່ງຄຳຫລ້າກໍລີ້ງຖຽງນາແລ່ນຂ້າມດອນໄປໂລດ ພໍໄປຮອດຖຽງລຸງທຳກໍໄດ້ເຫັນນາງສີ ລູກສາວຂອງລຸງທຳນັ່ງຟັກລາບຢູ່ຊານ, ຄຳຫລ້າແນມເບິ່ງຮອບໆຊານ ເຫັນຂົນນົກເຄົ້າຊະຢູ່ ຄຳຫລ້າຈິ່ງຍ່າງ ເຂົ້າໄປຈັບເອົາໄດ້ 2-3 ຂົນຟ້າວແລ່ນກັບຄືນມາໃຫ້ແມ່ເບິ່ງ, ທຸກ ຄົນໄດ້ແຕ່ສະແດງຄວາມຫ່ວງໄຍ ແລະ ອຶດູສົງສານນົກເຄົ້າໂຕນັ້ນ.

ນັບແຕ່ນັ້ນເປັນຕົ້ນມາ ທຸກໆເຊົ້າທົ່ງນາຂອງປ້າສອນກໍບໍ່ມີ ສຽງນົກເຄົ້າອື່ນຄອນອີກ, ໄຂ່ຂອງມັນເມື່ອບໍ່ມີແມ່ເຝົ້າຮັກສາກໍກາຍເປັນໄຂ່ເນົ່າໄຂ່ຮ່ວນຖືມໝົດ, ທົ່ງນາຂອງປ້າສອນ ເມື່ອກ່ຽວເຂົ້າອອກໝົດແລ້ວກໍຍັງເຫລືອແຕ່ຕໍເຟືອງ ພໍໃຫ້ນົກກະຈິບເຟືອງບິນຈັບ ເຕັ້ນຢອກລີ້ກັນໄປມາ, ຂ້ອນແຈ້ງແຕ່ລະຄືນກໍຈະມີແຕ່ສາຍລົມລ່ອງ ຍາມເດືອນ 11 ຕໍ່ 12 ພັດຜ່ານກາຍໄປດ້ວຍບັນຍາກາດອັນເຢັນ ຊອຍວອຍ, ດົນໆໄດ້ຍິນສຽງຢາດນ້ຳຄ້າງຢອດລົງຈາກສາຍຄາດັງ ປ໊ອກແປັກໆ ແທນສຽງອື່ນຄອນຂອງນົກເຄົ້າ

. / .

# ຫອມກິ່ນເຂົ້າໜຽວ

* ຫອມເດຫອມແຊກຊອນ ຊຶມແຊກຊວງຈິດ
ຫອມຕິດອົກຕິດໃຈ ກິ່ນຫອມຊວນຊື້ງ
ຫອມເປັນພິງເປັນສາວ ຄາວໃດກໍຫອມອ່ອນ
ຫອມສະອອນຢາກພໍ້ ພໍໃຫ້ສວ່າງວອນ

* ໂອນໍ ! ວ່າແມ່ນຫອມດອກຊ້ອນ ຊອນກິ່ນອິນທະຫວາ
ກະດັນງາ ກິດສະໜາ ສິ່ງມາຍາມລົມຕ້ອງ
ແຕ່ບໍ່ຖອງເຖິງໄດ້ ຫອມໃດກໍບໍ່ແມ່ນ
ແສນສ່ຳຫອມດອກໄມ້ ໃນດ້າວກໍບໍ່ປານ

* ຫົວໃຈຣຽມສະທ້ານ ຍາມຫອມຜ່ານຊວງອົກ
ຢາກຍົກເອົາອາຍຫອມ ຫອບລົງໃນທ້ອງ
ສອງຕາມອງແລສົ້ງ ຫລິງຫາເຄົ້າເງື່ອນ
ຫອມໃດເດມາສະເທືອນບໍ່ແລ້ວ ເປັນແປ້ວຢູ່ຫວ່າງໃຈ

* ຫລຽວລ່ຳເໜືອແລະ ໃຕ້ ຊອກກິ່ນທາງມາ
ແຕ່ບໍ່ສະລືມໃຈ ເຈຕະນາຣຽມຕັ້ງ
ກິ່ນຫຍັງຫວະຫອມແທ້ ແລ ໃສກໍບໍ່ເກີງ

ຫອມເລີງໆທຸກມື້ ຄືຊິເຖົ້າແກ່ບໍ່ເປັນ

* ສຸດທີ່ຮຽມເລືອກເຟັ້ນ ມວນຫມູ່ດວງຫອມ

ກໍບໍ່ຊອມເຊິງເຫັນ ກິ່ນໃດຫອມພົ້ນ

ຫອມອິນ ໆ ວຽນກ້ຽວ ໃນເຮືອນຮຽງນໍ່

ຫອມມາພື້ນງມ້ອຍ ຫອມຄ້ອຍຄິດບໍ່ເຊົາ

* ໂອນໍ ! ມັນແມ່ນຫອມກິ່ນເຂົ້າ ຫນຽວອ່ອນຊວນກິນ ນີ້ເດ

ຫອມຖະຫວິນດວງໃຈ ບໍ່ເລີກລ່າລືມໄດ້

ຫອມໃດຈະເຖິງເຫົ້າ ຊິເອົາມາທຽມຖ່ອງ ບໍ່ມີແລ້ວ

ຫອມຢູ່ຄອງຄູ້ຂາງ ລາວເຊື້ອຊາດຕະກຸນ ເຈົ້າເອີຍ

. / .

# ໂຮງລະຄອນໃຫຍ່

* ໂລກນີ້ທ່ານປຽບໄວ້
ມີຫລາຍຕອນຊີວິດ
ບາງເທື່ອໂສກາເສົ້າ
ພ້ອມພ່ຳສຽງສະອື້ນ
* ບາງເທື່ອສາກແອ່ວຫລິ້ນ
ຍິນແຕ່ສຽງດົນຕີ
ເຕັມແຕ່ແວວຮອຍຍິ້ມ
ສຽງຫົວແກມຢອກເຍີ້ຍ
* ຂໍໃຫ້ທຸກທ່ານໄດ້
ບົດສະແດງເທິງເວທີ
ໃຫ້ມີສີໂສມໜ້າ
ຢ່າໃຫ້ມັນສາບເສົ້າ

ດ້ານດັ່ງໂຮງລະຄອນ
ສາກລະຄອນນຳອ້າງ
ເຫງົາລະທົມຂົມຂື່ນ
ເຮ ໄຫ້ຮ່ຳຫາ
ເທິງໂຮງໃຫຍ່ລະຄອນຄືນ
ປີ່ຊໍຊຸງແກ້ວ
ເຈື້ອຈານໄປທົ່ວ
ເພີຍໄວ້ວາດລະໄມ
ເອົາໃຈໃສ່ປ້ອແປງ
ສາກລະຄອນຄືນນີ້
ໂສພາພິມພາບ
ລະຄອນເຈົ້າວາດສະແດງ
ທ່ານເອີຍ

. / .

# ຮູບຖ່າຍ

ມັນແມ່ນຮູບຖ່າຍແຜ່ນດຽວເທົ່ານີ້ ທີ່ວິລະ ສັກ ໄດ້ຖືຕິດມືມາ ນຳ ມັນແມ່ນຮູບສີທີ່ສວຍງາມ ເບິ່ງແລ້ວເຢັນຕາສະບາຍໃຈ, ຮູບ ຖ່າຍ ແຜ່ນນີ້ເຖິງຈະເປັນຮູບຖ່າຍຂະໜາດພຽງແຕ່ 13×19 ກໍຈິງແຕ່ ສີ ລະປະໃນການຖ່າຍກໍຄືມຈັດດີ, ວິລະສັກ ໄດ້ຊື້ຮູບຖ່າຍແຜ່ນນີ້ມາຈາກ ຮ້ານຖ່າຍຮູບແຫ່ງໜຶ່ງ ໃນນະຄອນຫລວງວຽງຈັນ ເມື່ອເກືອບ 20 ປີມາແລ້ວ. ດຽວນີ້ວິລະສັກ ໄດ້ຈ້າງຊ່າງຕັດແວ່ນໃສ່ເອົາໄວ້ ຂອບ ແວ່ນກໍມີສີລະປະລວດລາຍກົມກືນກັບຮູບແຜ່ນນີ້ຢ່າງສົມສ່ວນ ເສຍແຕ່ ວ່າຂອບແວ່ນນັ້ນບໍ່ແມ່ນລາຍດອກບົວເຄືອ ຫລືວ່າລາຍດອກຜັກແວ່ນ.

ວິລະສັກເອົາຮູບຖ່າຍແຜ່ນນີ້ແຂວນ ໄວ້ຝາຫ້ອງຮັບແຂກຢູ່ເຊິ່ງກັບ ຊຸດຮັບແຂກ, ເວລາແຂກຄົນເຂົ້າ ໄປໃນຫ້ອງຮັບແຂກນັ່ງລົງຕັ່ງ ຮັບ ແຂກໜ່ວຍໃດໜ່ວຍໜຶ່ງແລ້ວ ພາບທີ່ສະດຸດສາຍຕາຂອງແຂກທຸກໆ ຄົນນັ້ນ ແມ່ນຮູບຖ່າຍແຜ່ນນີ້, ຜູ້ໃດ ໄດ້ເຫັນກໍອອກປາກຊົມເຊີຍ ວ່າ ງາມໆ.

" ຂ້ອຍມັກຮູບແຜ່ນນີ້ຫລາຍໆ "

ໜໍ່ " ຈິມ " ຫລືເອີ້ນຕາມພາສາອັງກິດກໍວ່າ "ມິດສະເຕີຈິມ"

ອອກປາກຊົມເຊີຍຮູບແຜ່ນນີ້ເປັນພາສາອັງກິດ ເຮັດໃຫ້ວິລະສັກເຈົ້າຂອງຮູບແຜ່ນນີ້ຍິ້ມນ້ອຍຍິ້ມໃຫຍ່ ແລະ ພາກພູມໃຈໃນຄຸນຄ່າຂອງຮູບຫລາຍຂຶ້ນ ທັງຄຶດຊົມເຊີຍໝໍຈີມຢູ່ໃນໃຈວ່າ

" ໝໍຈີມນີ້ ກໍບໍ່ແມ່ນຄົນສາຍຕາທຳມະດາດອກເດີ "ຝ່າຍ ໝໍຈີມ ເຫັນວິລະສັກຍິ້ມນ້ອຍຍິ້ມໃຫຍ່ ຈຶ່ງເສີມຄຳເວົ້າຂຶ້ນຕື່ມວ່າ

" ເຖິງຂ້ອຍບໍ່ໄດ້ເຄີຍໄປເຫັນຕົວຈິງກໍຕາມ ເມື່ອເບິ່ງຮູບຖ່າຍແຜ່ນນີ້ ຂ້ອຍກໍຍອມຮັບວ່າ ຜູ້ຖ່າຍເຂົາມີຄວາມສາມາດສູງ ສາມາດຊອກຈັບສາກມູມໄດ້ດີຫລາຍ "

ໝໍຈີມ ເຖິງຈະເປັນພຽງນັກຖ່າຍຮູບສະມັກຫລິ້ນກໍຈິງແຕ່ສີ ມືຂອງໝໍກໍພໍໄປວັດໄປວານຳໝູ່ໄດ້, ໝໍຈີມສາມາດວິໄຈສາກມູມຫລືສີລະປະການຖ່າຍຮູບໄດ້ ບໍ່ດ້ອຍໜ້ານັກຖ່າຍຮູບສີມືອາຊີບເລີຍ.

" ຖ້າເຈົ້າເອົາຮູບແຜ່ນນີ້ໄປຂາຍຈະໄດ້ລາຄາດີ "

ໝໍຈີມ ເວົ້າຢໍ້າຕື່ມແບບຫາທາງອອກຊ່ອຍວິລະສັກ ເຊິ່ງໝໍຈີມຮູ້ ແລະ ເຂົ້າໃຈສະພາບຄອບຄົວຂອງວິລະສັກໄດ້ດີ, ຄວາມຈິງແລ້ວລະຫວ່າງວິລະສັກ ຫລືວ່າຄອບຄົວຂອງວິລະສັກ ກັບໝໍຈີມຈະຮູ້ ຈັກກັນບໍ່ພໍ 4-5 ປີກໍຕາມ ແຕ່ທັງສອງກໍສະນິດສະໜົມກັນເຂົ້າໃຈກັນດີ. ໝໍຈີມທັງເວົ້າທັງລຸກຍ່າງໄປເບິ່ງຮູບແຜ່ນນັ້ນ ເທື່ອນີ້ມັນບໍ່ແມ່ນເທື່ອທຳອິດທີ່ໝໍຈີມໄດ້ເຫັນຮູບແຜ່ນນີ້, ແຕ່ມື້ນີ້ໝໍຈີມໄດ້ມີໂອກາດນັ່ງລົມກັບວິລະສັກສະເພາະຮູບແຜ່ນນີ້ ໂດຍສະເພາະ ດັ່ງນັ້ນໝໍຈີມຈຶ່ງໄດ້ວິເຄາະໃຈ້ແຍກທຸກໆຕະລາງນີ້ວຂອງສາກມູມ ແລະ ສີລະປະ ຂອງການຖ່າຍ.

" ຂ້ອຍບໍ່ຂາຍ ລາຄາເທົ່າໃດກໍຂາຍບໍ່ໄດ້ຈະເອົາໄວ້ເບິ່ງເປັນ

ອະນຸສອນໃນຊີວິດ "

ວິລະສັກຕອບ ເຮັດໃຫ້ໜໍຈິມຍິ້ມແຕ້ງແບບເຂີນໆວາດໃດວາດໜຶ່ງ ພ້ອມທັງເອົາມືຕົບບ່າຂອງວິລະສັກຄ່ອຍໆ ແລ້ວເວົ້າວ່າ

" ເຈົ້າເປັນຄົນມີອຸດົມຄະຕິໃນຊີວິດ ເປັນນັກສະຫງວນ ຄວາມງາມ ແລະ ຮູ້ອະນຸລັກຂອງເກົ່າແກ່ບູຮານດີຫລາຍ "

ເວົ້າສຸດ ໜໍຈິມກໍແນມໄປເບິ່ງຮູບແຜ່ນນັ້ນອີກ, ວິລະສັກລັກສັງເກດເບິ່ງ ປະກົດວ່າໜໍຈິມຕັ້ງອົກຕັ້ງໃຈເບິ່ງຮູບນັ້ນ ຢ່າງພິນິດພິຈາລະນາລະອຽດລະອໍ, ບາງເທື່ອກໍເຫັນໜໍຈິມຕອດຫົວຫງຶກໆສະແດງວ່າໜໍເຂົ້າໃຈ ແລະ ພໍໃຈຫລາຍ, ກ່ອນທີ່ໜໍຈິມຈະຈັບມືອຳລາ ວິລະສັກໄປ ໜໍຍັງເວົ້າຖິ້ມທ້າຍເອົາໄວ້ວ່າ

" ຖ້າມື້ໃດເຈົ້າຫາກຄິດປ່ຽນໃຈ ຢາກຈະຂາຍບອກໃຫ້ຂ້ອຍ ຮູ້ນຳແດ່ເດີ "

ພາຍຫລັງທີ່ໜໍຈິມອອກຈາກເຮືອນໄປແລ້ວ ວິລະສັກໄດ້ ແນມເບິ່ງຮູບຖ່າຍແຜ່ນນັ້ນອີກເທື່ອໜຶ່ງ ກ່ອນທີ່ຈະອອກຈາກເຮືອນ ໄປເຮັດວຽກ, ທຸກໆມື້ຖ້າວິລະສັກໄດ້ແນມເບິ່ງຮູບແຜ່ນນັ້ນ ເຂົາຮູ້ສຶກໂລ່ງອົກໂລ່ງໃຈ ມັນຊ່າງມີຄວາມສຸກ ໃນຊີວິດສ່ວນຕົວຂອງເຂົາແທ້ໆ.

ຄອບຄົວຂອງວິລະສັກ ມີນຳກັນບໍ່ຫລາຍພໍປານໃດ ຄືເມັຍກັບລູກສອງຄົນ ລູກຜູ້ກົກເປັນຜູ້ຊາຍ ຜູ້ທີສອງເປັນຜູ້ຍິງ ອາຍຸຫາກໍ 2ປີປາຍ, ພຽງແຕ່ 4 ຊີວິດນຳກັນສຳນີ້ ພາລະຮັບຜິດຊອບກໍໜັກໜາເກືອບຈະລົ້ມທາງຢືນຢູ່ແລ້ວ ເຮືອນເຊົ່າເຂົ້າຊໍ້ ຄ່ານ້ຳຄ່າໄຟ ຄ່າເຊົ່າອຸປະກອນໃຊ້ສອຍຕ່າງໆມາຮັບໃຊ້ພາຍໃນຄອບຄົວ, ບາງເທື່ອ

ເກີດເຈັບເປັນເອັນຮ້ອນຂຶ້ນມາກໍຕ້ອງໄດ້ເສຍຄ່າຫວ້ານຢາຄ່າອື່ນ ໆ ອີກສາລະພັດ.

ຄວາມສຸກນອກບ້ານນອກເຮືອນຂອງຄອບຄົວວິລະສັກນັ້ນ ເດືອນໜຶ່ງຈະພາເມຍ ແລະ ລູກໄປທ່ຽວເພີດເພີນຈະເລີນຕາຈະເລີນໃຈຕາມຮ້ານອາຫານ ຫລືໃນຄຣັບໃຫ່ຍໆ ນັ່ງຟັງເພງສູບຢາກິນເຫລົ້າຍີ່ຫໍ້ດີໆ ສັ່ງກິນອາຫານຕາມທີ່ຄວາມຫິວໂຫຍຮຽກຮ້ອງຕ້ອງການນັ້ນມັນຍາກໜັກຍາກໜາທີ່ຈະໄດ້ພົບພໍ້ໂອກາດເຊັ່ນນີ້.

ທຸກໆມື້ຫລັງຈາກເຮັດວຽກໜັກມາແລ້ວ, ຄວາມສຸກຢູ່ພາຍ ໃນຄອບຄົວຂອງວິລະສັກກໍຈະຢູ່ໃນວົງອ້ອມຂອງຝາ 4 ດ້ານພາຍ ໃນຫ້ອງຮັບແຂກ ເພື່ອເບິ່ງລາຍການໂທລະທັດ ເປັນການແກ້ເຫງົາ , ໂທລະທັດໜ່ວຍນີ້ ເຖິງຈະເປັນໂທລະທັດສີກໍຈິງ ແຕ່ອາຍຸສັງ ຂານຂອງມັນບໍ່ຮູ້ວ່າດົນນານປານໃດ ແລະ ຜ່ານຜູ້ຊົມໃຊ້ມາແລ້ວຈັກຄົນກໍບໍ່ຮູ້ ເພາະວິລະສັກໄດ້ຊື້ມັນມາຈາກຮ້ານຂາຍເຄື່ອງເລ ຫລັງແຫ່ງໜຶ່ງ, ເຖິງແມ່ນມັນຈະເກົ່າແກ່ດົນນານແນວໃດ ກໍຕາມມັນຍັງແມ່ນຂອງໃໝ່ສຳລັບວິລະສັກ ຜູ້ມີລາຍໄດ້ໜ້ອຍ ຫລືວ່າເກືອບບໍ່ມີເລີຍ!

ແລງມື້ນີ້ ກໍຄືກັບທຸກໆແລງຜ່ານມາ, ວິລະສັກ ແລະ ສະມາຊິກໃນຄອບຄົວຂອງເຂົາກໍຈະພາກັນວົນວຽນຢູ່ແຕ່ພາຍໃນຫ້ອງຮັບ ແຂກອັນແຄບໆນີ້ ເພື່ອເບິ່ງລາຍການທາງໂທລະທັດ ເຖິງແມ່ນການ ຟັງສຽງເວົ້າຢູ່ໃນຈໍໂທລະທັດນັ້ນ ສ່ວນຫລາຍຈະເປັນການເດົາ ຫລາຍກວ່າການເຂົ້າໃຈແຈ່ມແຈ້ງກໍດີ ແຕ່ກໍຕ້ອງໄດ້ເບິ່ງ ເພາະບໍ່ມີ ທາງເລືອກ. ຂະນະທີ່ພວມພາກັນນັ່ງເບິ່ງລາຍການຈາກໂທລະທັດຢູ່ ນັ້ນສຽງສັນຍານຈາກກະດິງທາງປະຕູໜ້າບ້ານກໍດັງຂຶ້ນ, ວິລະສັກ ລຸກ

ຍ່າງໄປໄຂປະຕູເຮືອນ ຍົກຄໍສ່ອງເບິ່ງ ກໍພໍດີກັບຊາຍຄົນໜຶ່ງ ຢູ່ໃນຊຸດແຕ່ງກາຍຂອງພະນັກງານໄປສະນີຍ່າງເຂົ້າມາ.

" ສະບາຍດີ "

ວິລະສັກທັກທາຍຕໍ່ອາຄັນຕຸກະຜູ້ມາຫາ ຕາມມາລະຍາດ ແລະເຂົາກໍສະບາຍດີ ວິລະສັກຄືນ ພ້ອມທັງຍື່ນຊອງຈົດໝາຍໃຫ້, ວິລະສັກ ຮັບເອົາຊອງຈົດໝາຍ ພ້ອມທັງຢິບເງິນຄ່າລ່ວງເວລາໃຫ້ເຂົາຕາມມາລະຍາດທົ່ວໄປທີ່ຕ້ອງປະຕິບັດຕໍ່ຜູ້ໃຫ້ຄວາມສະດວກ, ຈາກນັ້ນບຸລຸດໄປສະນີກໍຈັບມືອຳລາພ້ອມທັງກ່າວຂອບໃຈວິລະສັກ.

ຫລັງຈາກບຸລຸດໄປສະນີກັບໄປແລ້ວ ວິລະສັກກໍຖືຈົດໝາຍ ຍ່າງກັບເຂົ້າຫ້ອງຮັບແຂກ, ມັນບໍ່ແມ່ນຈົດໝາຍສະບັບທຳອິດທີ່ວິລະສັກໄດ້ຮັບ ນັບຕັ້ງແຕ່ມາຢູ່ອາເມລິກາ, ດັ່ງນັ້ນບົວແກ້ວຜູ້ເປັນເມຍ ຈຶ່ງບໍ່ຄ່ອຍຈະຕື່ນເຕັ້ນກັບຈົດໝາຍພໍປານໃດ. ວິລະສັກຄ່ອຍໆນັ່ງລົງຕັ່ງຮັບແຂກແລ້ວຈີກຊອງເອົາຈົດໝາຍອອກມາອ່ານ, ຂໍ້ຄວາມຢູ່ໃນຈົດໝາຍນັ້ນຍືດຍາວ ທຳອິດແມ່ໄດ້ຖາມຂ່າວຄາວພວກລູກ ແລະຫລານທັງເວົ້າວ່າດີໃຈຫລາຍໄດ້ຮັບຮູບຖ່າຍຂອງຄອບຄົວວິລະສັກຝາກໄປໃຫ້ເບິ່ງ, ໄດ້ເຫັນຮູບວິລະສັກຢືນອີງລົດເກົ໋ງຄັນງາມ ເບື້ອງ ຫລັງຂອງລົດເກົ໋ງມີຕຶກຫລັງໃຫມ່ທີ່ຈົບງາມຕັ້ງເຈັ້ນເຫັ້ນຢູ່, ເຖິງແມ່ນ ວິລະສັກຈະບໍ່ໄດ້ບອກວ່າລົດເກົ໋ງ ແລະ ຕຶກຫລັງນັ້ນມີສ່ວນກ່ຽວ ຂ້ອງກັບເຂົາແນວໃດກໍຕາມ ແຕ່ຜູ້ເປັນແມ່ກໍຄິດເດົາເອົາວ່າ ມັນ ແມ່ນຂອງສ່ວນໂຕຂອງວິລະສັກ ຍ່າງຂີ້ຮ້າຍກໍລົດເກົ໋ງຄັນນັ້ນ ເປັນຂອງວິລະສັກບໍ່ມີຜິດ; ວັກຕໍ່ມາແມ່ໄດ້ຂໍໃຫ້ວິລະສັກຝາກເງິນໄປໃຫ້ ດ່ວນເພາະມີວຽກສຳຄັນຢູ່ທາງບ້ານພຸ້ນ.

ວິລະສັກທາກໍອ່ານມາຮອດວັກຫຍໍ້ໜ້ານີ້ ແຕ່ເນື້ອໃນຂອງ ຈົດໝາຍຍັງອີກຕັ້ງຫຼາຍຍາວຽ ກໍພໍດີບົວແກ້ວຜູ້ເປັນເມຍຖາມລັດ - ກາງ ເດີ່ງ.

" ແມ່ບອກໃຫ້ຝາກເງິນ ຫລືບໍ ? "

" ໃຫ້ຝາກແທ້... ແຕ່ຈະເອົາເງິນໃສ ເພິ່ນບອກໃຫ້ ຝາກດ່ວນຊໍ້າມາ "

ວິລະສັກ ບອກບົວແກ້ວຜູ້ເປັນເມຍດ້ວຍຄວາມອ່ອນໃຈ, ວິລະສັກຄິດວ່າບາງທີແມ່ອາດເຂົ້າໃຈ ເຂົາຜິດເພາະຮູບຖ່າຍແຜ່ນທີ່ຝາກໄປໃຫ້ເບິ່ງນັ້ນ, ແມ່ອາດຈະຄິດວ່າເຂົາມີຊີວິດການເປັນຢູ່ຢ່າງອຸດົມສົມບູນ ເຊິ່ງຄວາມຈິງແລ້ວເກືອບຈະເອົາຊີວິດບໍ່ລອດ; ຮູບທີ່ ຝາກເມືອໃຫ້ແມ່ເບິ່ງນັ້ນ ເຂົາໄດ້ຢືມລົດຂອງໝູ່ພາຄອບຄົວ ໄປທ່ຽວແລ້ວຖ່າຍຕິດກັບຕຶກຫລັງໜຶ່ງຢູ່ເຂດແຄມເມືອງແຫ່ງໜຶ່ງ ທີ່ເຂົາ ອາໃສຢູ່ໃນສະຫະລັດອາເມລິກາ ວິລະສັກພວມຈະເລີ່ມອ່ານຕໍ່ ກໍພໍດີ ບົວແກ້ວຊອນລົມຕື່ມ ບົວແກ້ວ ໄດ້ເວົ້າກັບວິລະສັກວ່າ

" ນີ້ກ່ອນຄືວ່າທ່ານຈິມເວົ້ານໍາອ້າຍວ່າຢາກຊື້ຮູບແຜ່ນນັ້ນ "

ບົວແກ້ວຫາທາງອອກຊ່ອຍວິລະສັກ ພ້ອມທັງຊີ້ມືໄປໃສ່ຮູບ ຖ່າຍແຜ່ນຢູ່ໃນຂອບແວ່ນແຂວນໄວ້ຝາຂອງຫ້ອງຮັບແຂກ, ວິລະສັກ ຟ້າວຕອບບົວແກ້ວວ່າ

" ບໍ່ໄດ້...ບໍ່ໄດ້ແທ້ງ ອ້າຍຈະບໍ່ຍອມຂາຍເດັດຂາດເພາະຮູບແຜ່ນນີ້ມັນມີຄຸນຄ່າມະຫາສານ ສໍາລັບອ້າຍ ແລະ ທຸກໆຄົນໃນ ຄອບຄົວ ອ້າຍຈະຮັກສາເອົາໄວ້ "

ກ່ອນທີ່ວິລະສັກຈະເລີ່ມອ່ານຈົດໝາຍວັກຫຍໍ້ໜ້າຕໍ່ໄປ ເຂົາຍັງ

ແນນໄປເບິ່ງຮູບຖ່າຍແຜ່ນນັ້ນຕື່ມອີກ ດ້ວຍຄວາມຖະໜອມຮັກ ແລະ ເທີດທູນບູຊາ ໃນຫ້ວງຈິດສຳນຶກຂອງເຂົາ, ເນື້ອຄວາມຢູ່ໃນ ຈົດໝາຍນັບແຕ່ແຖວທີ່ຫ້າຂອງໜ້າວັກທີສອງ ມີໃຈຄວາມວ່າ:

ປີນີ້ເປັນປີທີ 15 ແລ້ວ ນັບແຕ່ປະເທດຊາດຂອງເຮົາໄດ້ ຮັບການປົດປ່ອຍ ແລ້ວສ້າງຕັ້ງລະບອບໃໝ່ຂຶ້ນແທນ, ມັນແມ່ນປີທີ 13 ທີ່ລູກ ແລະ ຄອບຄົວໄດ້ໜີຈາກພໍ່ແມ່ ແລະ ບ້ານເກີດເມືອງ ນອນມາ, ງານບຸນພະທາດຫລວງປີນີ້ ມ່ວນເປັນພິເສດ ເພາະມີ ຫລາຍຄືນ ແລະ ພິທີກັບຄົບຮອບ 15 ປີຂອງການສ້າງຕັ້ງລະບອບໃໝ່ , ໃນງານບຸນມີຄົນໄປຫລີ້ນໄປທ່ຽວຈົນແໜ້ນເຕີ່ນ ພະທາດຫລວງຜູ້ໄປທ່ຽວໃນງານໃຜໆກໍພາກັນຫຸ້ມຊໍ່ດອກໄມ້ທູບທຽນ ເພື່ອເຂົ້າໄປ ໄຫວ້ພະທາດຫລວງ, ສະເພາະອົງພະທາດຫລວງເພິ່ນກໍໄດ້ປະດັບປະດາໄປດ້ວຍດອກໄຟອັນຮຸ່ງເຮືອງ ເຮັດໃຫ້ຜູ້ໄປທ່ຽວສະອອນອົກສະອອນໃຈ ແລະ ເຫລື້ອມໃສສັດທາ, ແສງໄຟຈາກພະທາດຫລວງດວງໃຈລາວປະສານກັບແສງເດືອນ ວັນເພັງ 15 ຄ່ຳສະຫວ່າງສະ ໄຫວອາບເອ້ໄປທົ່ວບໍລິເວນງານບຸນ ເຮັດໃຫ້ງານບຸນຍິ່ງເພີ່ມຄວາມມີສະຫງ່າລາສີມີຊີວິດຊີວາ...ຖ້າລູກໄດ້ເມືອຢາມໄດ້ພົບກັບນີ້ບຸນພະທາດຫລວງລູກຄືຈະດີໃຈຫລາຍ. ນອກຈາກຈະໄດ້ທ່ຽວໄດ້ຊົມງານ ບຸນພະທາດຫລວງແລ້ວ ລູກກໍຈະຕື່ນຕາຕື່ນໃຈໃນຄວາມເປັນລະ ບຽບສວຍງາມຂອງນະຄອນຫລວງວຽງຈັນ, ວຽງຈັນໃນເວລາ 15 ປີມານີ້ບໍ່ແມ່ນເອາະເຈາະຮອດແຕ່ສີໄຄວັດໄຕ, ຈີນາຍໂມ້ ແລະ ໂພນເຄງທາດຫລວງທີ່ນັ້ນ, ນະຄອນຫລວງວຽງຈັນໃນ 15 ປີມານີ້ກວມໄປເຖິງເມືອງຫາດຊາຍຟອງ, ເມືອງໄຊທານີ ແລະ ເມືອງ ນາ

ຊາຍທອງພຸ້ນ, ບ້ານເຮືອນໂຮງຈັກໂຮງງານໄດ້ຖືກສ້າງຂຶ້ນຈົນໜາຕາ.

ວິລະສັກ ອ່ານຈົດໝາຍຂອງແມ່ຈົບລົງດ້ວຍຄວາມຮູ້ສຶກ ປ່ຽວຟອຍ ແລະ ເສົ້າຊຶມວາດໃດວາດໜຶ່ງ, ເຂົາພັບຈົດໝາຍຍັດ ໃສ່ໃນຊອງມືຂອງເຂົາກຳຊອງຈົດໝາຍໄວ້ແໜ້ນໆ ເຂົາປ່ອນຫົວສ່ອງອອກນອກປ່ອງຢ້ຽມ ຜ່ານລະອອງຫິມະຈາງໆພໍສະລົວໆ, ແສງ ຕາຂອງເຂົາແນມໄປເບື້ອງໜ້າສູ່ຂອບຟ້າແດນໄກ ທີ່ໄຮ້ຈຸດໝາຍປາຍທາງ ແລະ ເລື່ອນລອຍ, ພາບພິດແຫ່ງອະດີດໄດ້ຄ່ອຍໆຟູຂຶ້ນ ໃນຫ້ວງຈິດສຳນຶກຂອງເຂົາ ບາງເທື່ອຄືກັບວ່າດອກໄຟທີ່ມີແສງສີລະຍິບລະຍັບໄດ້ປະກົດຂຶ້ນໃນຄວາມຮູ້ສຶກຂອງເຂົາ ບາງເທື່ອກໍຄືຈັ່ງ ພາບຂອງຝູງຄົນພວມບຽດແຫຍ້ກັນຖືດອກໄມ້ທູບທຽນ ເຂົ້າໄປໃນກົມ ມະລຽນພະທາດຫລວງ ດອກໄຟແຕ່ລະດອກພວມເປັ່ງແສງສີອັນສົດ ໃສເໝືອນດວງຕານັບເປັນຮ້ອຍເປັນພັນດວງ, ແຕ່ເມື່ອວິລະສັກຕັ້ງໃຈເບິ່ງໃຫ້ຄັກໆ ພາບທີ່ປະກົດຜ່ານຄວາມຮູ້ສຶກແບບເລື່ອນລອຍ ຂອງເຂົາ ມັນແມ່ນລະອອງຫິມະທີ່ພວມຊຸຫລົ່ນລົງມາບາງໆ.

ວິລະສັກ ຟ້າວອັດປະຕູປ່ອງຢ້ຽມໄວ້ແລ້ວ ງວາກໜ້າມາ ທາງຫ້ອງຮັບແຂກ ແສງຕາຂອງເຂົາໄດ້ໄປຢຸດຢູ່ກັບຮູບຖ່າຍແຜ່ນນັ້ນເຂົາຮູ້ສຶກມີຄວາມສົດຊື່ນມີຊີວິດຊີວາ ແນມເຫັນຍອດພະທາດຫລວງສູງສະຫງ່າ ໃຕ້ທ້ອງຟ້າສີຄາມ ປະກາຍໄຟຈາກດອກໄຟຮຸ່ງອາບເອ້ທົ່ວອົງພະທາດຫລວງ ເບິ່ງເທົ່າໃດກໍບໍ່ຈືດບໍ່ຈາງ ຍິ່ງເບິ່ງກໍຍິ່ງມີຄວາມສົດຊື່ນສະອອນອົກສະອອນໃຈ ໃນຮູບພະທາດຫລວງແຜ່ນນັ້ນ.

. / .

# ແມງວັນ

\+ ເພິ່ນວ່າແມງວັນນັ້ນ ກະສັນຕອນແຕ່ຂອງເໜົ່າ
ສຸຄົນຫາພຸ່ງພົ້ນ ຫອມກົ້ວບໍ່ສະແຫວງ ດອກນາ
\+ ອັນນີ້ຂໍກ່າວແຈ້ງ ຖະແຫລງປຽບປຸນເປັນ
ດ້ານດັ່ງຊຸມຄົນພານ ຖ່ອຍກັນດານແນວບ້າ
ອະວິຊາເຜົາໄໝ້ ທິກໃຈຄົນຖ່ອຍ
ເຫັນຢາພິດວ່າແມ່ນກ້ອນນ້ຳອ້ອຍ ສະເໜນຫ້ອຍທໍ່ໃຈ
\+ ອັນວ່າດວງດອກໄມ້ ປຸນປຽບສິນທຳ
ນານຊື່ຊຸມແມງວັນ ບໍ່ກະສັນຊົມຊ້ອນ
ເທາະຣ່ອນບິນຜັນຜ້າຍ ໝາຍຊົມອາຈົມເກົ່າ
ບຸບຜາງາມອາດເອ້ ບໍ່ບິນແສ້ວສອດສະແຫວງ ແລມໍ
\+ ດຽວນີ້ ດວງດອກໄມ້ ສົນຕິພາບພວມບານ ງາມເດ
ສະລັບເປັນສັນສີ ຮຸ່ງເຮືອງຮາວຖ້ານ
ບານເບັ່ງຫອມຫວນເຫົ້າ ອະສິງໄຂຂານຂອບ ຈົງແລ້ວ
ແມງວັນເອີຍ ສົງບໍ່ເປື້ອງປິ່ນໜ້າ ມາຊົມຊ້ອນດອກດວງ ແດ່ເດ

. / .

# ຄ່າຂອງຄູ

* ວັນທີ 20 ເດືອນພະຈິກຈື່ແຈ້ງ  ແມ້ງເມື່ອວັນວຽນ

ສາກົນຂານຍໍຍົກ    ຍື່ນຄູຄຸນແກ້ວ
ເປັນແວ່ນແຍງເຍືອງຍູ້    ຊູເຊີຍເຊີດສິ່ງ
ອີງເຂດຄູທົ່ວດ້າວ    ສະກາວເກື້ອກໍ່ກວມ
  * ເປັນແມ່ພິມພຽບພ້ອມ    ພຽນພ່ຳແພງຖະໜອມ
ຫອມຫໍ່ແນວນາມຫລານ    ກ່າວຂານໄຂຂໍ້
ຂໍຂອດເທຫານຊີ້    ວິຊາການປຸ່ນແປ່ງ
ແປງຫລໍ່ຫລອມລ່ຳປ້ອນ    ສອນຊີ້ຊົ່ວດີ
  * ມິຫມື່ນໂຂກີດກັ້ນ    ພ່ອງພາດເພື່ອນພິດ ກໍຕາມຖ້ອມ
ຊັ້ນຊື່ນາວາຄູ    ຈູ່ ໂຈມຈຳຈີ້
ບໍ່ຫນ່າຍຫນີແຫນງເວັ້ນ    ເຫັນໃຈຊູຊ່ອຍ
ນຳຫມູ່ຫລານຫນຸ່ມນ້ອຍ    ລອຍຂ້າມຜ່ານກະແສ
  * ບໍ່ໃຫ້ໄພກີກກົ້ວ    ມືດບອດບັງບົດ
ຊີວິດຄືນຈະສົດໃສ    ໃຫມ່ລະໄມເມື່ອຫນ້າ
ການສຶກສາເສີມເອ້    ສະເຫນຫາຫອມຮູບ

ຄູຈືງຜັດລູບໄລ້
* ຖ້າວ່າຄູຖອດຖິ້ມ
ຝູງສ່ຳຫາລະກາເດັກ
ຜູ້ສືບທອນແທນທ້າຍ
ຈະເກີດໄພກຶກກຸ້ມ

ເຕີມແຕ້ມແຕ່ງປະດາ
ເທທອດໄລລາ ເມື່ອໃດ
ລູກຫລານເຫລັ້ນຫລອນ
ພາຍລຸນຊາດກຳເນີດ
ໂຮມທຸ້ມທໍ່ຮິງ ເຈົ້າເອີຍ

. / .

# ປູ່ແຫວນ

ຢູ່ບ້ານໂນນຂອງຂ້ອຍນັ້ນ ສິ່ງທີ່ຊາວບ້ານພາກັນເຄົາລົບນັບ ຖື ແລະ ໃຫ້ການສັກກາລະບູຊານັ້ນ ກໍບໍ່ມີຫຍັງຈະລື່ນເໜືອໄປກ່ວາວັດ ແລະ ຫໍບ້ານ ຫລືວ່າຜີປູ່ຕາ, ອັນຜີປູ່ຕາປູ່ບ້ານໂນນນີ້ຊາວບ້ານສ່ວນຫລາຍມັກຈະເອີ້ນຊື່ເພິ່ນວ່າ " ປູ່ແຫວນ " ແຕ່ຫາກບໍ່ມີໃຜຮູ້ ໄດ້ດອກວ່າປູ່ແຫວນແມ່ນຄົນໃນ ບ້ານຫ້ວານໃນສວນຂອງບ້ານໂນນຫລືບໍ່ ເມື່ອຕາຍໄປແລ້ວເລີຍເປັນຜີເຝົ້າດອນຫົວບ້ານ, ຄົນທີ່ພໍຈະຮູ້ທີ່ ມາຂອງປູ່ແຫວນກໍບໍ່ມີໃຜເຫລືອຢູ່ ພາກັນໄປເປັນສະມາຊິກຂອງປູ່ແຫວນໝົດແລ້ວ. ແຕ່ປູ່ແຫວນຈະເປັນຜີແນວໃດກໍຕາມ ຊາວບ້ານໂນນ ກໍພາກັນໃຫ້ຄວາມເຄົາລົບນັບຖື ແລະ ເອີ້ນເພິ່ນວ່າ "ປູ່ແຫວນ" ເຕັມສິບເຕັມປາກ, ຈະບໍ່ໃຫ້ຊາວບ້ານນັບຖືເຮັດແນວໃດໄດ້ ຂອງ ແນວວ່າປູ່ແຫວນບໍ່ເຄີຍຈະເຮັດມະລຳມະລອຍໃຫ້ຊາວບ້ານເດືອດຮ້ອນຈັກເທື່ອ, ປູ່ແຫວນກໍຢູ່ຕາມເລື່ອງຂອງປູ່ແຫວນ ແນວນັ້ນແຫລະ.

ບາງຄົນຍັງເວົ້າວ່າ ການລົງໄປວັດວາອາຮາມ ເພື່ອເຮັດ ບຸນທຳທານກໍດີໄປແນວໜຶ່ງ ເພາະວັດແມ່ນບ່ອນຂູດເກົາກິເລດທັງປວງ ເຮັດໃຫ້ຄົນຮູ້ຈັກສິນຈັກທຳ, ສະເພາະຍາມເປັນປາງບຸນນັ້ນ ນອກ

ຈາກຈະໄດ້ເຮັດໜ້າທີ່ໃຫ້ທານດ້ວຍຄວາມບໍລິສຸດໃຈແລ້ວ ສິ່ງ ເສດ ເຫລືອຈາກຄູບາອາຍຈົວເພິ່ນສັນ ພວກອອກຕົນຍາດໂຍມທັງໜຸ່ມທັງ ເຖົ້າ ກໍຕົ້ວງລ້ອມ ສ່ວນເສດສ່ວນເຫລືອກໍແລວໄປຄາບໜຶ່ງ ທັງໄດ້ ໂອໄດ້ລົມກັນນຳຕື່ມ, ແຕ່ຖ້າຫາກມື້ໃດລ້ຽງປູ່ແຫວນ (ຫໍບ້ານ) ຢາກ ວ່າຄັກກ່ອນລົງວັດຊ້ຳ ທຳນອງວ່າຜີກິນອາຍຄົນບາຍຕ່ອນ ແລະແຖມ ດ້ວຍນ້ຳເມົາເຂົ້າໄປຕື່ມອີກ, ສ່ວນປູ່ແຫວນນັ້ນເອົາໃຫ້ເພິ່ນ ຈອກ ນ້ອຍຈອກດຽວກໍຍັງບໍ່ເພືອດຊ້ຳ ບາງເທື່ອລຸງຄົນຜູ້ເປັນຈ້ຳຂອງ ປູ່ ແຫວນ ກໍຍົກເອົາເຫລົ້າຢູ່ຈອກນ້ອຍນັ້ນ ກິນເອືອກລົງທ້ອງ. ແຕ່ປູ່ ແຫວນກໍບໍ່ຖືສາຫາຄວາມວ່າ ລູກຫລານໄປລ່ວງໄປເກີນເພິ່ນ ບາງປີ ຕົ້ນໄກ່ຜູ້ໂອກໂຕປານຫ່ານວາງຢູ່ຮ້ານບູຊາຂອງປູ່ແຫວນ ພໍແຕ່ ລຸງ ຄົນເຮັດພິທີມະລ່ອມມະແລ່ມ ບຶດໜຶ່ງພັດໄດ້ຍິນສຽງຄົນເວົ້າຂຶ້ນວ່າ

" ປູ່ແຫວນກິນອີ່ມແລ້ວເດ ຍົກອອກມາທະແມ "

ພໍແຕ່ເວົ້າສຸດຄວາມ ຕົ້ນໄກ່ຜູ້ໂອກກໍຖືກຍົກອອກຈາກຮ້ານຂອງປູ່ ແຫວນ ຍາດກັນຈີກຊ້າຍຈີກຂວາ ທັງພ່ອງຕົບມືພ້າ, ບໍ່ພໍທໍ່ໃດ ອຶດ ໃຈຕົ້ນໄກ່ຜູ້ໂອກກໍກຽງເອີດເຕີດ ບໍ່ເຫັນເຫລືອຈັກຕ່ອນ.

ທຸກໆປີກ່ອນຈະລົງເຮັດນາຊາວບ້ານໂນນຂອງພວກຂ້ອຍ ຈະຈັດ ໃຫ້ມີພິທີລ້ຽງປູ່ແຫວນ (ຫໍບ້ານ) ເປັນປະຈຳ, ຈຸດປະສົງໃນ ການ ລ້ຽງຫໍບ້ານ ຫລືວ່າປູ່ແຫວນ ກໍເພື່ອເປັນການຂໍຟ້າຂໍຝົນ ແລະ ຂໍ ຄວາມຢູ່ດີມີແຮງ ເພື່ອຈະໄດ້ພາກັນເຮັດນາໃຫ້ຕະຫລອດລອດຝັ່ງທັງ ໃຫ້ໄດ້ໝາກໄດ້ຜົນເປັນທີ່ພໍອົກພໍໃຈ, ພິທີລ້ຽງປູ່ແຫວນກໍບໍ່ມີຫຍັງ ຈະສັບເປືອງກະດັດກະດໍ້ດອກ. ໃກ້ໆຈະຮອດມື້ພິທີດັ່ງກ່າວ ກວານ ບ້ານກໍຈະເອີ້ນລູກບ້ານເຊິ່ງມີຢູ່ແຕ່ 50 ຫລັງຄາເຮືອນມາຮ່ວມ ປະ

ຊຸມ ທາງການບ້ານກໍປ່າວເຕືອນໃຫ້ແຕ່ລະເຮືອນເອົາເຫລົ້າເຮືອນລະໜຶ່ງແກ້ວ ໄປໂຮມກັນຢູ່ເດີ່ນບ່ອນຕູບຂອງປູ່ແຫວນຖ້າຫາກເຮືອນໃດມີເງື່ອນໄຂພຽງພໍຈະສົມທົບຊີ້ນປາອາຫານກໍຖືໄປພ້ອມ; ສ່ວນຕົ້ນໄກ່ນັ້ນແມ່ນລຸງຄຳຜູ້ເປັນຈ້ຳຮັບພາລະທຸກໆປີ ບໍ່ໃຫ້ເດືອດຮ້ອນຊາວບ້ານ.

ຕູບຂອງປູ່ແຫວນໄດ້ປຸກຂຶ້ນຢູ່ບ່ອນດອນປ່າຍາງຫົວບ້ານ, ສຳລັບຕົ້ນໄມ້ຍາງທີ່ຢືນຊາຍລາຍຈົນກາຍເປັນດົງໄມ້ຍາງນັ້ນ ຄົນຮຸ່ນຫລັງໆບໍ່ມີຜູ້ໃດສາມາດຮູ້ໄດ້ວ່າແມ່ນໃຜເອົາມາປູກໄວ້, ສ່ວນຫລວງຫລາຍເຂົ້າໃຈແຕ່ວ່າທຳອິດມັນກໍເກີດມີຂຶ້ນ ໂດຍທຳມະຊາດຂອງມັນ ເອງໃນເວລາຕໍ່ມາມັນກໍຂະຫຍາຍພັນອອກໄປເລື້ອຍໆ ຕົກມາເຖິງຮຸ່ນລູກຮຸ່ນຫລານຈຶ່ງເຮັດໃຫ້ບໍລິເວນຕູບຂອງປູ່ແຫວນກາຍເປັນດົງໄມ້ຍາງ.

ເວົ້າແທ້ ບ່ອນປູກຕູບປູ່ແຫວນນີ້ ບັນຍາກາດທົ່ວໄປເຢັນສະບາຍທັງມີດວງຮຽບແຕ່ຫາກເປັນສີຂົມໆວາດໃດວາດໜຶ່ງ, ຄົນຜູ້ຍ່າງ ຜ່ານກາຍໄປຖ້າຫາກແມ່ນໄປຄົນດຽວ ຮູ້ສຶກອ່າວເຢັນເປັນສີຊອຍ ວອຍເລາະຂ້າງເລາະແຂວ ເຮັດໃຫ້ບາດຖືກຂາຕົກຕ່ຳຕົກສູງ ຫລື ບາງເທື່ອກໍຂຶ້ນຫົວພອງເປືອກໆ. ຖ້າແມ່ນຍາມຄ່ຳຄົນຜູ້ບ່າວບ້ານໂນນຈະຍ່າງຜ່ານໄປຫລິ້ນສາວບ້ານໃກ້ຄຽງ ຖ້າບໍ່ມີໝູ່ຮອດຫາຄົນແມ່ນ ບໍ່ກ້າຍ່າງຜ່ານເດັດຂາດ, ໃນເວລາຜ່ານມາກໍບໍ່ເຄີຍໄດ້ຍິນວ່າ ປູ່ແຫວນຫລອກຜູ້ໃດຈັກເທື່ອ ແຕ່ຄົນຫາກພາກັນຢ້ານເອົາເອງ. ເມື່ອທຽບດອນຫົວບ້ານກັບດອນທາງທາງບ້ານໃສ່ກັນແລ້ວ ໄກກັນປານຟ້າກັບແຜ່ນດິນ ເພາະວ່າເບື້ອງທາງບ້ານນັ້ນ ບໍ່ມີຫຍັງເປັນຕາຢ້ານກົວເຖິງຈະເປັນສີອົມຄືມແດ່ ກໍມີແຕ່ພຽງສຸມສາງໄພ່ບໍ່ເກີນສິບສຸມ, ສ່ວນ

ບໍລິເວນຂ້າງທາງອີກເບື້ອງໜຶ່ງ ຊາວພັດຖາກຖາງຈົນແປນປານເດີ່ນ ວັດ ແລ້ວປຸກໂຮງຮຽນປະຖົມປີທີໜຶ່ງໃສ່ຕື່ມອີກ, ເວລາຊາວ ບ້ານ ຍ່າງກາຍໄປບໍ່ວ່າກາງເວັນກາງຄືນ ກໍເປັນສິ່ງອຸ່ນໆອາດໃດວາດໜຶ່ງ ສ່ວນວ່າເບື້ອງຫົວບ້ານບ່ອນຕູບປູ່ແຫວນນັ້ນ ຍາມກາງເວັນແທ້ໆ ຄົນ ບໍ່ມີໜູ້ຫາທີ່ກລົບແມ່ນບໍ່ກ້າເຂົ້າໄປ ນອກຈາກລຸງເຄນຜູ້ເຮືອນຢູ່ອ່າວ ນໍ້ ແລະ ທັງເປັນຈ້ຳຂອງປູ່ແຫວນ ມື້ໃດເປັນວັນພະວັນສິນລາວ ກໍ ເຂົ້າໄປໄຕ່ທູບໄຕ່ທຽນ ສັກກາລະບູຊາ, ສຳລັບຊາວບ້ານຜູ້ອື່ນໆນັ້ນ ຖ້າຈ້າງກໍຢາກໄດ້ແຕ່ເງິນ ຫາກບໍ່ກ້າເຂົ້າໄປຄົນດຽວໄດ້.

ຕູບປູ່ແຫວນ ເຖິງແມ່ນປຸກຢູ່ທ່າມກາງຂອງດົງປ່າໄມ້ຍາງກໍ ຈິງ ແຕ່ຕູບຂອງປູ່ແຫວນ ກໍບໍ່ມີໄມ້ຍາງມາເຮັດພໍ່ສອງມື້ອມື, ຕູບ ຂອງ ປູ່ແຫວນປຸກຂຶ້ນແບບງ່າຍດາຍ ມີພຽງແຕ່ເສົາໄມ້ແກ່ນຫລ້ອນສີ່ຕົ້ນມຸງ ດ້ວຍຫຍ້າແຝກ ແອ້ມດ້ວຍຝາໄມ້ເຮ້ຍ ປູດ້ວຍກະຟາກໄມ້ໄຜ່ບ້ານ , ຢູ່ເບື້ອງໃນຂອງຕູບກໍມີແຕ່ຮ້ານບູຊາ ສູງຈາກພື້ນກະຟາກໄມ້ໄຜ່ ປະ ມານພຽງຫົວເຂົ່າ ໂດຍໃຊ້ໄມ້ແປ້ນເກົ່າໆພຽງແຜ່ນດຽວເທົ່ານັ້ນຕັ້ງ ຢູ່ເທິງຮ້ານບູຊາ ກໍເຫັນມີແຕ່ຂັນກະຢອງ ( 1 ) ກັບນ້ຳເຕົ້າ ດິນ ປາກບິ່ນ ແລະ ຖ້ວຍດິນໜຶ່ງອັນ ເຊິ່ງເກົ່າຈົນບໍ່ມີໃຜຮູ້ວ່າວັດຖຸ ທັງ ສາມຢ່າງນີ້ສີເດີມຂອງມັນແມ່ນສີແນວໃດແທ້. ຕູບຂອງປູ່ແຫວນ ປູກ ເປັນລັກສະນະຫ້ອງດຽວເລີຍໂລດ ບໍ່ມີຝາປະຕູອັດ ເພີ່ນເອົາຜ້າແພ ກາງເຮັດແບບຜ້າກັ້ງ, ຕູບປູ່ແຫວນເຖິງຈະເປັນພຽງຕູບຫລັງນ້ອຍໆ ກໍຈິງ ແຕ່ເບິ່ງແລ້ວກໍມີອາດຂຶມໆເປັນຕາຢ້ານ ຢູ່ໃນຈິດສຳນຶກ ຂອງ ຜູ້ແນມເບິ່ງຕູບນັ້ນຄືກັບວ່າຈະໄດ້ເຫັນປູ່ແຫວນ ນັ່ງເຮັດເຊັ່ຍ ເມີ້ຍ

---

(1) ຂັນກະຢອງ: ແມ່ນຂັນທີ່ເພີ່ນສານດ້ວຍໄມ້ໄຜ່.

ເກີ໌ຍຢູ່ແນວນັ້ນແຫລະ.

ຕູບຂອງປູ່ແຫວນ ປຸກຂຶ້ນມາໄດ້ຈັກປີ ປ່ຽນຫຍ້າມຸງປ່ຽນຝາແອ້ມ ແລະ ປ່ຽນກະຟາກປູຈັກເທື່ອແລ້ວ ຂ້ອຍບໍ່ສາມາດຈະຮູ້ໄດ້, ນັບແຕ່ຂ້ອຍເກີດໄດ້ໃຫຍ່ມາຍາມໃດກໍເຫັນຕູບຂອງປູ່ແຫວນຢູ່ໃນລັກສະ ນະເກົ່າແກ່ຜຸພັງ, ສ່ວນວ່າຝາໄມ້ເຮັ້ຍນັ້ນ ບໍ່ພຽງແຕ່ຈະປ່ຽນມາ ເປັນສີດຳແຖມຍັງມີສີຂຽວຍ້ອມໄຄໄມ້ ແລະ ຈຸດດ່າງດຳປະສົມຂາວ ພໍປານວ່າລາຍໂຕກັບແກ້ເອົາໂລດ, ສຳລັບຫຍ້າແຝກມຸງຕູບນັ້ນ ນອກຈາກເກົ່າຈົນຂອບແລ້ວ ກໍມີບາງໄພຫ້ຽນຈົນເກືອບຈຳກ້ານໄພຫຍ້າ, ສະເພາະຜ້າກັ້ງນັ້ນ ຜູ້ເຖົ້າເຄີຍເລົ່າສູ່ຟັງວ່າ ເປັນແຜ່ນສີແດງ ແຕ່ຂ້ອຍແນມເບິ່ງມັນແມ່ນສີໂອລຽງຫລາຍກວ່າ. ສິ່ງທັງຫມົດມັນ ບົ່ງບອກເຖິງຄວາມດົນນານຜ່ານມາ, ຂ້ອຍຄິດວ່າສິ່ງດັ່ງກ່າວນີ້ ຊາວບ້ານໂນນຂອງພວກຂ້ອຍກໍພໍຈະມີທາງແກ້ໄຂໄດ້ ແຕ່ຫາກຂ້ອຍບໍ່ຮູ້ວ່າເພິ່ນມີລະບຽບຫລັກການແນວໃດ ຈຶ່ງປະໃຫ້ຕູບປູ່ແຫວນເກົ່າແກ່ ຊຸດໂຊມເຖິງພຽງນີ້ !

ເບິ່ງແລ້ວ ປູ່ແຫວນກໍເປັນຜູ້ສັນໂດດຄືຍິນດີກັບສິ່ງທີ່ຕົນມີຢູ່ ຢ່າງຫນ້າຊື່ນຊົມຍິນດີອີ່ຫລີ, ຜ່ານມາກໍບໍ່ເຄີຍເຫັນວ່າປູ່ແຫວນຈະ ເຂົ້າຫຽນລຸງເຄນຜູ້ເປັນຈ້ຳຈັກເທື່ອ ເພື່ອຮຽກຮ້ອງໃຫ້ປຸກຕູບຫລັງ ໃຫມ່ໃຫ້ງາມໆ ຕ້ອງປ້ຳໄມ້ຍາງລົງມາເລື່ອຍປຸກໃຫ້, ຫລືວ່າຮຽກ ຮ້ອງໃຫ້ປັບປຸງຢູ່ພາຍໃນຕູບຕົບແຕ່ງໃຫ້ມີຫ້ອງນອນ ແລະ ຫ້ອງຮັບ ແຂກທັງໃຫ້ມີຊຸດຮັບແຂກທີ່ຜະລິດຈາກໄມ້ຍາງ, ຍິ່ງໄປກວ່ານີ້ກໍສັ່ງ ໃຫ້ເລີກຜ້າກັ້ງອອກແລ້ວຕັ້ງວົງກົບປະຕູໃສ່ເຮັດບານປະຕູແສງຈັນ ຂັດດ້ວຍສະແລັກຈົນເປັນເງົາຍິບໆ. ສິ່ງດັ່ງກ່າວນີ້ຂ້ອຍບໍ່ເຄີຍເຫັນ ປູ່

ແຫວນຣຽກຮ້ອງຕ້ອງການ ຫລືວ່າປູ່ແຫວນກາຍເປັນພີບູຣານບໍ່ທັນສະໄຫມນຳເຂົາບໍ ?

ປ່າໄມ້ຍາງຢູ່ດອນຫົວບ້ານ ບ່ອນຕູບປູ່ແຫວນນັ້ນຜູ້ໃດແນມເຫັນກໍສະອອນອົກສະອອນໃຈ ເບິ່ງຕົ້ນໃດກໍອູ້ມບໍ່ຈອດ, ພວກພໍ່ຄ້າ ໄມ້ທັງປະເພດເຖື່ອນ ແລະ ບໍ່ເຖື່ອນໄດ້ເຫັນຍາມໃດພາກັນກືນນ້ຳລາຍລົງຄໍເອື້ອກໆ. ມີຢູ່ເທື່ອຫນຶ່ງພວກພໍ່ຄ້າໄປຈາກໃນເມືອງພາກັນ ແບກຫນ້າແບກຕາໄປຫາລຸງທິດພິມກວານບ້ານ ບອກວ່າຢາກຂໍສຳປະທານຕັດໄມ້ເຂົ້າໂຮງເລື່ອຍ ແຕ່ລຸງທິດພິມບອກເປັນຄຳຂາດວ່າ.

" ສຳປະທານປະເທີນອັນໃດ ກໍແມ່ນຕ້ອງບໍ່ໄດ້ເດັດຂາດ ເປັນໄມ້ຂອງປູ່ແຫວນ ຖ້າໃຜຫາກຂືນໄປຕັດກໍມີຫວັງປູ່ແຫວນ ຫັກຄໍຖິ້ມໂລດ !"

ເຖິງແມ່ນປູ່ແຫວນຈະບໍ່ເຄີຍເຂົ້າຫຽນລຸງຄົນຜູ້ເປັນຈ້ຳ ເພື່ອປະກາດຫ້າມຕັດໄມ້ຍາງຢູ່ດອນຫົວບ້ານກໍຈິງ ແຕ່ຊາວບ້ານໂນນຂອງພວກຂ້ອຍ ກໍຖືກັນວ່າ ໄມ້ຍາງຢູ່ດອນຫົວບ້ານທັງຫມົດເປັນສົມບັດຂອງປູ່ແຫວນ, ມອບໃຫ້ປູ່ແຫວນເປັນຜູ້ປົກປັກຄຸ້ມຄອງຄືກັບວ່າ ເປັນປ່າສະຫງວນຂອງປູ່ແຫວນ ແນວນັ້ນແຫລະ. ສ່ວນວ່າຜັກນາງ ອາງຫມີ່ ຫນໍ່ໄມ່ຫນໍ່ບົງນັ້ນ ປູ່ແຫວນຄືຈະບໍ່ແພງປານໃດລູກຫລານ ຊາວບ້ານເຂົ້າໄປຊອກໄປຫາ ເອີ້ນຂໍນຳເພີ່ນແລ້ວກໍພາກັນເກັບມາຢູ່ ມາກິນໄດ້ສະບາຍ.

ຄືນນັ້ນສຽງກະລໍຢູ່ເຮືອນລຸງທິດພິມ ຜູ້ເປັນກວານບ້ານດັງຂຶ້ນ , ຊາວບ້ານທຸກຄົນຮູ້ດີວ່າຖ້າມີສຽງຕີກະລໍ ແມ່ນທາງກວານບ້ານມີວຽກເອີ້ນລູກບ້ານໄປປະຊຸມ, ບາງເທື່ອແມ່ນວຽກທາງການ ບາງເທື່ອກໍ

ແມ່ນວຽກຂອງບ້ານເອງເຊັ່ນປຶກສາຫາລື ເພື່ອຈະເຮັດບຸນສິນ ກິນທານ ຫລືວ່າຮ່ວມກັນເຮັດອະນາໄມບ້ານ.

ຄືນນັ້ນ ຫລັງຈາກແຕ່ລະເຮືອນກິນເຂົ້າແລງແລ້ວ ກໍພາກັນ ມາເຕົ້າໂຮມຢູ່ເດີ່ນບ້ານຂອງລຸງທິດພົມ ຢ່າງພ້ອມພຽງຮຽງໜ້າ, ເມື່ອເຫັນວ່າທຸກໆຄົນໄດ້ມາໝົດແລ້ວ, ລຸງທິດພົມກັບຄູບຸນຕາ ເຊິ່ງເປັນຄູສອນຊັ້ນປະຖົມປີທີໜຶ່ງປະຈຳບ້ານໂນນມາໄດ້ຫາປີແລ້ວນັ້ນ ກໍພາກັນອອກມາຢືນຢູ່ຕໍ່ໜ້າຊາວບ້ານ ທ່າມກາງແສງໄຟກະບອງ ນ້ຳມັນຍາງ ແລະ ຕະກຽງນ້ຳມັນກາດ ລຸງທິດພົມຈຶ່ງເວົ້າຂຶ້ນວ່າ

" ພີ່ນ້ອງທັງຫລາຍເອີຍ ມື້ກ່ອນນີ້ຄູບຸນຕາໄດ້ເຂົ້າໄປສຶກ ສາເມືອງ, ທາງພະແນກສຶກສາເມືອງໄດ້ລົມນຳວ່າ ພາກຮຽນໃໝ່ແຕ່ລະປີຜ່ານມານັ້ນ ລູກຫລານຂອງພວກເຮົາເສັງຈົບຊັ້ນປະຖົມປີທີໜຶ່ງແລ້ວ ຕ້ອງໄດ້ສົ່ງໄປຮຽນຊັ້ນປະຖົມ **ປີທີສອງຕໍ່ຢູ່ຫມວດ**ໂຮງຮຽນປະຖົມຕາແສງ "

**ມີສຽງໜຶ່ງ**ຕອບຂັດຈັງຫວະຂອງລຸງທິດພົມຂຶ້ນວ່າ " **ໂຍ່ວ...** ສົ່ງກໍສົ່ງບໍ່ມີຫຍັງຂັດຂ້ອງດອກ ເພາະເຄີຍປະຕິບັດມາແນວນັ້ນເດ "

ລຸງທິດພົມຜູ້ເປັນກວານບ້ານເວົ້າຂຶ້ນລັດວ່າ

" ບໍ່ແມ່ນແນວນັ້ນ ດຽວນີ້ຄູບຸນຕາເພິ່ນມີຂ່າວດີມາບອກ "

ລຸງທິດພົມຢຸດເວົ້າຄາວໜຶ່ງຊາວບ້ານທຸກຄົນພາກັນມິດມີແຕ່ຈົດຈໍ່ຢາກຟັງຂ່າວດີຂອງຄູບຸນຕາວ່າ ມັນຊິແມ່ນແນວໃດ, ແຕ່ທຸກຄົນ ກໍເຊື່ອວ່າຄົງຈະບໍ່ແມ່ນຂ່າວຂອງພວກເລາະຊິຂອງເກົ່າຂອງແກ່ ເດັດຂາດ ເພາະພວກນີ້ຫາກໍກັບເມືອຫວ່າງ 2-3ມື້ນີ້, ລຸງທິດພົມ ຈຶ່ງບອກຂ່າວດີໃຫ້ຊາວບ້ານຮູ້ວ່າ " ປີນີ້ທາງສຶກສາເມືອງມີຄຳສັ່ງກັບຄູ

ບຸນຕາວ່າ ຢາກໃຫ້ບ້ານໂນນຂອງພວກເຮົາ ມີຫ້ອງຮຽນເພີ່ມຂຶ້ນອີກໜຶ່ງຫ້ອງ ຄືຫ້ອງປະຖົມປີທີສອງ ເພື່ອວ່າລູກຫລານຂອງພວກ ເຮົາຈະໄດ້ຮຽນຕໍ່ປະຖົມປີທີສອງຢູ່ກັບບ້ານ "

ລຸງທິດພິມເວົ້າມາຮອດນີ້, ລຸງເຄນຈ້ຳຂອງປູ່ແຫວນລຸກຂຶ້ນເວົ້າທັງໃຫ້ການສະໜັບສະໜູນ ແລະ ຕັ້ງຄຳຖາມໄປນຳພ້ອມ.

" ບັນຫານີ້ຖືວ່າເປັນເລື່ອງດີທີ່ສຸດ ສຳລັບບ້ານໂນນຂອງ ພວກເຮົາ...ແຕ່ຢາກຂໍຖາມວ່າ ການເພີ່ມຫ້ອງຮຽນຕື່ມອີກນັ້ນເວົ້າແຕ່ຊື່ນັ້ນມັນງ່າຍຢູ່ດອກ ແຕ່ຈະເຮັດໂຕຈິງນັ້ນ ມັນພັດບໍ່ງ່າຍຄືເວົ້າ ຈະເອົາໄມ້ຢູ່ໃສມາເຮັດນາສ້າງ ຫລັງເກົ່າກໍໃກ້ຈະເພຢູ່ແລ້ວຍັງບໍ່ມີປັນຍາຊິສ້ອມຊິແປງໄດ້ "

ຊາວບ້ານແຕ່ລະຄົນເຖິງຈະບໍ່ມີໃຜຖາມຫຍັງຕື່ມກໍຈິງ ແຕ່ໃນໃຈຂອງແຕ່ລະຄົນກໍຄຶດສະແດງຄວາມເຫັນດີເຫັນພ້ອມນຳລຸງເຄນ, ຝ່າຍລຸງທິດພິມຮູ້ວ່າບໍ່ມີໃຜຖາມຫຍັງອີກ ຈຶ່ງຕອບລຸງເຄນເພື່ອສະ ເໜີທາງອອກໃຫ້ຊາວບ້ານໄດ້ປຸກສ້າງໂຮງຮຽນຫລັງໃໝ່ ລຸງທິດ ພິມເວົ້າວ່າ

" ຖ້າພວກເຮົາທຸກຄົນ ສາມັກຄີພ້ອມພຽງຮຽງໜ້າກັນຢາກໄດ້ໂຮງຮຽນໄວ້ໃຫ້ລູກໃຫ້ຫລານຂອງພວກເຮົາແທ້ໆ ເຮົາເອງ ໄດ້ລົມກັບຍາທ່ານໃຫ່ຍຢູ່ອັດ ແລະ ຄູບຸນຕາແລ້ວ ແນ່ນອນຕ້ອງມີທາງ ແກ້ໄຂໄດ້ "

ລຸງທິດພິມຢຸດເວົ້າໜ້ອຍໜຶ່ງ ເພື່ອຕິດຕາມເບິ່ງທ່າທີຂອງ ແຕ່ລະຄົນ ຖ້າຫາກແມ່ນຍາມກາງເວັນລຸງທິດພິມຈະໄດ້ເຫັນແວວ ຕາແຫ່ງຄວາມຫວັງໃໝ່ຂອງຊາວບ້ານ ເຊິ່ງຝາກຄວາມຫວັງໄວ້ກັບລຸງ

ທິດພິມ, ຍາທ່ານໃຫ່ຍຢູ່ວັດ ແລະ ຄູບຸນຕາ.

" ໄມ້ຂອງພວກເຮົານີ... ແຕ່ຕ້ອງອາໄສລຸງເຄນເປັນຜູ້ຊ່ອຍເຫລືອ "

ລຸງທິດພິມເນັ້ນປະໂຫຍກຄຳເວົ້າ, ແຕ່ມີສຽງຫນຶ່ງຖາມດອດມາແຕ່ທາງແຈຮົ້ວບ້ານວ່າ

" ລຸງເຄນຊິໄປເອົາຢູ່ໃສມາໃຫ້ ?"

ຊາວບ້ານທຸກໆຄົນເຫັນດີ ເຫັນພ້ອມນຳຄຳຖາມຫວ່າງກີ້ນີ້ເພາະວ່າລຸງເຄນເອງກໍເກືອບຈະເອົາຕົວບໍ່ລອດຢູ່ແລ້ວ, ແຕ່ລຸງທິດ ພິມຕອບວ່າ

" ໄມ້ຍາງຢູ່ດອນຫົວບ້ານ ບ່ອນຕູບປູ່ແຫວນຫັ້ນເດ ໃຫ້ລຸງເຄນຂໍນຳປູ່ແຫວນພໍມາປຸກໂຮງຮຽນກໍຊິພໍໄດ້ຢູ່ຕິ...ວ່າແນວໃດລຸງເຄນ"

ລຸງເຄນຟ້າວລຸກຂຶ້ນຕອບທັນທີ ທ່າມກາງຄວາມຫວາດກົວ ຂອງຊາວບ້ານ.

" ກໍບໍ່ຮູ້ຈະວ່າແນວໃດແຫລ້ວ...ຖ້າຊາວບ້ານເຮົາຕົກລົງ ຮ່ວງໃຈເຫັນດີເຫັນພ້ອມ ກໍຊິລອງຮ້ອງຂໍຍໍມືນຳເພິ່ນລອງເບິ່ງ... ແຕ່ຖ້າເປັນຫຍັງມາທຸກຄົນຮັບຜິດຊອບນຳກັນ "

ເມື່ອເວົ້າເຖິງໄມ້ຍາງຢູ່ດອນຫົວບ້ານ ຜູ້ໃດກໍທັນໃຈບໍ່ຢາກ ທົວທ້ອງປານໃດ ເພາະເຄີຍເກັ່ງຂາມໃນຊື່ສຽງຂອງປູ່ແຫວນມາຫລາຍຊົ່ວຄົນແລ້ວ, ແຕ່ເພື່ອໃຫ້ເປັນເອກະພາບກັນ ລຸງທິດພິມກໍໄດ້ ຖາມຄືນແຕ່ຫາກບໍ່ມີໃຜສະແດງທັດສະນະແນວໃດ, ລຸງທິດພິມຈຶ່ງສະຫລຸບເອົາແບບງ່າຍໆວ່າ

" ຖ້າບໍ່ມີຜູ້ໃດຂັດຂ້ອງແນວໃດ ມື້ອື່ນເຊົ້າໃຫ້ທຸກຄົນກຽມເຄື່ອງ,

ມີເປັນຕົ້ນແມ່ນຂວານ ແລະ ເລື່ອຍໄປໂຮມກັນຢູ່ເດີ່ນຕູບຂອງ ປູ່
ແຫວນ ".

ເຊົ້າມື້ນັ້ນ ຢູ່ດອນທ່າບ້ານ ຫລືວ່າດອນຕູບຂອງປູ່ແຫວນບໍ່ພຽງແຕ່
ຜູ້ເຖົ້າ ແລະ ຊຸມຜູ້ຊາຍທີ່ເປັນກຳລັງແຮງໃນການປ້ຳຕົ້ນຍາງ, ພວກ
ຜູ້ຍິງເດັກນ້ອຍກໍແຫ່ກັນເມືອເບິ່ງຈົນແຫນ້ນປານວ່າບຸນວັດເອົາ ໂລດ
ເພາະວ່າມັນແມ່ນເລື່ອງໃຫຍ່ ແລະ ໃຫມ່ທັງເປັນທີ່ຫວາດກົວ ຕື່ນ
ເຕັ້ນຂອງຊາວບ້ານໂນນທຸກຄົນ ເຊິ່ງເຄີຍຄິດກັນໃນເວລາຜ່ານ ມາ
ວ່າມັນບໍ່ອາດຈະເປັນໄປໄດ້ ແຕ່ແລ້ວສິ່ງດັ່ງກ່າວ ມັນກໍຈະເປັນ ໄປ
ໃນອີກບໍ່ທໍ່ໃດອີດໃຈຂ້າງຫນ້ານີ້.

ສາຍຕາແຕ່ລະຫນ່ວຍ ແນມໄປຢຸດຢູ່ທີ່ຕົວຂອງລຸງເຄນເປັນ ຈຸດ
ດຽວ, ມື້ນີ້ລຸງເຄນນຸ່ງຜ້າສະໂຫລ່ງໄຫມພື້ນໃຫມ່ສີຂຽວຫົວເປັດແພອີ
ໂປ້ພາດບ່າ ໃນມືມີດອກໄມ້ທຽນຄູ່ ຍ່າງມຸ່ງຫນ້າໄປຫາຕູບປູ່ ແຫວນ
ດ້ວຍອິລິຍະບົດທຸ່ນທ່ຽງ ໃບຫນ້າແຝງໄວ້ເຊິ່ງຄວາມຫວັງໃດຫນຶ່ງໃນ
ສ່ວນເລິກຂອງຫົວໃຈ; ລຸງເຄນຍ່າງໄປຮອດຕູບປູ່ແຫວນແລ້ວກໍ ນັ່ງ
ຄູ້ເຂົ່າລົງຢ່າງອ່ອນນ້ອມ ທ່າມກາງສຽງເຕັ້ນຂອງຫົວໃຈນັບ ເປັນ
ຮ້ອຍໆຫນ່ວຍເກືອບບໍ່ເປັນຈັງຫວະ, ລຸງເຄນຂີດກັບໄຟໄຕ້ທຽນ ຍົກ
ຂຶ້ນວາງໄວ້ຮ້ານບູຊາແລ້ວກໍຂາບລົງສາມເທື່ອ ຈາກນັ້ນລຸງເຄນກໍນັ່ງ
ນິ້ງພ້ອມທັງຈົ່ມມຸບໆຢູ່ຄາວຫນຶ່ງ ແລ້ວກໍຂາບລົງຕື່ມອີກສາມເທື່ອ, ພໍ
ລຸງເຄນອ່ວາຍຫນ້າອອກມາຫາລຸງທິດພົມ, ຄູບຸນຕາ ແລະຊາວບ້ານ
ເຊິ່ງລໍຖ້າຟັງຄຳຕອບຂອງປູ່ແຫວນຜ່ານລຸງເຄນຢູ່ນັ້ນ, ລຸງທິດພົມຈຶ່ງ
ເວົ້າຂຶ້ນສຽງດັງຟັງແຈ້ງວ່າ

" ພີ່ນ້ອງລູກຫລານເອີຍ ປູ່ແຫວນຕົກລົງໃຫ້ພວກເຮົາຕັດ ໄມ້

ຍາງໄດ້ແລ້ວ... ຂໍໃຫ້ລູກຫລານຮ່ວມແຮງຮ່ວມໃຈກັນປູກຕົ້ນ ຍາງ ລົງໃຫ້ພຽງພໍກັບການປຸກໂຮງຮຽນບ້ານເຮົາ "

ສ່ວນລຸງຄໍານັ້ນບໍ່ເວົ້າຫຍັງ ລຸກຍ່າງອອກມາຫາລຸງທິດພົມແລະ ຊາວບ້ານດ້ວຍຮອຍຍິ້ມທີ່ສົດຊື່ນຄືກັບວ່າ ປູ່ແຫວນໄດ້ບອກກັບລາວດັ່ງ ທີ່ລຸງທິດພົມເວົ້າໄປແລ້ວນັ້ນ.

ຂະບວນປູກຕົ້ນຍາງນັບແຕ່ນີ້ນັ້ນເປັນຕົ້ນມາ ທັງປູກທັງແບ່ງ ປັນ ຈັດຕັ້ງກັນເລື້ອຍກັນຂຶ້ນໄປໄວ້ດອນທາງບ້ານ, ເວລາເກືອບ ສອງ ເດືອນທີ່ຊາວບ້ານພ້ອມກັນປຸກສ້າງໂຮງຮຽນຫລັງໃຫມ່ກໍສໍາເລັດຮຽບ ຮ້ອຍດ້ວຍໄມ້ຍາງຈາກດອນຕູບປູ່ແຫວນ ຈົນເປັນທີ່ພໍອົກພໍໃຈ ຂອງ ຊາວບ້ານທຸກໆຄົນ.

ໃນມື້ເຮັດບຸນສະຫລອງໂຮງຮຽນຫລັງໃຫມ່ນັ້ນ ຊາວບ້ານໂນນຜູ້ ໃດກໍມີໃບຫນ້າຍິ້ມແຍ້ມແຈ່ມໃສທັງຄິດຂອບໃຈປູ່ແຫວນ ດ້ວຍ ຄວາມ ກະຕັນຍູຮູ້ຄຸນ, ສ່ວນປູ່ແຫວນນັ້ນ ເຖິງແມ່ນຊາວບ້ານໂນນຈະ ມ່ວນ ຊື່ນໃນມື້ບຸນສະຫລອງໂຮງຮຽນ ບາງຄົນຈົນເມົາແປເມົາແປດ ປານ ໃດກໍຕາມແຕ່ປູ່ແຫວນກໍໄດ້ຮັບແຕ່ພຽງຈອກນ້ອຍຈອກດຽວຕາມເດີມ. ເວົ້າແທ້ໆຖ້າຫາກບໍ່ທໍ່ປູ່ແຫວນຫວງແຫນເອົາໄວ້ ປານນີ້ບໍ່ຮູ້ວ່າໄມ້ຍາງ ຈະເຫລືອໃບໄວ້ໃຫ້ເຫັນຫລືບໍ່ ດົງໄມ້ຍາງຢູ່ດອນຫົວບ້ານທີ່ເຄີຍອຸດົມ ສົມບູນ ກໍຄົງຈະປ່ຽນສະພາບມາເປັນປ່າຊ້າຂອນຍາງໄປແລ້ວ !

. / .

# ຂອງຝາກ

* ເພີ່ນວ່າຜູ້ຂັບລົດເກັ່ງນັ້ນ ເຂົາຕາຍຈາກເຮົາໄປ ດົນແລ້ວ
ຕາຍເພາະຂັບລົດໄວ ຊ່ວງຊີງຂວາຊ້າຍ
ລົດເລີຍຫງາຍທາງປິ້ນ ແຫວນຄາງເຮັດຕາເຫລືອກ
ເຊືອກມັດຈູລາດລາກຫິ້ນ ບໍ່ກັບຟື້ນຕື່ນມາ ອີກແລ້ວ

* ສ່ວນວ່າເຈົ້າ ແລະ ຂ້ອຍ ໃຜບໍ່ເກັ່ງເກີນກະດັດ ດອກນາ
ຢ່າຫັດເປັນຕີນຜີ ຂີ້ຊິງແຊງໜ້າ
ພາດທ່າເສັຍທີແລ້ວ ຊິເອົາຄືນມັນຍາກ
ບໍ່ແມ່ນສາກລະຄອນແຕ່ງແຕ້ມ ຊິຕາຍຫລິ້ນໃຫ້ເພີ່ນຊົມ

* ເຖິງຈຸດໝາຍຊັກຊ້າ ພຽງສາມສີ້ວນາທີ
ດີກວ່ານອນໂຮງພະຍາບານ ແຄ່ງຫັກຂາຫ້ານ
ຄົນບູຮານຍັງເວົ້າ ສອນເຮົາໄວ້ວ່າ
ຢາກໄວໃຫ້ຄານຢາກນານໃຫ້ແລ່ນ
ແມ່ນເພີ່ນສອນສັ່ງໃຫ້ ເຮົາໄດ້ຮ່ຳຮອນ

* ກົດຈະລາຈອນລະບຽບຕັ້ງ ວາງອອກຄວນເຄົາລົບ
ຄົນຜູ້ຈົບມີຈັນຍາ ບໍ່ຝ່າຝືນເຫລີນເລີ້

ຄັນເຮົາເຜີພຽງນ້ອຍ ອຸບັດພອຍບັງເກີດ
ຟັງເຖິດເພື່ອນຂັບຂີ່ໃຫ່ຍນ້ອຍ ຄະຕິຕ້ອຍຕື່ມເຕືອນ ເຈົ້າເອີຍ

./.

# ຫລານສອນປູ່

* ຫລາຍອັນຄຳປູ່ເຈົ້າ     ຈາສັ່ງສອນຫລານ
ຫົວໃຈຮັກເຮືອນການຊານ     ພັດທະນາເມືອງບ້ານ
ຢ້ານວ່າຫລານລານດ໊     ໂລເລເລີຍລ່ວງ
ເປັນຫ່ວງຫລານຫນຸ່ມນ້ອຍ     ກະບອນເບື້ອງເຍືອງກະທຳ
* ທຸກຄຳທີ່ປູ່ເວົ້າ     ວອນກ່າວເຕືອນສະຕິ
ມີແຕ່ຄຸນຄວາມດີ     ປະເສີດສູງແສນຊັ້ນ
ຫລານຈຶ່ງເປັນຄົນຮູ້     ກະຕັນຍູແທນຕອບ
ປະກອບຕາມປູ່ຕ້ານ     ບໍ່ພານດ໊ລ່ວງເກີນ
* ເດີນຕາມທາງປູ່ຊີ້     ເທົ້າຊົ່ວຊີວາວາຍ
ຈະບໍ່ກາຍເກີນຄວາມ     ປູ່ປູນແປງຕ້ານ
ແຕ່ວ່າຫລານຊາຍຫລ້າ     ຢາກວາຈາດອນປູ່
ຜິດຖືກຂໍປູ່ເຈົ້າ     ອະໄພໃຫ້ແກ່ຫລານ
* ຢ່າວ່າຫລານດ໊ດ້ານ     ສອນປູ່ມັນຜິດຄອງ ປູ່ເອີຍ
ບໍ່ແມ່ນຫລານຈອງຫອງ     ຖ່ອຍພະຫຍາຫາເວົ້າ
ເພາະເຖົ້າມີຫລາຍເຖົ້າ     ຊະລາການກາຍແກ່

ເຖົ້າບໍ່ແລຮິດເຄົ້າ ສິນທຳເຂົ້າໃສ່ຕົວ ກໍມີ

* ບາງປູ່ກໍແຕ່ເວົ້າ ໂອ້ອວດຄູຍສະຫາວ

ຫາວແຕ່ຄຳພານຜິດ ໃສ່ຫານເລີງເລື້ອຍ

ບາດວ່າເຟືອຍຝອຍຂ້ອງ ກອງເຕັມຫລັງປູ່

ສັງບໍ່ປັດບໍ່ຍູ້ ໂວຍຮ້າຍໃສ່ແຕ່ຫລານ

* ຫລາຍອັນຈຸດອ່ອນເຈົ້າ ຂອງປູ່ຫາກຍັງມີ

ຕິແຕ່ຫລານພານຜິດ ປູ່ເອງແຮງເປັນຮ້າຍ

ເປັນຫ່ວງຫລາຍຢ້ານປູ່ກາຍເປັນເຖົ້າ ທິວງູໝາກເຂືອຂຶ້ນ

ຢ້ານຄືນເຂົາເວົ້າພື້ນ ບໍ່ສິມຊຸ້ນປູ່ຫລານນັ້ນມາ

. / .

# ຄວາຍແມ່ນາງ

ຝົນກາງເດືອນເກົ້າ ຕົກລົງມາຫ່າໃຫຍ່ພໍປານວ່າທ້ອງຟ້າ ຮົ່ວເອົາໂລດ, ຂ້ອຍນັ່ງຢູ່ຂ້າງງແມ່ ແປະກັບກອງໄຟທີ່ແມ່ດັງຢູ່ ກ້ອງຖຽງນາ ເພື່ອຢ້າງປາຕ້ອນ, ແມ່ທັງພ່ອງຍູ້ໂດ້ນຟືນເຂົ້າໃສ່ ໄຟທັງພ່ອງເລືອກປາໂຕອ່າວໃຫຍ່ແດກຂຶ້ນໃສ່ຫົງ ແມ່ເວົ້ານຳຂ້ອຍວ່າ

" ປາທີ່ຢ້າງນີ້ເອົາໄວ້ກິນດົນ ອີກຈັກໜ່ອຍກໍຮອດຍາມ ກ່ຽວເຂົ້າ ພໍ່ກໍຈະບໍ່ມີເວລາຫາປາ ວິນນຳແຕ່ວຽກເກັບກ່ຽວເຂົ້ານາ "

ແມ່ເວົ້າຍັງບໍ່ທັນສຸດຄວາມ ພໍ່ກໍພາຍກະຕ່າປາຕ້ອນມາຖອກ ໃຫ້ແມ່ຕື່ມອີກ ທັງເວົ້າກັບແມ່ວ່າ

" ຝົນຕົກມື້ນີ້ປາລົງຕ້ອນຫລາຍໆ ໃຫ້ເລືອກເອົາແຕ່ໂຕ ໃຫຍ່ຢ້າງ ສ່ວນໂຕນ້ອຍໃຫ້ເຮັດປາແດກ "

ເວົ້າແລ້ວພໍ່ກໍນັ່ງລົງຂ້າງໆຂ້ອຍ ພ້ອມທັງຈົກເອົາທໍ່ຢາອອກ ມາພົນສູບ, ພໍ່ງວາກພຸ້ນຫລຽວພໍ່ຄືກັບວ່າ ເພິ່ນພວມຊອກຫາອັນໃດ ອັນໜຶ່ງ ພໍ່ຖາມແມ່ວ່າ

" ບຸນຖົມໄປໃສຄືບໍ່ມາເອົາປານ້ອຍໄປເຮັດປາແດກໃສ່ໄຫໄວ້"

ບຸນຖົມແມ່ນເອື້ອຍຂອງຂ້ອຍ, ເວົ້າແທ້ຂ້ອຍກັບເອື້ອຍບຸນຖົມນັ້ນ

ອາຍຸຫ່າງກັນຕັ້ງ 6 ປີເພາະແມ່ເພິ່ນມີລູກຫ່າງຈົນຊາວບ້ານເວົ້າວ່າ
ແມ່ອາດຈະມີລູກຄົນດຽວ ແຕ່ພຽງເອື້ອຍບຸນຖົມທີ່ນັ້ນ ແຕ່ແລ້ວກໍ ມີ
ນ້ອຍມາຕື່ມອີກໜຶ່ງຄົນ ລວມເປັນສອງເອື້ອຍນ້ອງພໍດີ, ການທີ່ ພໍ່
ຖາມຫາເອື້ອຍບຸນຖົມຫວ່າງກີ້ນີ້ ເພາະບໍ່ເຫັນເອື້ອຍບຸນຖົມມາ ຊ່ວຍ
ແມ່ຫວ່າງພໍ່ຈະລົງໄປຢາມຕ້ອນເທື່ອທີສາມນີ້ ກໍຍັງເຫັນເອື້ອຍບຸນຖົມ
ນັ່ງເລືອກປາຊ່ອຍແມ່ຢູ່, ແມ່ໄດ້ຕອບພໍ່ວ່າ

" ບຸນຖົມໄປຍ້າຍຄວາຍແມ່ນາງເຂົ້າຮື່ມ ຝົນຕົກແຮງແນວ ນີ້
ນ້ອຍຢ້ານມັນໜາວ "

ພໍ່ໄດ້ຟັງແມ່ຕອບແນວນັ້ນກໍບໍ່ປາກຫຍັງຕື່ມ, ພໍ່ຟ້າວຕໍ່ກອກ ຢາ
ແລ້ວກໍຈັບເອົາກຸບແມງດາງຸມຫົວຍ່າງອອກໄປຈາກຖຽງນາພາຍ ກະ
ຕ່າມຸ່ງໜ້າໄປຫາລວງຕ້ອນຢູ່ທ້າງນາໃຮ່ຫລ້ອງ, ພໍ່ຄືຈະປອດນຳ ປາ
ລົງຕ້ອນຫລາຍ ຈິ່ງນັ່ງດົນບໍ່ໄດ້. ຄວາມຈິງກໍແມ່ນແນວນັ້ນແທ້ຝົນຕົກ
ທ່າໃດກໍບໍ່ມີປາລົງຕ້ອນປານທ່ານີ້.

ພໍ່ອອກໄປບໍ່ທັນດົນເອື້ອຍບຸນຖົມ ກໍກັບມາແຕ່ຍ້າຍຄວາຍແມ່ນາງ
ເຂົ້າຮື່ມ, ຄວາຍແມ່ນາງໂຕນີ້ມັນໄດ້ລູກ 3 ໂຕແລ້ວ ລູກໂຕ ກົກ
ຂອງມັນເປັນຄວາຍແມ່ ແອບໄຖນາໄດ້ແລ້ວ; ຂ້ອຍເຂົ້າໃຈແມ່ດີເວ
ລາເພິ່ນບອກໄປລ່າມຄວາຍຫລືຍ້າຍຄວາຍຍາມໃດ ເພິ່ນຈະເວົ້າວ່າ
ໄປລ່າມຫລືໄປຍ້າຍຄວາຍແມ່ນາງ. ຄວາມຈິງແລ້ວກໍໄປລ່າມຫລືໄປ
ຍ້າຍໝົດທັງແມ່ ທັງລູກມັນນັ້ນແຫລະ.

ເມື່ອເອື້ອຍບຸນຖົມມາຮອດຖຽງນາກໍຟ້າວຊ່ອຍແມ່ເລືອກປາຕ້ອນ
ນີ້ແມ່ກໍຄົງດີໃຈຫລາຍຄືກັນກັບພໍ່ ເພາະວ່າໄດ້ປາລົງຕ້ອນຫລາຍຜິດ
ປົກກະຕິ. ຕ້ອນລວງນີ້ພໍ່ເຮັດໃສ່ທ້າງນາໃຮ່ຫລ້ອງ, ນາໃຮ່ຫລ້ອງ ຢູ່

ທາງເບື້ອງປາຍນາ ເປັນໃຮ່ໃຫຍ່ກວ່າຫມູ່ຫມົດ ເຂົາກໍເປັນ ຫມາກ ເປັນຮວງດີກວ່າທຸກໆໃຮ່ ເພາະນາໃຮ່ຫລັ້ງນີ້ຝຸ່ນໂຮມກວ່າໃຮ່ອື່ນ, ນີ້ຝົນຕົກແຮງດີຈຶ່ງຊຸ່ມນາໃຮ່ຫລັ້ງພໍປານນ້ຳອອກແກ່ງເອົາໂລດ. ແມ່ໄດ້ເວົ້ານຳພວກຂ້ອຍວ່າ

" ນາໃຮ່ຫລັ້ງນີ້ຖອນບໍ່ເສຍແລ້ວບໍ່ເສຍ ສ່ວນຫລາຍແມ່ນ ໃຮ່ຫລັ້ງນີ້ແຫລະຄ້ຳທຸກຄ້ຳຍາກ ໄດ້ທັງປາທັງເຂົ້າ "

ແມ່ຄົງຈະຢາກໃຫ້ພວກຂ້ອຍເຫັນຄວາມສຳຄັນຂອງນາ ໃຮ່ ຫລັ້ງນັ້ນເອງ, ແມ່ເລົ່າຕໍ່ໄປວ່າ ກ່ອນຈະໄດ້ນາໃຮ່ຫລັ້ງນີ້ ກໍແທບ ລົ້ມແທບຕາຍທາງຢືນ ເວລານັ້ນຄວາຍແມ່ນາງກໍຫາເຜີກໄຖນາ ໄດ້ແຕ່ 2 ປີທີ່ນັ້ນ ທັງແຮງຄົນແຮງຄວາຍຊ່ອຍກັນ ສັບຊ່າວປ່າຫົວລີງ, ຫລັງຈາກບຸກເບີກສັບຊ່າວ ໄດ້ປີຫນຶ່ງ ພໍ່ກັບແມ່ກໍພາກັນຕີຄັນຄູ (ປ້ານ ຄັນນາໃຫຍ່) ຂຶ້ນຈຶ່ງວ່າພໍມີບ່ອນເຮັດລວງຕອນ.

ແມ່ເລົ່າຕໍ່ໄປວ່າ ເຖິງຂອບເຮັດນາມາປີໃດ ກໍຄຶດອຸກຄຶດ ອັ່ງເພາະນາ່ທັງຫນຶ່ງມີແຕ່ຄວາຍແມ່ນາງໂຕດຽວຄ້ຳຄາດຄ້ຳໄຖ ຊ້ຳບໍ່ພໍນາໃຮ່ຫລັ້ງພັດເປັນນາຊ່າວໃຫມ່, ມີປີຫນຶ່ງຫາກໍເລີ່ມໄຖນາຮຸດ ກໍບັງເອີນເກີດຄວາຍແມ່ນາງເຈັບເປັນປາກເປື່ອຍລີງເລັບ ຄັນສັດຕະວະແພດເພີ່ນບໍ່ໄວແດ່ຍາມບໍ່ໄດ້ເຮັດຮອດນາຊ້ຳ. ຂ້ອຍພັດສະ ລອກກອກຖາມແມ່ວ່າ

" ເປັນຫຍັງຈຶ່ງໃສ່ຊື່ຄວາຍແມ່ນາງ "

ແມ່ແນມເບິ່ງຫນ້າຂອງຂ້ອຍກັບເອື້ອຍບຸນຖົມແລ້ວ ເພີ່ນກໍ ບອກວ່າ

" ທຳອິດບໍ່ໄດ້ເອີ້ນຄວາຍແມ່ນາງດອກເອີ້ນວ່າຄວາຍດຳເພາະ

ໂຕມັນດຳ ຕໍ່ມາມັນໄດ້ລູກອອກມາເລີຍເອີ້ນວ່າຄວາຍແມ່ນາງເພາະ ລູກມັນເປັນໂຕແມ່."

ເອື້ອຍບຸນຖົມພັດສົ້ຖາມແມ່ຕື່ມວ່າ

" ຄວາຍແມ່ນາງນີ້ ແມ່ຊິດີນປານໃດຈິ່ງຄ່ອຍເຖົ້າປານນີ້ "

ແມ່ຢາຍປາໃສ່ທົ່ງໄປນຳ ເລົ່າເລື່ອງຄວາຍແມ່ນາງສູ່ພວກຂ້ອຍ ຟັງນຳ, ແມ່ໄດ້ຕອບເອື້ອຍບຸນຖົມວ່າ

" ຄວາຍແມ່ນາງແມ່ນຄວາຍມູນ ທີ່ພໍ່ເຖົ້າ (ພໍ່ຂອງແມ່) ແບ່ງ ປັນໃຫ້ພ້ອມກັບນາທົ່ງນີ້ ຫລັງຈາກແມ່ໄດ້ແຕ່ງດອງກັບພໍ່ພວກເຈົ້າໄດ້ ໜຶ່ງປີ ເວລານັ້ນຄວາຍແມ່ນາງຫາກໍ່ອອກນົມບໍ່ພໍ 6 ເດືອນຊໍ້າ, ພໍ່ ກັບແມ່ໄດ້ເອົາໃຈໃສ່ລ້ຽງມັນມາຈົນແອບຄາດແອບໄຖໄດ້ "

ແມ່ຢຸດເວົ້າຄາວໜຶ່ງ ພ້ອມທັງປິ້ນປາໂຕໃດອ່າວແທ່ງຂາງໜຶ່ງ ແລ້ວປີ້ນເອົາຂ້າງໃຫມ່ລົງຫາອາຍໄຟ ແລວແມ່ກໍ່ເວົ້າຕື່ມ.

" ບໍ່ໃຫ້ມັນເຖົ້າຮັດແນວໃດ ໂຕລູກກົກຂອງມັນກໍ່ເກີດປີ ດຽວ ກັບບຸນສົມ "

ແມ່ເວົ້າຫມາຍເຖີງຂ້ອຍວ່າເກີດປີດຽວກັນກັບລູກ ຄວາຍແມ່ນາງ ເອື້ອຍບຸນຖົມເລີຍໄສໄຍຂ້ອຍວ່າ

" ເປັນສ່ຽວກັນກັບຄວາຍເລີຍ "

ຄຳເວົ້າຂອງເອື້ອຍບຸນຖົມ ເຮັດໃຫ້ຂ້ອຍກັບແມ່ພາກັນຫົວຍຸ້ມ ໆ ໂດຍສະເພາະຂ້ອຍເອງເປັນສີເຂີນໆວາດໃດວາດໜຶ່ງ ເມື່ອ ຖືກ ເອື້ອຍບຸນຖົມເວົ້າຢອກວ່າ ເປັນສ່ຽວກັບຄວາຍ.

ແມ່ເວົ້າຕໍ່ໄປວ່າ ດຽວນີ້ຄວາຍແມ່ນາງກໍ່ສະບາຍເບົາເຫື່ອເບົາ ແຮງມັນຫລາຍແລ້ວ ເພາະມັນມີລູກຂອງມັນຊ່ອຍຄາດຊ່ອຍໄຖ, ບໍ່ຄື

ແຕ່ກ່ອນໆມີແຕ່ມັນໂຕດຽວ ບາງປີຈຶ່ງຊີບັບຖືກຂ້າງ ໄດ້ເພາະມັນຈ່ອຍ ຂ້ອຍຈຶ່ງຖາມແມ່ວ່າ

" ຫວ່າງນີ້ດຳນາໃຊ້ຫລັງຫັ້ນ ເຮົາຍັງເຫັນພໍ່ເອົາຄວາຍ ແມ່ນາງໄປໄຖ ໄປຄາດຢູ່ "

ແມ່ໄດ້ອະທິບາຍໃຫ້ພວກຂ້ອຍໄດ້ຮູ້ວ່າ

"ແມ່ນແທ້ ນາໃຊ້ຫລັງແມ່ນໃຊ້ສຳຄັນ ພໍ່ເຈົ້າຈຶ່ງເອົາຄວາຍແມ່ນາງໄຖ ແລະ ຄາດ ເພາະວ່າຄວາຍແມ່ນາງມັນມີຄວາມຊຳນານ ຄອງຄາດຄອງໄຖ ມັນບໍ່ມັກຮານ, ນາໃຊ້ຫລັງຕ້ອງໄຖລະອຽດຄາດໃຫ້ແຫລກເວລາດຳມັນຈຶ່ງງາມກ່ອນຫມູ່ຫມິດທຸກໄຮ່"

ຂ້ອຍບຸນຖົມເວົ້າຂັດຈັງຫວະຂອງແມ່ຂຶ້ນວ່າ

" ເອົາລູກຂອງມັນໄຖແທນກໍໄດ້ນ່າ "

" ໄດ້ແທ້...ແຕ່ຄວາມຊຳນິຊຳນານສູ້ແມ່ມັນບໍ່ໄດ້ ພໍ່ເຈົ້າເອົາໄຖເທື່ອຫນຶ່ງແລ້ວ ຮານເປັນແຖວໆ" ຂ້ອຍຈຶ່ງເວົ້າເຂົ້າຂ້າງ ທາງຝ່າຍແມ່ວ່າ

" ບໍ່ເອົາມັນໄຖແຫລະ...ອີຕົນມັນຕັ້ງແຕ່ເຮົາເອົາມັນອອກໄປລ່າມ ເຮົາໂດດຂຶ້ນຂີ່ຫລັງຂອງມັນໆ ກໍຍັງຍ່າງຍາກ"

ແມ່ແນມເບິ່ງຫນ້າຂ້ອຍ ແລະ ຂ້ອຍບຸນຖົມອີກເທື່ອຫນຶ່ງ ແລ້ວແມ່ກໍເວົ້າອອກດ້ວຍຄວາມເປັນຫ່ວງເປັນໄຍນຳຄວາຍແມ່ນາງ ເຊິ່ງແມ່ຖືວ່າແມ່ນມໍລະດົກຕົກທອດມາຈາກພໍ່ເຖົ້າແມ່ ເວົ້າສຽງພອຍໆວ່າ

" ຄັນຄວາຍແມ່ນາງເປັນຫຍັງໄປ ແມ່ຕ້ອງເສຍໃຈຫລາຍ...ເຮົາມີນາໃຊ້ຫລັງມີປາຕອນໄດ້ຢູ່ໄດ້ກິນ ກໍແມ່ນຍ້ອນເຫື່ອແຮງງານຂອງຄວາຍແມ່ນາງເປັນຜູ້ບຸກເບີກເອົາໃຫ້ "

ແມ່ຍັງໄດ້ເວົ້າເປັນເຊີງຝາກຄວາມຫວັງຕັ້ງໃຈສູ່ພວກຂ້ອຍ ຟັງວ່າ ປີໜ້ານາຟ້າໃໝ່ແມ່ຈະບໍ່ຍອມເອົາຄວາຍແມ່ນາງ ລົງໄຖລົງຄາດນາໄຮ່ຫລັ້ງອີດູຕົນມັນ, ແມ່ວ່າຈະຮິບໂຮມເງິນ ເພື່ອ ເອົາໄວ້ຈ້າງລົດໄຖຂອງຕາແສງທົດພາ ທີ່ເພິ່ນຫາຮັບຈ້າງໄຖນາໃຫ້ໄທບ້ານເຮົາ ແມ່ວ່າຈະຈ້າງສະເພາະແຕ່ໄຮ່ຫລັ້ງເທົ່ານັ້ນ ສ່ວນໄຮ່ອື່ນໆຈະ ຄ່ອຍເອົາລູກຄວາຍແມ່ນາງໄຖ-ຄາດເອົາເອງ.

ຄວາຍແມ່ນາງ ມັນເປັນຄວາຍແມ່ຄອກທີ່ຜ່ານຜ່າອຸປະສັກ ວຽກງານມາຢ່າງໜ້າຊົມຊື່ນຍິນດີ, ມັນເປັນຄວາຍທີ່ຮູ້ໜ້າຮັກ ມັນ ບໍ່ເຄີຍຮ້າຍເຄີຍຊົນໃຜຈັກເທື່ອ, ມັນມີຄວາມສັດຊື່ຕໍ່ເຈົ້າຂອງ ເວລາມັນກິນຫຍ້າເລາະຄັນແຫນາ ມັນບໍ່ເຄີຍຈະກັດກິນຕົ້ນເຂົ້າແມ່ນແຕ່ຕົ້ນດຽວ, ຊີວິດຂອງຂ້ອຍ ແລະ ເອື້ອຍບຸນຖົມ ຕະຫລອດພໍ່ກັບແມ່ ກໍມີສ່ວນເປັນໜີ້ບຸນຄຸນຂອງມັນ, ບັນບໍ່ພຽງແຕ່ຈະຊ່ວນາໄຮ່ຫລັ້ງແລະຮັບພາລະໃນການເຮັດນາແຕ່ລະປີ, ຄວາຍແມ່ນາງມັນຍັງໄດ້ ອອກລູກເອົາໄວ້ໃຫ້ຄອບຄົວຂອງຂ້ອຍເຖິງ 3 ໂຕ ແຕ່ມັນກໍບໍ່ເຄີຍ ຈະຮຽກຮ້ອງຄຸນຄ່າຫລືວ່າ ຄ່າປະກັນໄພໃດໆທັງສິ້ນ. ເຖິງແມ່ນວ່າ ປີນີ້ມັນຈະເຖົ້າແກ່ ແຕ່ມັນກໍຍັງຫາວຫັນພໍສູ້ວຽກສູ້ງານໄດ້ສ່ວນໃດສ່ວນໜຶ່ງ, ແຕ່ແມ່ຂອງຂ້ອຍຄຶດວ່າ ມັນເຄີຍສ້າງຜົນປະໂຫຍດໃຫ້ຫລາຍຟ້າຫລາຍປີແລ້ວ ສົມຄວນໃຫ້ມັນໄດ້ມີອິສະລະພາບໃນບັ້ນປາຍ ຂອງຊີວິດຂອງມັນ.

24/VII
ຫ້າມຈຳໜ່າຍ

# ເຫລົ້າ

* ສຸລາແປວ່າເຫລົ້າ
ຍາມອຸກຍໍລິນລົງ
ຄິດວ່າຄວາມຫມອງເສົ້າ
ລິນທໍ່ໃດພັດແຮ່ງເອົ້າ

* ເມົາຈົນເລັງລ່ຳມ້າ
ຍາມຍົກຄໍຍໍຄິງ
ຍາມລົມໂອບເວົ້າ
ເຫລືອຕາຍແຕ່ອວດໂອ້

* ຫລາຍເທື່ອຊິມດື່ມເຫລົ້າ
ເງິນໃນຖົງຈົກຊະ
ເສີມນິໄສເສັຍເຂົ້າ
ຄົນເວົ້າດີກໍວ່າຮ້າຍ

* ຄັນໄດ້ພົບຫມູ່ເຫລົ້າ
ປະປ່ອຍຫມົດການງານ
ໃຜບໍ່ແລດູຫນ້າ

ດື່ມແລ້ວເຫລົ່າລືມທຸກ ວ່າເດ!
ສົ່ງສຽງເປັນເພງຮ້ອງ
ຊີບົກເບົາບາງບົ່ນ
ຄວາມເສົ້າຍິ່ງຕື່ມເຕັງ
ພັດເຫັນວ່າເປັນນົກ
ອິ່ງວຽນເຊລົ້ມ
ຫນັກເບົາບໍ່ຮູ້ເມື່ອ
ຄູຍໂມ້ໂພ່ນ້ຳລາຍ
ສະຫມອງເຫລົ່າມຶນງົງ
ບໍ່ຫ່ວງຫາລາຍໄດ້
ຍາມເມົາເປັນຕາຫນ່າຍ
ຈາຂ້າດ່າປະຈານ
ວຽກບໍ່ກ່າວຫົວຊາ
ຂາດຄຸນຄົນແທ້
ຈະໂສພາກໍຕາມຊ່າງ

ຍັງວ່າຄົນຂີ້ເຫລົ້າ ເຂົາເວົ້າກ່າວຂ້ອນ

* ເພິ່ນວ່າໂທດນ້ຳເຫລົ້າ ຫນັກ ເນົ່າຢູ່ໃນກາຍ

ມັນທຳລາຍເຮືອນໂສມ ຮູບຊົງແປງປັ້ນ

ເສັຍຊັບສິນເງິນຊື້ ສຸລາເນົາເພົາຮ່າງ

ສັງບໍ່ຊື້ຕ່ອນຊີ້ນ ມາຈ້ຳແຈ່ວບອງ

* ຂໍເຊີນຊວນສ່ຳນ້ອງ ໄວຫນຸ່ມຊຸມຄະນອງ

ໃຫ້ໝັ້ນປອງສຶກສາ ຮ່ຳຮຽນຂຽນແຕ້ມ

ຢ່າລຳແນມນຳເຫລົ້າ ຂອງເນົາມັນຊິເນົ່າ

ໃຜຫ່ອນເອົາຂີ້ເຫລົ້າ ແປງບ້ານກໍ່ເມືອງ ເຈົ້າເອີຍ

./.

## ຂອງຄະລຳ

* ທຳມະດາຄົນກິນເຂົ້າ ປູປາຊີ້ນຕ່ອນ
ໃຜຫ່ອນກິນຫ່ອນໄມ້ ຕາງເຂົ້າເຜືອກມັນ
* ຫັນທາກແມ່ນຍອດແຍ້ ຍອດບຸ່ນຍອດຫວາຍ
ຫລາຍຄົນເຮົາກໍເຄີຍກິນ ມ່ອນຄືລີງທ້ອງ
ບໍ່ຫ່ອນຄາຄໍ້ຂອງ ກິນຜັກນາງອາງຫມີ
ເຕັມທີແຕ່ຜູ້ກິນຕົ້ນໄມ້ ຊິຂວາງໄສ້ສຽບພຸງ
* ບາງຄົນກິນໄມ້ຈົນທ້ອງປຸ້ງ ທົວພຸງສິກເພາະມັນແຂງ
ເຫລືອແຮງອີມອີນກີນ ລ່ອງລີງລຳໄສ້
ຫລາຍເດືອນຫລາຍປີໄດ້ ກິນຫລາຍເລີຍທ້ອງໃຄ່
ເພາະໄມ້ຫລາຍແມ້ດກ້ອນ ຢູ່ໃນທ້ອງກີ້ງກອງ
* ບາດເຈົ້າເຈັບປວດທ້ອງ ຍາມໄມ້ເບື່າໃນກະເພາະ
ໃຜເດບໍ່ຊິຫາຢາ ປີ້ນປິວຄົວຄັ້ນ
ບໍ່ທັນມີໃຜຄົ້ນ ປຸ້ງຢາປົວໄມ້ທ່ອນ
ຢ້ານແຕ່ນອນຮໍ່າໄຫ້ ນ້ຳຕາຍ້ອຍຍ່າວຍົມ
* ຫລາຍຄົນຈົນແຈບຈ້ອຍ ຄອຍຕັ້ງແຕ່ວັນວາຍ

ກິນໄມ້ຕາງອາຫານ ທ່ານຈິ່ງບິນຫາຫ້ອງ
ກາຍເປັນຄືນຂວາງບ້ານ ຜານເມືອງມຸດມອດ
ຫລົ້ມບາດຈອດເພາະທ່ອນໄມ້ ມັນຂວາງໄສ້ລ່ອງບໍ່ລົງ ແລະນໍ

./.

# ແຮງໃຈ

ນັບແຕ່ທິດພັດໄດ້ຮັບເລືອກຕັ້ງໃຫ້ເປັນກວານບ້ານຄົນໃໝ່ໄດ້ແຕ່ພຽງປີປາຍທີ່ນັ້ນ ປະກົດວ່າໃບໜ້າຂອງໝູ່ບ້ານຜາຄຳກໍມີອັນ ຕ່າງຂຶ້ນນຳທຸກໆເດືອນ, ທິດພັດບາງຄົນກໍເອີ້ນວ່າມະຫາພັດ ຄວາມ ຈິງແລ້ວເອີ້ນທິດພັດຖືກຕ້ອງກ່ອນ ເຖິງແມ່ນທິດພັດຈະໄດ້ບວດໄປ ຮຽນໜັງສືຢູ່ໃນເມືອງກໍຈິງ ແຕ່ທິດພັດກໍສອບໂຮງຮຽນປາລີປະລິຍັດຕິທຳໄດ້ພຽງແຕ່ນັກທຳໂທ ບໍ່ທັນເຖິງຂັ້ນເອີ້ນມະຫາເທື່ອ.

ທິດພັດແມ່ນຄົນເກີດໄດ້ໃຫຍ່ສູງຢູ່ກັບບ້ານຜາຄຳນີ້ເອງ, ເມື່ອລາວສິກອອກຈາກວັດກໍກັບມາຢູ່ບ້ານຜາຄຳ ໄດ້ແຕ່ງດອງກັບນາງຄຳປິ່ນລູກສາວດຽວຂອງຈານຈູມ ແລະ ປ້າຕູ້ຍ, ຈານຈູມຖືວ່າແມ່ນນັກປາດອາຈານຜູ້ສຳຄັນຊາວບ້ານຜາຄຳໃຜກໍນັບໜ້າຖືຕາ ວຽກ ບ້ານວຽກວັດຖ້າຂາດຈານຈູມແລ້ວພິຍານແກງບໍ່ໃສ່ແປງນົວເອົາໂລດເປັນຈືດໆວາດໃດວາດໜຶ່ງ, ທິດພັດເອງຖ້າແມ່ນບວດແຕ່ຢູ່ວັດບ້ານຜາຄຳບໍ່ໄດ້ໄປຮຽນຈົນໄດ້ນັກທຳໂທ ຈ້າງກໍບໍ່ໄດ້ເປັນລູກເຂີຍ ຈານຈູມດອກ.

ບ້ານຜາຄຳຊຶ່ນ້ຖ້າ ໄດ້ຍິນແຕ່ຊື່ບໍ່ໄດ້ໄປເຫັນ ດ້ວຍຕາຄົງຈະ ຄິດ

ວາດພາບເດົາເອົາວ່າ ເປັນໝູ່ບ້ານທີ່ມີຄວາມອຸດົມສົມບູນສົມຊື່ ສົມ ສຽງ ຄວາມເປັນຈິງແລ້ວກ່ອນຊິໃສ່ຊື່ວ່າບ້ານພາຄຳນັ້ນບ້ານນີ້ຕັ້ງຢູ່ພື້ນ ຕີນພູ ພໍຍາມຕາເວັນບ່າຍລົງແລງແສງແດດຈະສາດສ່ອງໃສ່ໜ້າຜາ ເປີ້ນພູ ເວລາແນມເບິ່ງເປັນສີເຫລືອງນ່າຍລ່າຍ, ຜູ້ເປັນເຖົ້າ ແກ່ ພາມາຕັ້ງບ້ານຢູ່ນີ້ ເມື່ອ 50-60 ປີກ່ອນເລີຍໃສ່ຊື່ວ່າ "ບ້ານ ຜາ ຄຳ ".

ທີ່ຕັ້ງຂອງໝູ່ບ້ານພາຄຳຢູ່ຫ່າງໄກສອກຫລີກຈາກໝູ່ບ້ານອື່ນໆພໍ ສົມຄວນ, ອາຊີບຂອງຊາວບ້ານພາຄຳເຮັດທັງໄຮ່ ທັງນາແຕ່ ສ່ວນ ຫລາຍແມ່ນເຮັດນາ. ຄົນບ້ານອື່ນທີ່ຢູ່ເຂດຕາແສງດຽວກັບບ້ານ ຜາ ຄຳນີ້ ເຂົາເຈົ້າຈະມີໂອກາດໄປຫລິ້ນບ້ານພາຄຳກໍພຽງແຕ່ຍາມມີບຸນ ສົມກິນທານປາງໃຫຍ່ໆເຊັ່ນປາງບຸນພະແຫວດເທົ່ານັ້ນ. ເບິ່ງແລ້ວຄື ກັບວ່າໝູ່ບ້ານພາຄຳໄດ້ຖືກຕັດອອກຈາກຄວາມສຳພັນໄມຕີກັບ ໝູ່ ບ້ານຕ່າງໆທີ່ຢູ່ອ້ອມແອ້ມທັງນີ້ຍ້ອນການຄົມມະນາຄົມລະຫວ່າງ ບ້ານ ພາຄຳໄປສູ່ບ້ານອື່ນໆນັ້ນ ມັນທຸລະກັນດານ ເປັນເສັ້ນທາງນ້ອຍໆສະ ເພາະຄົນຫຽວໄປມາໃນບາງລັ້ງບາງຄາວ.

ເມື່ອຊາວປີກ່ອນພຸ້ນ ເຄີຍມີພວກພໍ່ຄ້າໄມ້ເຖື່ອນທີ່ມືອິດທິພົນ ມືດ ຫມູນຫລັງ ໄດ້ເອົາລົດແກ່ໄມ້ທ່ອນຂຶ້ນເຂົາໄປລັກຕັດໄມ້ (ຄວາມຈິງ ຕັດແບບທຳທາຍ) ແຕ່ກໍຂຶ້ນເຂົ້າໄປຮອດແຕ່ແຄມຫ້ວຍບ້ານເທົ່າ ນັ້ນ ບໍ່ສາມາດຈະຂ້າມຫ້ວຍບ້ານເຂົ້າໄປສູ່ບ້ານພາຄຳໄດ້. ຫ້ວຍບ້ານແມ່ນ ລຳຫ້ວຍສາຍໜຶ່ງທີ່ໄຫລມາຈາກຕີນພູພາຄຳ ລຽບເລາະຕາມ ໝູ່ ບ້ານພາຄຳລົງໄປແຕ່ລຳຫ້ວຍບ້ານໄປຕົກໃສ່ບ່ອນໃດຊາວບ້ານພາຄຳ ບໍ່ມີໃຜຮູ້.

ຫ້ວຍບ້ານແມ່ນສາຍເລືອດທີ່ສຳຄັນເສັ້ນໜຶ່ງທີ່ຫລໍ່ລ້ຽງຊີວິດຂອງຊາວບ້ານຜາຄຳມາ ໄດ້ເກືອບໜຶ່ງສະຕະວັດແລ້ວ, ນ້ຳຢູ່ລຳ ຫ້ວຍບ້ານເຖິງຈະມີກຳເນີດມາຈາກຕີນພູຜາຄຳກໍຈິງ ແຕ່ໃນລະດູແລ້ງນ້ຳກໍຈະຂາດເປັນວັງນ້ອຍວັງໃຫຍ່ ນ້ຳທີ່ຊຶມໄຫລອອກຈາກຕີນພູກໍຄ່ອຍໆຊຶມພໍບໍ່ໃຫ້ຫ້ວຍບ້ານແຫ້ງເທົ່ານັ້ນ.

ພວກພໍ່ຄ້າໄມ້ເຖື່ອນຕັດໄມ້ໄດ້ແຕ່ 2-3 ຖ້ຽວກໍເລີກລາ ໄປເພາະຫນໍ່ສິງຫົວໜ້າບໍລິສັດເກີດເປັນໄຂ້ປ່າ ເກືອບເອົາຊີວິດບໍ່ລອດເຖິງຂັ້ນປ່ວງຕາຫລືອກຕາຊຶ້ນໄປດູ ນໍເຂົາວ່າຜີຢູ່ຜາຄຳຈະຫັກຄໍມັນກິນ ຈຶ່ງເຮັດໃຫ້ຫນໍ່ສິງຍົກເລີກກິດຈະການໄປຈາກເຂດນີ້, ທາງລົດແກ່ໄມ້ກໍຮົກຄືນ ເຮັດໃຫ້ທາງໄປມາຂອງຊາວບ້ານຜາຄຳກັບສູ່ ສະພາບດົງດິບຕາມທຳມະຊາດ, ແຕ່ຊາວບ້ານຜາຄຳກໍບໍ່ເຄີຍຈະເດືອດຮ້ອນເຄືອງໃຈນຳຫົນທາງໄປມາ ເຂົາເຈົ້າຊິນເຄີຍກັບທຳມະ ຊາດມາແລ້ວຫລາຍຊຸ່ນຄົນ.

ສະໄຫມທິດຄູນເປັນກວານບ້ານ ກໍບໍ່ເຄີຍສົນໃຈກັບການພັດທະນາຫົນທາງຫລືວ່າໝູ່ບ້ານຜາຄຳແຕ່ຢ່າງໃດ ປ່ອຍໃຫ້ມັນເປັນ ໄປຕາມຍະຖາກຳຂອງມັນ, ທິດຄູນມີແຕ່ເຮັດໜ້າທີ່ຄອຍຮັບໃຊ້ ພວກເຈົ້ານາຍທີ່ເຂົາໄປວ່ຽກທາງການໃນບາງຄັ້ງບາງຄາວ ໂດຍ ສະເພາະແມ່ນໃນຍາມຈະມີການສະມັກເລືອກຕັ້ງຜູ້ແທນລາສະດອນມີ ຜູ້ສະມັກເກືອບທຸກໜ້າບິນຕາຍເຂົ້າໄປບ້ານຜາຄຳແລ້ວໂຄສະນາ ຫາສຽງວ່າ ຖ້າໄດ້ຮັບເລືອກເປັນຜູ້ແທນ ຈະພັດທະນາບ້ານຜາຄຳ ຈະຕັດທາງຈະເອົານ້ຳຢາການມາໃຫ້, ແຕ່ພໍໄດ້ເປັນຜູ້ແທນແລ້ວ ກໍເປັນປານຫອຍໄຂ້ ບ້ານຜາຄຳກໍຍັງແມ່ນບ້ານຜາຄຳຄືເກົ່າ.

ທິດພັດ ໄດ້ຮັບການເລືອກຕັ້ງຈາກຊາວບ້ານພາຄຳໃຫ້ເປັນກວານບ້ານແທນທິດຄູນ ດ້ວຍສຽງເປັນເອກະສັນ, ສາເຫດທີ່ເຮັດໃຫ້ ທິດພັດ ໄດ້ຖືກຊາວບ້ານຄັດເລືອກເອົາເປັນກວານບ້ານນັ້ນອາດຈະເນື່ອງມາຈາກຄວາມເຫລື້ອມໃສສັດທາ ໃນໂຕຂອງທິດພັດເອງເພາະເຄີຍບວດເຄີຍຮຽນຈົນບາງຄົນເອີ້ນວ່າ ມະຫາພັດກໍມີ, ອັນຫນຶ່ງອີກອາດຈະເປັນຍ້ອນທິດພັດແມ່ນລູກເຂີຍຫົວແກ້ວຫົວແຫວນຂອງຈານຈູມ ນັກປາດອາຈານປະຈຳຫມູ່ບ້ານພາຄຳ ເຊິ່ງຊາວບ້ານນັບຫນ້າຖືຕາ , ເປັນອັນວ່າຊາວບ້ານພາຄຳຍິ່ງຫນ້າບາດດຽວ ໄດ້ນົກສອງໂຕຄື ວຽກບ້ານວຽກເມືອງກໍແມ່ນທິດພັດນຳພາ ວຽກວັດວາສາສະຫນາຮີດຄອງປະເພນີກໍແມ່ນຈານຈູມນຳພາຢູ່ກ່ອນແລ້ວ.

ເວົ້າແທ້ທິດພັດນັ້ນ ເຖິງຈະບໍ່ໄດ້ຮຽນສູງ ແຕ່ເວລາຮຽນຢູ່ ນັ້ນທິດພັດກໍສົນໃຈອ່ານປຶ້ມ ຕຳຫລັບຕຳລາ ແລະ ພາກຄວາມຮູ້ວິຊາການຫລາຍອັນ ຈຶ່ງມີສາຍຕາເບິ່ງກວ້າງເຫັນໄກພໍສົມຄວນ, ຖ້າສົມທຽບໃສ່ກັບທິດຄູນ ກວານບ້ານຄົນກ່ອນກໍມີອັນແຕກຕ່າງກັນ ຈົນທຽບບໍ່ຕິດພຸ້ນແຫລະ ອີກອັນຫນຶ່ງທິດພັດກໍຍັງຫນຸ່ມນ້ອຍກ່ອນທິດຄູນ.

ຄ່ຳຄືນນັ້ນສຽງກອງໂຮມດັງຂຶ້ນຢູ່ວັດ ຕາມແຜນຂອງທິດພັດ , ທິດພັດກຳຈຸດພິເສດຂອງຊາວບ້ານໄດ້ດີວ່າ ຖ້າຫາກຕີກະລໍປະ ຊຸມ ສ່ວນຫລາຍກໍຈະມີແຕ່ຜູ້ຊາຍທີ່ເປັນພໍ່ຢາວພໍ່ເຮືອນເທົ່ານັ້ນມາປະຊຸມ, ຖ້າຕີກອງໂຮມຢູ່ວັດນັບແຕ່ຜູ້ບ່າວຜູ້ສາວເຖິງຜູ້ເຖົ້າຜູ້ແກ່ແມ່ນໄປໂຮມກັນເກືອບຄົບຫນ້າຄົບຕາ ດັ່ງນັ້ນທິດພັດຈຶ່ງໃຫ້ຄູບາຕີກອງໂຮມບອກປະຊຸມໃຫ້.

ຢູ່ທີ່ແຈກວັດບ້ານພາຄຳ ຄືນນັ້ນຈົນແຫນ້ນທັງຊາວບ້ານ ແລະ ຄູ

ບາອ້າຍຈີວ ໄດ້ພ້ອມພຽງຮຽງໜ້າກັນມາໂຮມປະຊຸມ ທ່ານ ກາງ ແສງສະຫວ່າງຂອງຕະກຸຮຽງມີງຊົງ (ໂຄມພະຍຸ) ທ່ານກາງ ສຽງ ເວົ້າຈາໂອລົມສົນທະນາ ທ່ານກາງສຽງຫົວຮອຍຍິ້ມຂອງບ່າວສາວ. ຢູ່ບ້ານພາຄຳມັ້ນຖືວ່າການໄດ້ມີໂອກາດລົງໄປໂຮມກັນຢູ່ວັດນັ້ນ ແມ່ນ ເລື່ອງສຳຄັນ, ວັດແມ່ນຈຸດເຕົ້າໂຮມເປັນສະຖານທີ່ສັກກາລະບູ ຊາ ຂອງຊາວບ້ານ ເຂົາເຈົ້າບໍ່ເຄີຍ ແລະ ກໍບໍ່ກ້າຈະເຮັດສິ່ງໜຶ່ງ ສິ່ງ ໃດທີ່ຜ່າຝືນຕໍ່ຮີດຄອງປະເພນີສິນທຳຢູ່ພາຍໃນຂອບເຂດຂອງວັດ ເວ ລາຢູ່ວັດເຂົາເຈົ້າຈະພ້ອມກັນເຮັດແຕ່ຄວາມດີ ເຮັດແຕ່ສິ່ງຈະ ນ້ອມ ຊຶ່ນຢູ່ໃນຂອບເຂດຂອງສິນທຳ. ທິດພັດຍົກມືໄຫວ້ຄູບາທີ່ນັ່ງເປັນແຖວ ຖ້ານເທິງຂອງທໍແຈກ ແລ້ວກໍອວາຍໜ້າມາຫາງຊາວບ້ານ ທິດພັດ ເວົ້າຂຶ້ນວ່າ

" ຜ່ານມາພວກເຮົາເຄີຍປະຊຸມກັນຢູ່ເຮືອນຂອງຂ້າພະ ເຈົ້າ ເອງ ມື້ນີ້ໄດ້ມາໂຮມປະຊຸມຢູ່ວັດເຫັນວ່າມັນເປັນສະຖານກວ້າງຂວາງ ດີ ແລະ ໂຮມປະຊຸມມື້ນີ້ ກໍແມ່ນເລື່ອງສຳຄັນກວ່າທຸກເທື່ອທີ່ຜ່ານມາ ... ວຽກນີ້ກ່ຽວຂອງກັບໝົດທຸກໆຄົນ ທັງນ້ອຍທັງໃຫຍ່ທັງ ຊາວ ບ້ານ ແລະ ຄູບາອາຈານຢູ່ວັດກໍມີສ່ວນຮ່ວມກັນ. "

ທິດພັດຢຸດເວົ້າຄາວໜຶ່ງ ເຮັດໃຫ້ຊາວບ້ານຫລາຍຄົນຕັ້ງບັນຫາ ສິ່ງໃສ່ຢູ່ໃນໃຈ. ບາງຄົນກໍຄິດວ່າອາດຈະແມ່ນເລື່ອງບຸນພະເຫວດປີ ນີ້ຕອງເຮັດໃຫຍ່ເປັນພິເສດ ເພາະນັບແຕ່ທິດພັດເປັນກວານບ້ານມາ ນີ້ຍັງບໍ່ທັນໄດ້ພາເຮັດບຸນພະເຫວດເທື່ອ. ທິດພັດຈຶ່ງເວົ້າຕື່ມວ່າ

" ເລື່ອງທີ່ຈະນຳມາປຶກສາຫາລືກັນແມ່ນກ່ຽວກັບວຽກການ ພັດ ທະນາໝູ່ບ້ານຂອງພວກເຮົາ "

ຄຳວ່າ " ພັດທະນາ " ມັນເປັນສຳນວນໃໝ່ສຳລັບຊາວບ້ານພາຄຳຫລາຍຄົນ, ເຂົາເຈົ້າເຄີຍໄດ້ຍິນ ແລະ ຮູ້ກັນແບບພົ້ນ ບ້ານ ແຕ່ຄຳວ່າ " ເຮັດວຽກຫລືສ້າງນັ້ນສ້າງນີ້ " ທີ່ນັ້ນ. ເມື່ອທິດ ພັດອະທິບາຍແຕ່ລະຫົວຂໍ້ວ່າ

" ບັນຫາທຳອິດແມ່ນຢາກປຶກສາເລື່ອງເສັ້ນທາງລະຫວ່າງບ້ານເຮົາໄປຫາເຂດຕາແສງ ບັນຫາທີສອງແມ່ນເລື່ອງນ້ຳກິນນ້ຳໃຊ້ ບັນຫາທີສາມແມ່ນເລື່ອງເຮັດອະນາໄມ ແລະ ປັວແປງເສັ້ນທາງ ໃນບ້ານໃຫ້ເປັນລະບຽບ "

ຕອນນີ້ຊາວບ້ານທຸກໆຄົນຈຶ່ງເຂົ້າໃຈຄຳວ່າ ພັດທະນາຂອງ ທິດພັດ, ສິ່ງທີ່ທິດພັດຍົກຂຶ້ນມາເປັນບັນຫານັ້ນ ຊາວບ້ານພາຄຳຍ່ອມ ຮູ້ດີເພາະມັນໄດ້ສຳພັດກັບການດຳລົງຊີວິດປະຈຳວັນຂອງເຂົາ ເຈົ້າເຂົາເຈົ້າຈຶ່ງເຂົ້າໃຈດີເທົ່າໆກັບຮູ້ຈັກກັບວ່າເຮັດໄຮ່ເຮັດນາ. ເມື່ອບໍ່ມີສຽງໃດສະແດງທັດສະນະແນວໃດນອກຈາກສຽງໂສເຫລັກັນອຸ່ມໆອື້ມໆຢູ່ທຸກຈອກທຸກແຈຂອງທໍແຈກ ທິດພັດຈຶ່ງຖາມວ່າ

" ບັນຫາທີ່ນຳມາເວົ້ານີ້ ໃຜມີຄວາມຄິດເຫັນແນວໃດເວົ້າໂລດ ວຽກນີ້ດ່ວນສົມຄວນ ຖ້າຮອດຍາມລະດູຝົນແມ່ນເຮັດບໍ່ໄດ້ "

ຈານບຸບຜາລຸກຢືນຂຶ້ນ ເຮັດໃຫ້ແສງຕາແຕ່ລະຄູ່ຂອງຊາວ ບ້ານແນມໄປເບິ່ງຈານບຸບຜາຕັ້ງແຕ່ຫົວຈົນສຸດຕີນ, ຈານບຸບຜາເວົ້າວ່າ

" ເລື່ອງນີ້ກໍເປັນຄວາມຄິດທີ່ດີຂອງການບ້ານໃໝ່ຢູ່ດອກ... ແຕ່ວ່າເລື່ອງເຮັດເລື່ອງສ້າງອັນໃຫຍ່ໆ ຈັ່ງຊີ້ມັນຊິບໍ່ເຫລືອບ່າ ກວ່າແຮງຂອງຊາວບ້ານເຮົາບໍ... ເຮັດທາງແຕ່ນີ້ຮອດເຂດຕາແສງຂ້ອຍວ່າປີໜຶ່ງກໍບໍ່ແລ້ວ "

ຊາວບ້ານສ່ວນຫລາຍເຖິງບໍ່ໄດ້ລຸກຂຶ້ນເວົ້າຄືຈານບຸບຜາກໍຈິງແຕ່ ກໍມີທ່າອ່ຽງໄປທາງຈານບຸບຜາເປັນສ່ວນຫລວງຫລາຍ. ທິດພັດ ໄດ້ ຕອບຄຳຖາມວ່າ

" ຖ້າພວກເຮົາໂຮມແຮງກັນ ເປັນນ້ຳໜຶ່ງໃຈດຽວ ດ້ານ ສ່ຳ ນີ້ບໍ່ຮອດສອງເດືອນດອກ... ພວກເຮົາຈະໄດ້ເຮັດແຕ່ເຄິ່ງ ໜຶ່ງ ແລະ ປີທຳອິດນີ້ພວກເຮົາພຽງແຕ່ຖາງແລວທາງໃຫ້ມັນກວ້າງ ແລະ ແປນກ່ອນ "

ທິດພັດເວົ້າບໍ່ທັນສຸດຄວາມ ກໍມີສຽງໜຶ່ງຖາມຂັ້ນກາງວ່າ

" ເຮັດແຕ່ເຄິ່ງໜຶ່ງ ເຮັດແນວໃດແຕ່ນີ້ຫາເຂດຕາແສງໄລຍະ ທາງເກືອບຮອດສິບຫລັກພຸ້ນ "

ສຽງໂສກັນດັງຂຶ້ນຢ່າງສວ່ານສືບອີກເທື່ອໜຶ່ງ ແຕ່ເປັນ ສຽງ ສ້າງຄວາມກັງວົນສົນໃຈໃນວົງແຄບບໍ່ກ້າສະເໜີຄຳເຫັນຕໍ່ທິດພັດ.

" ເຮົາຈະນຳພາພີ່ນ້ອງຖາງແລວທາງໄປຮອດແຕ່ພຽງ ໜອງ ໄຫລ່ ຈາກໜອງໄຫລ່ໄປເຖິງເຂດຕາແສງນັ້ນ ຈະຮອງຂໍໃຫ້ ທາງ ຕາແສງຮັບຜິດຊອບຊ່ອຍຖາງຕໍ່ "

" ຄັນມັນໄດ້ແນວນັ້ນເດືອນໜຶ່ງເດືອນປາຍກໍແລ້ວທໍ່ນັ້ນແຫລວ "

" ໄດ້... ເຮົາຮັບຮອງໃຫ້ໄດ້ເຮົາຂໍເອົາຫົວປະກັນໂລດ ເຮົາ ຈະສະເໜີນຳຕາແສງ "

ເຈົ້າອາວາດວັດ ເມື່ອເຫັນວ່າຊາວບ້ານຈະຮ່ວມແຮງໃຈກັນແທ້ ເພີ່ນກໍສະເໜີນຳອອກຕີນຍາດໂຍມວ່າ

" ທາງວັດພີ້ ພວກອາຕະມາກໍຈະຂໍຮ່ວມແຮງຮ່ວມໃຈນຳ ... ຖ້າເຮົາຕັດແລວທາງໄດ້ແລ້ວບ້ານພວກເຮົາກໍຈະບໍ່ປ່ຽວພອຍມີຫລາຍ

ຄົນກໍຢາກຈະມາຫລິ້ນມາທ່ຽວ ບ້ານເຮົາກໍມີຂອງດີໆທີ່ເປັນນໍລະ ດົກພື້ນບ້ານພື້ນເມືອງພໍເປັນທີ່ສົນໃຈຂອງໄທບ້ານອື່ນຫລາຍອັນ "

ຢູ່ເຂດຊົນນະບົດນັ້ນ ບັນຫາໃດກໍຕາມຖ້າວ່າທາງຄູບາອາ ຈານເຫັນພ້ອມແລ້ວ ເຂົາເຈົ້າມັກຖືວ່າສິ່ງນັ້ນດີ, ຖືກຕ້ອງ, ເປັນທຳ , ເຮັດແລ້ວໄດ້ບຸນໄດ້ກຸສົນ.

ເວລາພຽງແຕ່ສອງເດືອນຜ່ານໄປ ຄົນຜູ້ມັກເວົ້າໂພດແດ່ກໍ ວ່າຍືນຢູ່ແຄມຫນອງໄຫລ່ແນມຫາບ້ານຜາຄຳເຫັນຮອຍຄວາຍຍ່າງ, ຂະບວນບຸກເບີກຖາກຖາງຂອງຊາວບ້ານຮ່ວມຫົວພະສົງສາມະເນນເຮັດໃຫ້ເສັ້ນທາງຊິ່ງເຄີຍຮົກເຮື້ອເປັນດົງດິບທີ່ເຢືອກເຢັນວ່າເວໃນຈິດສຳນຶກຂອງຜູ້ພົບເຫັນ ໄດ້ກາຍມາເປັນເສັ້ນທາງທີ່ຊື່ ແລະ ແປນ , ເຖິງຈະບໍ່ທັນໄດ້ບຸກເບີກເປັນເສັ້ນທາງທີ່ມາດຖານກໍຕາມ ແຕ່ນັ້ນ ກໍແມ່ນເລື່ອງໃຫມ່ນັ້ນແມ່ນຄວາມພໍອົກພໍໃຈຂອງຊາວບ້ານຜາຄຳ.

ເມື່ອຕັດແລວທາງສຳເລັດແລ້ວ ເຂົາເຈົ້າກໍຮ່ວມໃຈກັນຕັດ ໄມ້ມາເລື່ອຍແປ້ນ ແລະ ຂາງເພື່ອເຮັດຂົວຂ້າມຫ້ວຍບ້ານ, ເຖິງ ຈະແມ່ນຂົວແບບປະຖົມປະຖານ ເສົາໄມ້ແກ່ນຫລ້ອນ ປູແປ້ນ ແລະຮາວໄມ້ທຳມະດາ ແຕ່ກໍຮັບປະກັນໃນການໄປມາຫາສູ່, ສາມາດຮັບ ນ້ຳຫນັກລໍ້ກວຽນລົດຈັກລົດຖີບໄດ້ສະບາຍ. ຢູ່ເຫນືອຂົວຂຶ້ນໄປເຂົາເຈົ້າໄດ້ປ່ຳຕົ້ນດູ່ໃຫ່ຍຕົ້ນຫນຶ່ງລົ້ມພາດຫ້ວຍບ້ານ, ຕອກຫລັກເສົາໄມ້ແກ່ນຂະຫນານກັບຂອນດູ່ເອົາໄວ້ແລ້ວ ຕີແປ້ນແອ້ມຂຶ້ນເກືອບຫລຸບຫົວຊາວບ້ານສາມັກຄີກັນອອກແຮງງານຂົນດິນລົງໃສ່ເຮັດເປັນຄູກັນນ້ຳ, ຫລາຍເດືອນຜ່ານມານ້ຳທີ່ໄຫລຊຶມມາຈາກຕີນພູຜາຄຳ ກໍຄ່ອຍໆອັ່ງຂຶ້ນ ຈົນກາຍເປັນວັງໄດ້ອາບສະບາຍ, ສ່ວນນ້ຳກິນນັ້ນ ເຂົາເຈົ້າກໍພາກັນຂຸດ

ສ້າງເລາະແຄມນ້ຳເອົາໄວ້ໃຊ້ທົ່ວທັງໝູ່ບ້ານ.

ນັບແຕ່ທິດພັດໄດ້ເປັນກວານບ້ານມານີ້ ບ້ານພາຄຳມີອັນ ໃໝ່ເກືອບໝົດທັງໝູ່ບ້ານ, ເມື່ອກ່ອນບ້ານພາຄຳນັ້ນ ລະຫວ່າງ ຫລັງຄາເຮືອນຕໍ່ຫລັງຄາເຮືອນ ກໍປານວ່າຖືກຕັດແຍກກັນຢູ່ຄົນລະພົມແດນ ບໍ່ມີທາງລ່ວງຫາກັນ ໄດ້ເຕັມແຕ່ຕົ້ນ ໄມ້ທີ່ບໍ່ມີຄຸນຄ່າຫຸ້ມຫໍ່ເອົາໄວ້ແຕ່ຄ່າ ທິດພັດ ພາຕັດທາງຢູ່ພາຍໃນບ້ານໃຫ້ມີເສັ້ນທາງຜ່າບ້ານເສັ້ນ ທາງເຂົ້າຫາແຕ່ລະໆ ແຕ່ລະໜ່ວຍມານີ້ ເບິ່ງເຖິງບ້ານໃຜກໍແປນງມື້ໃດ ເດືອນຫງາຍຜູ້ສາວກໍຈຸ້ມກັນເຂັນຝ້າຍລິງຂວງ ຜູ້ບ່າວກໍເປົ່າ ແຄນເລາະບ້ານຊຸມແຊວຂ່ວງໃຕ້ຂ່ວງເໜືອ, ຊຸມໜຶ້ງໝາກຂາມໃສ່ ຂີ້ເຖົ່າໄມ້ເຊືອກຫວານແທ້ຫວານວ່າ.

ສິ່ງທີ່ທິດພັດໄດ້ນຳພາຊາວບ້ານພາຄຳສ້າງຊື່ສຽງໃຫ້ແກ່ໝູ່ບ້ານຈົນຮອດດຽວນີ້ ນອກຈາກການຕັດທາງແລ້ວກໍແມ່ນການ ສານແອບເຂົ້າ ແລະ ໝວກໄມ້ໄຜ່ທີ່ມີສີລະປະລວດລາຍແບບລາວ ແລະ ສານເປັນຕົວໜັງສືໃສ່ວ່າ " ພາຄຳ ". ວຽກງານຫັດຖະກຳ ນີ້ເປັນທີ່ຍອມຮັບຂອງໝູ່ບ້ານໃກ້ຄຽງຈົນຮອດຕົວເມືອງ ກາຍເປັນສິນຄ້າຂາອອກຂອງຊາວບ້ານພາຄຳ, ຜູ້ໃດໄປທ່ຽວບ້ານພາຄຳ ກໍແມ່ນຊື້ແອບເຂົ້າ ແລະ ໝວກໄມ້ໄຜ່ຕິດມືມານຳ. ບ້ານພາຄຳບໍ່ໄດ້ ຢູ່ຫ່າງໄກຈາກຈິດສຳນຶກຂອງຄົນທົ່ວໄປອີກແລ້ວ, ສາວບ້ານພາ ຄຳເຖິງຈະບໍ່ຮູ້ຈັກຄຳວ່າ " ຮ້ານເສີມສວຍ " ກໍຕາມແຕ່ລະຄົນກໍງາມ ຕາມທຳມະຊາດ ພວກໜຸ່ມນ້ອຍບ້ານອື່ນ ມັກເວົ້າກັນວ່າ " ຊ້າງ ເຜືອກເກີດກາງດົງ ".

. / .

# ຮັກຄົນຮັກຫຍ້າ

+ ຮັກຄົນດີກວ່າຮັກຫຍ້າ ເພາະວ່າຄ່າຂອງຄົນ
ເກີດຂຶ້ນມາຝຶກຝົນ ຫລໍ່ຕົນເຕີມແຕ້ມ
ແຊມຊໍ່ແຊງຊົນຊັ້ນ ພົງພັນພຽນກໍ່
ບໍ່ແມ່ນເກີດຂຶ້ນລ້າ ບໍ່ດາຕັ້ງແຕ່ງຕົວ ເປັນລີ

+ ຄົນຄົນຊື່ວມົວໂລບລ້ຽວ ໂກງກອບໂກຍກິນ
ຊັບສິນເງິນຄຳຂອງ ມົ້ງເມືອງມູນບ້ານ
ພານພອກຫລວງລວງຕົ້ມ ອົມເອົາຢູ່ຫນ່ຳງ
ຂອງຄະລຳເພີ້ນທານ ຍັງລານດົ້ລ່ວງເອົາ ຫນ່າຍເດ

+ ເພີ່ນວ່າຄົນເຮົາດີລື້ນຫຍ້າ ຍ້ອນຮູ້ຄ່າຂອງຄົນ ນັ້ນແລ້ວ
ປະກອບພົນຄວາມດີ ເພີ່ມສີສັນເອ້
ຄົນຄົນໂລເລລົ້ວ ບໍ່ປັບຕົວເຕີມແຕ່ງ
ເຫນງວ່າຮັກຫຍ້ານັ້ນ ຍັງຊິລ້ຳເລີດຄົນ

+ ພົນຄວາມດີທີ່ສ້າງໄວ້ ຈະຕິດໄຕ່ຕາມຕົນ
ກໍໃຫ້ອະນຸຊົນ ລູກຫລານພາຍທ້າຍ

ໃຜທ່ອນເອົາເຮືອນທ້າວ ທໍໂຮງ ແລະ ໄມ້ທ່ອນ
ໄປກອງຟອນ-ແຈກເຂົ້າ ນຳເຈົ້າບາດວ່າຕາຍ ໄດ້ນໍ !

. / .

# ຈົ່ງກ້າວໄປ

* ຍາມເມື່ອຊີວິດຍັງ ຍັງຢູ່ເປັນຄົນ ເພື່ອນເອີຍ
ຢ່າຍອມຈົນຕາແຈ ນິ່ງແລດູລ້າ
ສອງຂາສອງແຂນພ້ອມ ຖະໜອມຄິງເຄື່ອນຍ່າງ
ແມ່ນເສັ້ນທາງຄົດໂຄ້ງ ຍາວເຢື້ນກໍ່ດຸ່ງໄປ

* ເພາະວ່າເບື້ອງໜ້ານັ້ນ ແສງສະຫວ່າງເຣືອງຮອງ
ເຮົາຈຶ່ງປອງພຽນອົດ ຄືບຄານເລືອງເລື້ອຍ
ອົດເມື່ອຍໂຣຍແຮງລ້າ ໜັກໜາລຳບາກ
ຍາກເຢື້ອນເໝືອນໝື່ນໄໝ້ ໃນເນື້ອກໍ່ຢ່າຖອຍ

* ໃຫ້ຄ່ອຍອົດຄ່ອຍເຢື້ອນ ຜ່ານຜ່າມໍລະສຸມ
ໄປໃຫ້ເຖິງຈຸດໝາຍ ເນັ້ງແນວາງໄວ້
ຍາມໃດເຮົາພອຍພົ້ນ ອົນທະການກາຍຜ່ານ
[illegible]ານວ່າ ໄດ້ໝື່ນຕື້ ຄຳເຂັ້ມໃສ່ມື ທ່ານເອີຍ

. / .

# ກິ່ນນາງ

1. ວຽງມະນີຍົກໂມງຢູ່ແຂນຂຶ້ນເບິ່ງ ທ່າມກາງແສງໄຟນອນທີ່ສ່ອງແສງສະຫວ່າງພໍອ່ອນໆ ເຂັມໂມງມັນຊີ້ຊື່ເລກ 2 ພໍດີ ມັນບອກໃຫ້ນາງຮູ້ວ່າ ເວລານີ້ບ່າຍ 2 ໂມງກາງຄືນແລ້ວ, ວຽງມະນີ ພິກຄິງໄປຫາລູກຊາຍນ້ອຍທີ່ນອນຫລັບຢູ່ຢ່າງສຸກສະບາຍ, ນາງຄ່ອຍ ໆ ແປງຫົວຂອງລູກໃຫ້ນອນຫງາຍຊື່ໆ ເພາະສັງເກດເຫັນວ່າລູກ ນອນເຮັດຄໍຫວ່ຽງຫນ້ອຍຫນຶ່ງ

ເຖິງແມ່ນເວລາຈະລ່ວງເລີຍມາຮອດຂ້ອນຄືນຄືແນວນີ້ກໍຕາມແຕ່ວຽງມະນີກໍບໍ່ຮູ້ສຶກ ງ່ວງນອນແຕ່ຢ່າງໃດ, ມັນບໍ່ແມ່ນເທື່ອທຳອິດທີ່ນາງນອນບໍ່ຫລັບ ຫລືວ່າຢູ່ເດິກດື່ນຂ້ອນຄືນຄືແນວນີ້ ວິງວຽນຊີວິດອັນບໍ່ເພິ່ງປາຖະຫນາມັນໄດ້ໄຫລວຽນເຂົ້າມາສຽບແທງຫົວໃຈຂອງນາງໄດ້ຫລາຍເດືອນແລ້ວ; ຄຳຂອງຄວາມຮັກທີ່ເຄີຍເວົ້າວ່າຫນັກດັ່ງຫີນແຜ່ນລ້ານ ຫວານດັ່ງນ້ຳເຜິ້ງນ້ຳຕານ ປະສານກັນດັ່ງທອງແຜ່ນດຽວບັດນີ້ມັນໃກ້ຈະຈືດຈາງຈະເຫລືອພຽງແຕ່ຄວາມຊ້ຳກັບຄາບນ້ຳ ຕາແລະ ພະຍານຮັກອີກຫນຶ່ງຄົນ. ນາງຢາກຮ້ອງໄຫ້ດັງໆ ຫລືປະກາດໄປທົ່ວບ້ານທົ່ວເມືອງ ເພື່ອໃຫ້ສົມກັບຄວາມຊອກຊ້ຳລະກຳໃຈທີ່ນາງ

ພົບພໍ້ໃນເວລານີ້ ແຕ່ມັນຈະເກີດປະໂຫຍດຫຍັງຂຶ້ນ ຖ້າຫາກ ນາງຫລີງເຮັດຄືແນວນັ້ນແທ້, ແມ່ນແຕ່ຄົນທີ່ຢູ່ໃກ້ຊິດ, ເຂົ້າໃຈນາງ ໃຫ້ຄວາມອົບອຸ່ນ, ຮ່ວມຫມອນນອນຕຽງດຽວກັນ ກໍຍັງຍິບຍື່ນຄວາມທຸກທໍລະມານໃຫ້ນາງ.

ວຽງມະນີພິກຄິງອີກເທື່ອຫນຶ່ງ ແລ້ວກໍເລີ່ມທົບທວນຄືນເຖິງພາບຮັກໃນອະດີດທີ່ຜ່ານມາ ມັນຊ່າງເຕັມແຕ່ຄວາມສຸກສົດຊື່ນແຈ່ມໃສ . ນາງໄດ້ຮູ້ຈັກກັບພູເພັດໃນສົກຮຽນຊັ້ນອຸດົມປີສຸດທ້າຍ ພຽງແຕ່ໄດ້ ຮູ້ຈັກກັນບໍ່ພໍເທົ່າໃດເດືອນ ກໍສາມາດສ້າງຄວາມເຂົ້າໃຈກັນໄດ້, ໂດຍສະເພາະແມ່ນຕົວນາງເອງຮູ້ສຶກວ່າ ພູເພັດທັງເປັນຄົນງາມສຸພາບອ່ອນຫວານ ແລະ ເປັນຄົນມີຫົວດົນດີ ທັງການຮ່ຳຮຽນກໍເກັ່ງ, ພໍເສັງຜ່ານຈົບຊັ້ນອຸດົມປີສຸດທ້າຍ ພູເພັດກໍໄດ້ຄະແນນດີລື່ນນາງຫລາຍເທົ່າ.

ຈາກນັ້ນ ວຽງມະນີກໍອອກໂຮງຮຽນຢູ່ເຮືອນຊ່ອຍວຽກແມ່ເພາະພໍ່ສຸຂະພາບບໍ່ແຂງແຮງ, ຫມູ່ຄູ່ທີ່ອອກໂຮງຮຽນໃນປີດຽວກັນ ຫລາຍຄົນກໍໄດ້ເຮັດວຽກທັງນຳພາກສ່ວນຂອງລັດ ແລະ ເອກະຊົນແຕ່ວຽງມະນີບໍ່ຍອມເຮັດການຄືຫມູ່ ນາງຊ່ວຍແມ່ຕ່ຳທູກຕີນສິ້ນ ສົ່ງຂາຍ ໃຫ້ຮ້ານຂາຍເຄື່ອງຫັດຖະກຳພື້ນເມືອງລາວແຫ່ງຫນຶ່ງ ເຊິ່ງມີລາຍໄດ້ດີພໍສົມນາພາຄວນ, ສ່ວນພູເພັດນັ້ນ ເຂົາໄດ້ເສັງເຂົ້າຮຽນຕໍ່ຢູ່ ໂຮງຮຽນວິຊາຊີບແຫ່ງຫນຶ່ງ ແລະ ໃນລະຫວ່າງນີ້ ພູເພັດກໍຫຽວມາຫລິ້ນນຳເກືອບວ່າທຸກໆອາທິດ ບາງອາທິດກໍມາຊວນຊຸມພັນເຂົ້າປຸ້ນ, ບາງອາທິດກໍຊອກຫາແບບລາຍລາວຕ່າງໆມາມອບໃຫ້ ເພື່ອຈະໄດ້ ອອກແບບຕີນສິ້ນໃຫມ່ໆ ສົ່ງໃຫ້ຮ້ານ; ຄວາມຮັກເກີດຈາກຄວາມເຫັນໃຈ ແລະ ການໄປມາຫາສູ່ກັນ ດັ່ງນັ້ນຄວາມຮັກຈຶ່ງເພີ່ມທະວີຂຶ້ນເລື້ອຍໆ.

ມື້ນັ້ນ ຂອງປີສຸດທ້າຍແຫ່ງການຮຽນທີ່ໂຮງຮຽນວິຊາຊີບ ຂອງພູເພັດ, ເມື່ອພູເພັດມາຫານາງຈຶ່ງໄດ້ເວົ້າ ເພື່ອຂໍຝາກແຫວນ ໝັ້ນເອົາໄວ້ ພູເພັດບອກວ່າ ເສັງຈົບແລ້ວຈະຫາເຖົ້າແກ່ມາສູ່ຂໍຕາມຮີດຄອງປະເພນີ, ນາງຈຶ່ງໄດ້ຕົກລົງປົງໃຈຮັບເອົາແຫວນໝັ້ນ ຂອງພູເພັດເອົາໄວ້.

ນັບແຕ່ໄດ້ຮັບແຫວນໝັ້ນຂອງພູເພັດແລ້ວ ນາງກໍບໍ່ເຄີຍຈະ ຄິດຕ້ອງຕາຕໍ່າໃຈກັບຜູ້ຊາຍຄົນໃດອີກ ນາງຄິດແຕ່ວ່າຈະລໍຄອຍຈົນ ວັນແຕ່ງດອງຈະມາຮອດ ແລະ ນາງຈະໄດ້ເປັນເມຍທີ່ດີຂອງຜົວ ອີກວັນໜຶ່ງຂ້າງໜ້າກໍຈະໄດ້ເປັນແມ່ທີ່ດີຂອງລູກ. ແຕ່ລະມື້ນາງຕັ້ງໃຈຕໍ່າຫູກຕີນສິ້ນຊ່ວຍແມ່ ດ້ວຍຄວາມອົດທົນພາກພຽນ ຈົນສາມາດ ຕໍ່າໄດ້ງາມລະອຽດດີ ທັງໄດ້ຮຽນຮູ້ວິທີມັດໝີ່ ແລະ ວິທີເກັບຕີນສິ້ນໝູ່ຄູ່ຜູ້ໃດເຫັນກໍຍ້ອງວ່ານາງຕໍ່າຕີນສິ້ນໄດ້ງາມໆ. ແຕ່ກໍມີໝູ່ບາງ ຄົນເຄີຍເວົ້າຢອກນາງວ່າເປັນຄົນຫົວບູຮານ ຢູ່ແຕ່ກັບຢ່າວກັບເຮືອນ , ເວົ້າແທ້ນາງກໍຢາກເປັນຄືໝູ່ຄູ່ວ່ານັ້ນແທ້ ນາງບໍ່ຄ່ອຍຈະມີໂອ ກາດໄປຫລິ້ນໄປທ່ຽວ ໂດຍສະເພາະແມ່ນໃນຍາມຄໍ່າຄືນ ນາງບໍ່ເຄີຍໄດ້ໄປແບບເສລີຕາມໃຈ, ນາງມັກຈະໄດ້ໄປແຕ່ໃນປາງບຸນໃຫຍ່ໆພ້ອມແມ່ ຫລືບາງໂອກາດກໍໄປເຮັດບຸນໃຫ້ທານບ້ານພີ່ນ້ອງ ຫລືວ່າລົງໄປເຮັດບຸນຢູ່ວັດ. ສ່ວນຫລາຍແມ່ນໝູ່ຄູ່ມັກຈະມາຫລິ້ນມາຢາມຢູ່ເຮືອນເພາະໃຜໆກໍຢາກມາເບິ່ງສີມືໃນການຕໍ່າຫູກຕີນສິ້ນ.

ວຽງມະນີ ພົກຄິງຕື່ນອີກເທື່ອໜຶ່ງ ແລ້ວກໍຫລັບຕາວາດພາບອະດີດຕໍ່, ໃນປີຕໍ່ມາພິທີແຕ່ງດອງລະຫວ່າງນາງກັບພູເພັດ ກໍໄດ້ຈັດຂຶ້ນຢ່າງສົມກຽດ ແລະ ຢູ່ໃນຮີດຄອງປະເພນີອັນດີງາມ, ບັນດາແຂກຜູ້

ມິກຽດ, ຍາດພີ່ນ້ອງ ແລະ ໝູ່ຄູ່ຮັກແພງທີ່ໃຫ້ກຽດມາຮ່ວມເປັນສັກຂີພິຍານໃນມື້ແຕ່ງດອງນັ້ນ ໃຜໆກໍອອກປາກຍ້ອງວ່າຄູ່ຜົວເມຍ ໃໝ່ຈັ່ງແມ່ນສົມກັນແທ້ກັນວ່າ ສົມຊິເປັນຜົວແກ້ວເມຍທິບ ຜົວຫຍິບ ເມຍແສ່ວອີ່ຫລີ.

ຄວາມຮັກແບບຜົວເມຍລະຫວ່າງນາງກັບພູເພັດ ມັນແມ່ນຄວາມຮັກທີ່ທັງສອງຄິດວ່າ ໂລກນີ້ມີແຕ່ສອງຄົນທໍ່ນັ້ນ, ນາງໄດຖະໜອມພູເພັດ ແລະ ພູເພັດກໍໄດ້ຖະໜອມຕໍ່ນາງ ຄວາມຮັກມັນຊ່າງ ຫວານສຸກສົດຊື່ນ, ຄືນໜຶ່ງຫລັງແຕ່ງດອງ ໄດ້ພຽງສອງເດືອນ ນາງໄດ້ຖາມພູເພັດວ່າ.

" ອ້າຍຢາກໃຫ້ນ້ອງໄດ້ລູກກົກເປັນຜູ້ຊາຍ ຫລືຜູ້ຍິງ" ພູ ເພັດງວາກໜ້າມາຫອມແກ້ມນາງບາດໜຶ່ງ ແລ້ວກໍຕອບນາງວ່າ

" ອ້າຍບໍ່ຊ່າງຈະປັ້ນແຕ່ງເອົາໄດ້...ແຕ່ຖ້າຫາກຕາມໃຈ ຄິດຂອງອ້າຍແມ່ນຢາກໄດຜູ້ຊາຍກ່ອນ, ເມື່ອເກີດອອກມາອີ່ຫລີຈະເປັນຜູ້ຊາຍຜູ້ຍິງອ້າຍກໍຮັກຄືກັນ ເພາະມັນແມ່ນສາຍເລືອດຂອງພວກເຮົາ"

ນາງໄດຕອບເປັນການເອົາໃຈຜົວວ່າ

" ຄັນຊັ້ນນ້ອງກໍຊິພະຍາຍາມໃຫ້ໄດ້ລູກຊາຍກ່ອນ" **ເວົ້າແລ້ວ** ທັງສອງກໍພາກັນຫົວອົ້ນສະອິກສະອ້ອຍ ດ້ວຍຄວາມຊື່ນອົກຊື່ນໃຈ.

ຫລັງຈາກແຕ່ງດອງໄດປີກວ່າ ນາງກໍເກີດລູກເປັນຜູ້ຊາຍສົມດັ່ງຄວາມຕັ້ງໃຈຂອງພູເພັດ, ຄິດມາຮອດຕອນນີ້ ນາງກໍຍືດໆຄໍ ສ່ອງເບິ່ງໜ້າແອນ້ອຍທີ່ພວມນອນຫລັບຢູ່ຂ້າງໆ ແລ້ວກໍຄິດຕໍ່ໄປ, ຫລັງຈາກໄດ້ລູກແລ້ວທັງສອງກໍຮັກແພງລູກ ຄືກັບດວງຕາຂອງແຕ່ລະຄົນ. ຕອນນັ້ນພູເພັດກໍຍັງເປັນພະນັກງານສັງກັດລັດ ຖານະຕຳແໜ່ງກໍສູງ

ສົມຄວນ, ນາງກັບພູເພັດເຄີຍປຶກສາກັນວ່າຈະໃສ່ຊື່ລູກກົກວ່າ ແນວໃດ ຕ່າງຄົນກໍຕ່າງມີເຫດຜົນຂອງໃຜມັນ ນາງກໍວ່າຊື່ລູກໃຫ້ສຳ ຜັດກັບຊື່ຂອງນາງຈຶ່ງຄ່ອຍມ່ວນ, ສ່ວນພູເພັດກໍວ່າໃຫ້ສຳພັດຊື່ຂອງພໍ່ຈຶ່ງສົມເປັນພູ້ຊາຍ. ຈົນມາຮອດມື້ນີ້ກໍຍັງຫາຊື່ລູກບໍ່ໄດ້ ຈຶ່ງພາກັນ ຮ້ອງແອນ້ອຍເປັນການຊົ່ວຄາວໄປກ່ອນ.

ນາງຍອມຮັບວ່າ ໄດ້ຮູ້ຈັກ ແລະ ອອກສັງຄົມໄປນັ້ນມາມີກໍຫລັງຈາກໄດ້ແຕ່ງດອງຢູ່ກິນກັບພູເພັດແລ້ວນັ້ນ, ງານດອງງານຊົມ ການສະແດງ, ງານບຸນເຮືອນ ແລະ ງານກິນລ້ຽງບ່ອນໃດພູເພັດກໍເອົາໄປນຳຕະຫລອດ ພໍປານວ່າເງົາຫລຸ້ມຕົວ,ຫລັງຈາກໄດ້ລູກມານີ້ດົນໆກໍຈຶ່ງໄດ້ໄປ ເພາະຄາລູກນ້ອຍ ພູເພັດຂອງກໍມີຫນ້າມີຕາຫມູ່ຄູ່ໃຜໆກໍຍ້ອງພູເພັດວ່າໄດ້ເມຍງາມ ທັງເປັນຊ່າງຕ່ຳຫູກສີມືດີ.

ສອງປີຕໍ່ມາພູເພັດກໍໄດ້ຂໍລາອອກຈາກການມາຈັດຕັ້ງບໍລິສັດ ກໍ້າສ້າງຮ່ວມກັບຫມູ່, ກິດຈະການທາງດ້ານທຸລະກິດຂອງພູເພັດກໍໄປໄດ້ດີ ແລະ ພູເພັດກໍຍັງແມ່ນພູເພັດຄົນເກົ່າ ຄືຮັກເມຍຮັກລູກເລີກການກໍກັບມາບ້ານມາເຮືອນຫາລູກຫາເມຍ, ບາງມື້ພູເພັດມີວຽກດ່ວນ ທີ່ຈະຕ້ອງໄປກໍຍັງອຶດສາມາຄອບເມັຍ ມາຫອມແກ້ມລູກ ຖ້າຫາກ ຈຳເປັນແທ້ໆ ກໍໂທລະສັບມາບອກ... ແຕ່ໄລຍະ 3-4 ເດືອນມາ ນີ້ພູເພັດມີອົນຕ່າງ ພູເພັດມັກກິນເຫລົ້າຈົນເມົາ ຈຶ່ງກັບມາເຮືອນ ໃນຍາມເດິກດື່ນ ບາງຄືນກໍບໍ່ກັບມາເຮືອນຊ້ຳ... ຄືນນີ້ກໍຢ້ານແຕ່ຈະບໍ່ມາອີກ ເພາະໃກ້ຈະແຈ້ງແລ້ວ, ສຽງໄກ່ຂັນສົ່ງຄອນ,ສຽງລົດແລ່ນຕາມຖະຫນົນ, ສຽງແມ່ຄ້າຫຽວທາງໂສກັນໄປຕະຫລາດດັງ ແຊວອື້ນ, ບຶດຫນຶ່ງສຽງແອນ້ອຍກໍໄຫ້ກິນນົມ ນາງງວາກໄປໂຊມເອົາລູກ

ມາກິນນົມ, ຈາກນັ້ນບໍ່ພໍຄາວແສງສະຫວ່າງຂອງມື້ໃຫມ່ກໍອາບໄປທົ່ວ ບໍລິເວນເດີ່ນບ້ານ.

**໘.** ຄືນນັ້ນເກືອບບ່າຍ 2 ໂມງແລ້ວ ພູເພັດຂັບລົດກັບ ບ້ານ ດ້ວຍອາການຂອງຄົນມຶນເມົາ ເພາະວ່າທຸລະກິດທີ່ເຂົາພວມດຳເນີນ ຢູ່ນັ້ນເດີນແນ່ນແລ່ນສະດວກ, ໃນວົງການຂອງນັກທຸລະກິດຫລື ວົງ ການບັນເທີງເລີງລົມນັບແຕ່ຮ້ານກິນດື່ມຮອດບາເຕັ້ນລຳ ບ່ອນໃດ ກໍ ຍ່ອມຮູ້ພູເພັດດີ ເຂົາໃຫ້ສາຍຍານາມວ່າ ນັກທຸລະກິດເນື້ອຫອມ ຈ່າຍ ບໍ່ອັ້ນ.

ສຽງອັດຕູລົດດັງຕຶບບາດແຮງໆ ວຽງມະນີຟ້າວລຸກມາໄຂຕູ ທັນ ທີ ພູເພັດຍ່າງເຊຊ້າຍເຊຂວາເຂົ້າຫາປະຕູເຮືອນ ເຊິ່ງວຽງມະ ນີ ພວມຢືນລໍຖ້າຢູ່, ກິ່ນເຫລົ້າຍີ່ຫໍ້ຊັ້ນດີປະສົມກັບກິ່ນນ້ຳມັນຫອມພູ່ ເຂົ້າ ມາຕຳດັງຂອງວຽງມະນີ ຈົນນາງຮູ້ສຶກວິນຫົວຫນ້ອຍຫນຶ່ງ.

" ມາວ... ມາວຕາມເຄີຍ"

ສຽງຂອງພູເພັດເວົ້າອອກມາແບບຍາວເຄືອ ຕາມແບບ ສະບັບ ຂອງຄົນເມົາທັງຫລາຍ, ວຽງມະນີຍົກແຂນທັງສອງໄປໂຊມ ເອົາ ຮ່າງຂອງພູເພັດປະຄອງເຂົ້າໄປຫາຕຽງ, ພູເພັດຖິ້ມໂຕລົງ ເທິງ ຕຽງຈົນແອນ້ອຍທີ່ພວມນອນຫລັບສະບາຍຢູ່ນັ້ນສະເດີດຕື່ນ; ພູ ເພັດ ອາດຈະຫລັບຕັ້ງແຕ່ວຽງມະນີໂຊມມາແຕ່ປາກປະຕູເຮືອນພຸ້ນ ພໍຫົວ ຕົກຖືກຫມອນ ພູເພັດກໍມິດຊ້ອຍມ້ອຍ, ວຽງມະນີຊອກເອົາຜ້າຈຸ່ມນ້ຳ ຮ້ອນໃຫ້ພໍອຸ່ນໆມາເຊັດຫນ້າ ແລະ ຕາມກ້ານຄໍໃຫ້ພູເພັດ ພ້ອມ ທັງ ເວົ້າຈົ່ມເປັນຫ່ວງນຳຜົວ.

" ອ້າຍເມົາຫລາຍ...ແຕ່ກໍຍັງດີຂັບລົດມາໄດ້" ພູເພັດຄົງຈະ

ເຄິ່ງຫລັບເຄິ່ງຕື່ນ ຈຶ່ງເວົ້າຕອບວຽງມະນີແບບຂໍ້ອວດວ່າ

" ສະບາຍ... ສຸກສະບາຍຊາວນາ"

ແລ້ວພູເພັດກໍນ້ອຍຫລັບໄປ, ວຽງມະນີຄຶດຢາກຈະປ່ຽນ ເຄື່ອງນຸ່ງໃຫ້ແຕ່ກໍຢ້ານຈະລົບກວນ. ນາງຢາກໃຫ້ພູເພັດໄດ້ພັກຜ່ອນ ຢ່າງສະບາຍໆ. ຄືນນີ້ກໍຄືກັບອີກໃນຫລາຍຄືນຜ່ານມາ ວຽງມະນີແລະແອນ້ອຍຕ້ອງທົນນອນສູດດົມອາຍຂອງກິ່ນເຫລົ້າຈາກພູເພັດ, ມີບາງຄືນນາງກໍເກືອບຈະບໍ່ຮູ້ສຶກແນວໃດຕໍ່ກິ່ນເຫລົ້າ ເພາະນາງ ແລະ ລູກມີຄວາມຊິນເຄີຍກັບມັນມາຫລາຍແລ້ວ

ຕື່ນເຊົ້າຂອງມື້ນັ້ນແມ່ນວັນອາທິດ ດັ່ງນັ້ນວຽງມະນີຈຶ່ງປ່ອຍ ໂອກາດໃຫ້ພູເພັດພັກຜ່ອນນອນຕື່ນສວາຍກວ່າປົກກະຕິ. ສ່ວນນາງແລະແອນ້ອຍຕື່ນຕັ້ງແຕ່ເວລາຍັງເຊົ້າມືດຢູ່ພຸ້ນ. ມື້ນີ້ວຽງມະນີແຕ່ງ ອາຫານຄາບເຊົ້າລໍຖ້າ ເມື່ອພູເພັດຜູ້ເປັນຜົວຕື່ນນອນຈະໄດ້ປັ້ນເຊົ້າ , ອາຫານປັ້ນເຊົ້າມື້ນີ້ນາງຕົ້ມສົ້ມປາຄໍ່ໃຫ່ຍໃສ່ ສົ້ມພໍດີ ທັງຕຳແຈ່ວຫົວພັກບົ່ວເລີຍ ເຊິ່ງເປັນອາຫານທີ່ພູເພັດມັກກິນ ແລະ ບໍ່ໄດ້ຮັດສູ່ກິນຫລາຍອາທິດແລ້ວ.

ເມື່ອຕົ້ມສຸກເປັນທີ່ຮຽບຮ້ອຍແລ້ວ ນາງກໍຈັດຫາໄວ້ເທິງໂຕະໃນຫ້ອງກິນເຂົ້າ. ບຶດໜຶ່ງຕໍ່ມາພູເພັດກໍຕື່ນນອນລຸກອາບນ້ຳຈາກນັ້ນ ກໍຟ້າວມະລຸບປຸບປັບແຕ່ງໂຕນຸ່ງສົ້ງເສື້ອຢ່າງໄປແຍງແວ່ນຫວີຫົວສຳລັບວຽງມະນີກໍອຸ້ມລູກສີງຫລິ້ນທັງພ່ອງແນມເບິ່ງພູເພັດແຕ່ງໂຕ, ມື້ນີ້ ພູເພັດນຸ່ງເສື້ອລາຍຕາກາໂລຕານ້ອຍໆຈາງໆ ນຸ່ງສົ້ງສີນ້ຳຕານໃໝ່, ນາງລັກແຍງເບິ່ງພູເພັດຜູ້ເປັນຜົວຕັ້ງແຕ່ຫົວຈົນສຸດຕີນ ກັບເຄື່ອງນຸ່ງຊຸດນີ້ມັນຊ່າງກົມກືນກັບສັດສ່ວນຂອງພູເພັດເອົາແທ້ເອົາວ່າ, ຂະນະ

ທີ່ພູເພັດພວມຫວີພົມຢູ່ນັ້ນ ວຽງມະນີຈຶ່ງເວົ້າຂຶ້ນວ່າ

" ມື້ນີ້ນອງຕົ້ມສົ້ມປາຄໍ່ໃຫ່ຍ ກັບແຈ່ວຫົວຜັກບົ່ວເລີຍໃຫ້ອ້າຍປັ້ນ ເຂົ້າ...ນ້ອງຊິມເບິ່ງບ່ວງໜຶ່ງນໍ້າຕົ້ມນົວໆ"

ພໍສຸດຄຳເວົ້າຂອງວຽງມະນີ ພູເພັດກໍໂຢະໆໂຕລົງຫນ້ອຍໜຶ່ງ ຫົວກົ້ງຕາສ່ອງເບິ່ງໜ້າຂອງວຽງມະນີຢູ່ໃນແວ່ນ ຝ່າຍວຽງມະນີ ກໍຍັງແຍງພໍໄປທາງແວ່ນພໍດີແສງຕາທັງສອງຄູ່ ພໍກັນຢູ່ກາງແວ່ນ , ວຽງມະນີທັງສິ່ງລູກຫົວຍິ້ມນ້ອຍໆໃຫ້ພູເພັດເຫັນຢູ່ໃນແວ່ນ ພູເພັດຈຶ່ງຕອບວ່າ

" ອ້າຍມີວຽກຟ້າວ ບໍ່ໄດ້ປັ້ນເຂົ້ານຳດອກ "

ວຽງມະນີເຂົ້າໃຈວ່າ ພູເພັດມີນັດກັບໝູ່ຫລືວ່າລູກຄ້າເອົາ ໄວ ນາງຈຶ່ງເວົ້າເວົ່າ

" ອ້າຍຟ້າວບໍ່ທັນກິນດຽວນີ້ກໍຢ່າ.. ນ້ອງຈະເອົາໃສ່ຕູ້ເຢັນໄວ້ ໃຫ້ຕອນທ່ຽງຫລືຕອນແລງກິນກໍໄດ້"

ພູເພັດງວາກໄປຈັບເອົາຊອງຢາມາຕໍ່ສູບທັງເວົ້າກັບວຽງມະ ນີວ່າ

" ນ້ອງກິນໂລດນ່າ... ອ້າຍຈະໄປກິນຢູ່ຮ້ານອາຫານກັບໝູ່... ມື້ນີ້ບາງເທື່ອບໍ່ໄດ້ກັບບ້ານ"

ວຽງມະນີລຸກຍ່າງມາໃກ້ໆພູເພັດແລ້ວຍ້ອນຖາມຄືນໄປວ່າ

" ເປັນຫຍັງດຽວນີ້ ອ້າຍບໍ່ຢາກຈະກິນເຂົ້າຢູ່ເຮືອນຮ່ວມ ກັບນ້ອງ ແລະ ລູກ"

ພູເພັດແນມເບິ່ງໜ້າຂອງແອນ້ອຍ ແລະ ວຽງມະນີແວບ ໜຶ່ງແລ້ວຕອບແບບໜາກນາວບໍ່ມີນໍ້າ

" ຈັ່ງໃດບຸ... ດຽວນີ້ກິນຢູ່ເຮືອນບໍ່ຢາກສັກປານໃດອາຫານກໍຄືວ່າບໍ່ຢາກຖືກປາກຖືກຄໍ "

ວຽງມະນີເຮັດໜ້າແດງຂຶ້ນໜ້ອຍໜຶ່ງ ແຕ່ກໍອົດສາຍິ້ມນ້ອຍ ໆ ໃຫ້ຜົວແລ້ວຕອບອອກໄປວ່າ

" ກະຂອງບໍ່ແມ່ນແມ່ຄົວສີມືຂັ້ນຮ້ານອາຫານ ມັນກໍບໍ່ແຊບຄື ຢູ່ຮ້ານອາຫານແຫລະ... ແລະ ນ້ອງເອງກໍບໍ່ມີເວລາຈະປ້ອນ ອ້າຍເພາະຍາກນຳລູກ "

ຄຳເວົ້າຂອງວຽງມະນີປະໂຍກນີ້ ມັນໄດ້ແທງໃຈດຳຂອງພູເພັດເຊິ່ງເຄີຍເຊື່ອງຊ້ອນເອົາໄວ້ດົນແລ້ວ ພູເພັດຟ້າວຍ່າງອອກ ຈາກຫ້ອງເຮືອນໄປຫາລົດ ໂດຍບໍ່ກ້າຕໍ່ວ່າຕໍ່ຂານໃດໆ.

ຫລັງຈາກພູເພັດຂັບລົດອອກຈາກບ້ານໄປແລ້ວ ວຽງມະນີ ກໍນັ່ງປ້ອນເຂົ້າລູກຢູ່ຫ້ອງຮັບແຂກ ນາງເປີດເທບຟັງເພງຄ່ອຍໆ ຫົວພ່ອງຄິດໄປຫລາຍອັນຫລາຍແນວ, ບັນຫາທຳອິດທີ່ນາງຄິດ ກໍແມ່ນ ການອອກແບບລາຍຕີນສິ້ນ ເຊິ່ງທາງຮ້ານຈຳໜ່າຍເຄື່ອງຫັດຖະກຳ ພື້ນເມືອງ ຂໍຮ້ອງໃຫ້ນາງຕ່ຳໃຫ້ ແຕ່ລາຍແບບນີ້ຮູ້ສຶກເກັບຍາກແຕ່ກໍຈະພະຍາຍາມ ເພາະລາຄາດີ ມີຄົນຕ່າງປະເທດຕ້ອງການ;ແຕ່ ແລ້ວຄວາມຄິດຂອງນາງກໍມາຈັ່ງຢູ່ກັບຄຳຖາມຂອງນາງເອງຄື ເປັນຫຍັງພູເພັດຈຶ່ງບໍ່ມັກກິນເຂົ້າເຮືອນ ຫລືວ່າຈະເປັນຄືບົວສອນເລົ່າສູ່ຟັງນັ້ນແທ້ບໍ ?

ນາງບົວສອນແມ່ນໝູ່ຄູ່ຮັກແພງ ຢູ່ຮ່ວມບ້ານຮ່ວມຄຸ້ມດຽວ ກັນເຄີຍເປັນນັກຮຽນ ເປັນສາວຮຸ່ນດຽວກັນ, ປັດຈຸບັນແຕ່ລະຄົນກໍ ມີຄອບຄົວ ມີລູກກັນໝົດແລ້ວ ໂດຍສະເພາະນາງບົວສອນມີລູກ 2ຄົນ

ແລ້ວ, ພໍ່ຂອງບົວສອນກໍເຮັດວຽກດ້ານທຸລະກິດຄືກັນກັບພູເພັດ . ຄອບຄົວທັງສອງນອກຈາກຮັກແພງກັນໃນຖານະຄົນຮ່ວມບ້ານຮ່ວມຄຸ້ມ ແລະ ເປັນຄົນຮຸ່ນລາວຄາວດຽວແລ້ວ ຢູ່ໃນວົງວຽນຂອງນັກທຸລະກິດ ກໍຍັງເຮັດໃຫ້ສອງຄອບຄົວໃກ້ຊິດຕິດແທດກັນຕື່ມ. ບົວສອນເຄີຍ ໄດ້ ເລົ່າເລື່ອງຂອງພູເພັດ ໃນໄລຍະນີ້ສູ່ວຽງມະນີຟັງມາຫລາຍ ເທື່ອ ແລ້ວ ແລະ ໃນສາຍຕາຂອງບົວສອນເອງກໍສັງເກດເຫັນວ່າ ພູເພັດ ມີອັນປ່ຽນແປງໄປໃນທາງລົບພໍສົມຄວນ ບວກກັບການເລົ່າສູ່ຟັງຂອງ ພໍ່ບົວສອນຈຶ່ງມີອັນລະແຄະລະຄາຍໃນຕົວຂອງພູເພັດ ຜູ້ເປັນພໍ່ສ່ຽວ. ບົວສອນເຄີຍເຫັນພູເພັດໄປໃນພິທີຕ່າງໆມັກຈະເອົາຜູ້ຍິງຄົນໜຶ່ງໄປ ນຳສະເໝີ, ຜູ້ຍິງຄົນນີ້ ເຖິງຈະບໍ່ຮູ້ຊື່ເອົາ ແຕ່ບົວສອນກໍຮູ້ຈັກເອົາ ພໍສົມຄວນ ໂດຍການບອກກ່າວຂອງພໍ່ຂອງນາງເອງວ່າຜູ້ຍິງຄົນ ທີ່ ເປັນສາວທັງສວຍທັງລວຍຄົນນີ້ ຄືເຈົ້າຂອງຜູ້ຈັດການບາເຕັ້ນ ລຳ ແຫ່ງໜຶ່ງ.

ວຽງມະນີເປັນຄົນມີເຫດຜົນ ພຽງພໍສະເໝີເຖິງນາງຈະໄດ້ຟັງ ຢ່າງເຕັມໂກນຫູ ແຕ່ເມື່ອບໍ່ມີສິ່ງໃດຢັ້ງຢືນ ນາງກໍບໍ່ຍອມເຊື່ອ ສຽງ ນົກສຽງກາ ເພາະນາງເຊື່ອໃນຕົວຂອງນາງວ່າ ນາງຮັກພູເພັດສຸດ ຫົວໃຈ ແລະ ຄິດວ່າພູເພັດກໍຕ້ອງຄືກັນກັບນາງ... ວຽງມະນີ ຕັກ ເຂົ້າໃສ່ປາກລູກ ທັງຄິດໄປໆມາໆ ນາງທົບທວນຄືນຄຳເວົ້າ ຂອງ ນາງບົວສອນ ທັງພ້ອງຄິດຕອບຕົນເອງໄປແບບເດົາໆວ່າ

" ມື້ນີ້ກໍບໍ່ຍອມກິນເຂົ້າເຮືອນຕາມເຄີຍ ປານນີ້ຄົງຈະໄປ ກິນ ທາງໜ້າກັບ... ແລ້ວກໍໄປທ່ຽວເພີດເພີນ" ວຽງມະນີບໍ່ຮູ້ຊື່ ຂອງ ຜູ້ຍິງ ເຈົ້າຂອງຜູ້ຈັດການບາເຕັ້ນລຳແຫ່ງນັ້ນ, ບົວສອນເຄີຍ ເລົ່າ

ສູ່ຟັງກໍວ່າແຕ່ຜູ້ຍິງຄົນນັ້ນ ເປັນສາວແກ່ຮູບຂາວສູງມີຖານະດີ.

ວຽງມະນີຄິດບອກໃສ່ກັບພຶດຕິກຳຂອງພູເພັດໃນໄລຍະນີ້ ແລ້ວເຖິງບໍ່ແມ່ນກໍຫາກດີ, ແຕ່ໃຈໜຶ່ງພັດຍັງບໍ່ຢາກເຊື່ອໃນຄວາມ ຫວັງດີຂອງບົວສອນປານໃດ ນາງຄິດວ່າພູເພັດເຮັດວຽກງານທຸລະກິດ ກໍຕ້ອງຄົບຄ້າສະມາຄົມໄປນັ້ນມານີ້ ເພື່ອໃຫ້ວຽກງານເດີນແມ່ນ ແລ່ນສະດວກ. ໄລຍະນີ້ເຖິງແມ່ນພູເພັດຈະມີອັນຜິດປົກກະຕິ ແຕ່ວ່າຊີວິດການກິນຢູ່ທາງດ້ານຄອບຄົວ ພູເພັດກໍບໍ່ເຄີຍຈະໃຫ້ເດືອດຮ້ອນ.

ວຽງມະນີເອົາຜ້າຈຸ່ມນ້ຳອຸ່ນເຊັດປາກເຊັດໃບໜ້າ ແລະ ການຄໍໃຫ້ແອນ້ອຍ ແລ້ວກໍຄິດປົງບັນຫາຂໍ້ສົງໃສທັງໝົດລົງວ່າ

" ອື... ຂໍໃຫ້ການເວລາເປັນເຄື່ອງຕັດສິນ "

3. ຈັນທາຢືນແຍງແວ່ນສຳຫລວດເບິ່ງເສື້ອພົນທລາສຸດເຊິ່ງທາກໍເອົາມາຈາກຮ້ານຕັດເຄື່ອງ ເມື່ອຕອນບ່າຍ 5 ໂມງແລງວານນີ້, ຈັນທາສຳຫລວດເບິ່ງທຸກຕະລາງນິ້ວຂອງຮ່າງກາຍ ທີ່ມີເສື້ອໃຫມ່ພົນນີ້ປົກຫຸ້ມນາງຮູ້ສຶກວ່າ ເສື້ອພົນນີ້ມັນກົມກືນກັນພິລຶກ ລະຫວ່າງ ຜິວໜັງຂອງນາງກັບສີ ແລະ ແບບເສື້ອ; ມັນແມ່ນການອອກແບບຂອງຊ່າງຕັດຫຍິບແຫ່ງໜຶ່ງທີ່ມີສີມືດີທັນສະໄຫມແຫ່ງຍຸກຄອມພິວເຕີ.

ຈັນທາເປື້ອງຊ້າຍເປື້ອງຂວາ ໝູນໄປໝູນມາຕໍ່ໜ້າແວ່ນນາງຍິ້ມ...ຍິ້ມດ້ວຍຄວາມພໍອົກພໍໃຈກັບການອອກແບບເສື້ອພົນນີ້, ແພກໍເນື້ອດີສີກໍງາມ ນາງພູມໃຈກັບເສື້ອພົນນີ້ຈົນຫົວໃຈເຕັ້ນຕຶກໆ ປຶດໜຶ່ງຈຶ່ງເອົາສາຍຄໍຄຳນ້ຳໜັກ 3 ບາດເຊິ່ງມີກໍ້ຮູບກາຫົວໃຈແຂວນຢູ່ , ຈັນທາຈຶ່ງມັນອອກມາໄວ້ເບື້ອງນອກເສື້ອ ສາຍຄໍກັບກໍ້ກາຫົວໃຈຢ່ອນເຕັງທັບເສື້ອພົນນັ້ນ ເບິ່ງແລ້ວຍິ່ງເພີ່ມຄວາມມີສະເໜທາ ຈັນ ທາ

ແນມໄປເບິ່ງແວ່ນອີກເທື່ອໜຶ່ງ ພ້ອມທັງເວົ້າປອບໃຈໂຕເອງວ່າ

" ອື...ຫື...ທ່ານີ້ງາມເດັ່ນດີ "

ຈັນທາເປື້ອງຂ້າງຊ້າຍຕື່ມອີກ ແລ້ວຫວີ່ຮວງໃບຫູໃສ່ແວ່ນ ສ່ອງເບິ່ງຕ່ອງຫູຄຳວົງໃຫຍ່ຮູເກືອບຫລິມກຳປັ້ນເດັກນ້ອຍ 3 ເດືອນຕ່ອງຫູວົງໃຫຍ່ຢ່ອນລົງເກືອບຈະຕັ້ງບ່າໄຫລ່. ຈັນທາຄິດສະຫລຽວ ໃຈເມື່ອເອົາສາຍຄໍອອກມາໄວ້ນອກເສື້ອ ເພາະມັນຈະເປັນການ ທ້າທາຍພວກມືຂີ້ດຽດຈົນເກີນໄປ. ນາງຈັບຍັດສາຍຄໍຄືນເຂົ້າ ໄວ້ໃນພື້ນເສື້ອ ນາງແນມໄປເບິ່ງແວ່ນອີກເທື່ອໜຶ່ງ ແລ້ວກໍເວົ້າໃຫ້ກຳລັງໃຈຕົນເອງວ່າ

" ຫື... ທ່ານີ້ກໍບໍ່ຂີ້ຮ້າຍ...ງາມຮຽບໆດີ "

ຖ້າຫາກມີໃຜຜູ້ໜຶ່ງລັກແນມເບິ່ງໃນເວລານີ້ກໍຄົງຈະຍົກໂປ້ແຖມກ້ອຍໃຫ້ກັບຈັນທາ ວ່ານາງງາມສົມນ້ຳສົມເນື້ອອີ່ຫລີ.

ຈັນທາ ເປັນຄົນຮູບຮ່າງໄດ້ສັດສ່ວນພໍດີບພໍດີ ຜິວເນື້ອຂາວແຕ່ບໍ່ແມ່ນຂາວແບບລູກຊອດ ໃບໜ້າກ້ຽງເກົາຈະຫາສິວຕຸ່ມໜຶ່ງກໍບໍ່ມີ , ປີນີ້ຈັນທາອາຍຸ ຢ່າງເຂົ້າ 28 ພໍດີຈັນທາຮຽນຈົບ ຊັ້ນອຸດົມແຕ່ອາຍຸ 16 ປີ, ຫລັງຈາກຮຽນຈົບແລ້ວ ກໍໄດ້ສະໝັກ ເຂົ້າເປັນພະນັກງານສັງກັດລັດຢູ່ກະຊວງແຫ່ງໜຶ່ງ; ພໍແຕ່ທຸລະກິດ ຮ້ານກິນດື່ມ, ບາເຕັ້ນລຳແຂ່ງຂັນເກີດຂຶ້ນປານດອກເຫັດ ຈັນທາຈຶ່ງ ລາອອກການ ເພື່ອເອົາຕົວເຂົ້າສູ່ວົງວຽນຂອງນັກທຸລະກິດທີ່ພວມ ເຕີເຫີມກັນ, ທຸກສິ່ງທີ່ຈັນທາຄາດຄິດເອົາໄວ້ກໍສົມປະສົງ ເພາະວ່າຖານະຄອບຄົວຂອງຈັນທານັ້ນ ເຖິງບໍ່ແມ່ນຂັ້ນເສດຖີແຕ່ກໍຈັດຢູ່ໃນ ປະເພດທີ່ມີອັນກິນອັນຢູ່ຈົນລົ້ນສົບເຫລືອປາກ, ໃນທີ່ສຸດຈັນທາກໍໄດ້ກາຍ

ເປັນເຈົ້າຂອງຜູ້ຈັດການສາວຂອງບາເຕັ້ນລຳແຫ່ງໜຶ່ງ.

ຈັນທາອອກຈາກຫ້ອງແຕ່ງກາຍແລ້ວເຂົ້າໄປຫ້ອງເຮັດວຽກນາງຖີ້ມກົ້ນລົງໃສ່ເກົ້າອີ້ນວມ ຈົນສະປິງອ່ອນໂຍບລົງຢ່າງແຮງ, ນາງເອນຫລັງໃສ່ພະນັກເກົ້າອີ້ຢູ່ໃນທ່າເຄິ່ງນັ່ງ ເຄິ່ງນອນ ຕ່ອງຫູ ໃຫ່ຍຢ່ອນລົງຢອງເທິງພະນັກເກົ້າອີ້ເຮັດໂຫລ້ງໂຫງ່ງຢູ່. ມາດທ່ານີ້ ມັນແມ່ນທ່າຂອງຜູ້ຈັດການ ຖ້າຫາກມີຜູ້ໃດລັກສັງເກດເບິ່ງນາງໃນ ເວລານີ້ ກໍຕ້ອງຍອມຮັບວ່ານາງຈຶ່ງແມ່ນສົມເປັນຜູ້ຈັດການບາເຕັ້ນ ລຳອີຫລີ.

ຈັນທາຍົກໂມງໃນແຂນຂຶ້ນເບິ່ງເກືອບ 9 ໂມງເຊົ້າແລ້ວ ນາງຖອນຫາຍໃຈບາດໃຫ່ຍຍາວຄືກັບວ່າມັນມີອັນອັດເຄືອງເອົາໄວ້ນີ້ແຫຼະ

" ເກືອບ 9 ໂມງແລ້ວບໍ່ຮູ້ວ່າໄປເຮັດຫຍັງຢູ່ໃສຈຶ່ງມາຊ້າກວ່ານັດເອົາໄວ້ "

ຈັນທາໄດ້ນັດກັບພູເພັດເອົາໄວ້ແຕ່ສອງມື້ກ່ອນວ່າ ວັນອາທິດ ນີ້ຈະພາກັນໄປທ່ຽວຫລົ້ມນ້ຳຕົກຕາດ ເວົ້າກັນວ່າຈະອອກເດີນທາງແຕ່ເວລາ 8 ໂມງ, ແວ່ຊົມນ້ຳຕົກຕາດຈັກບຶດແລ້ວກໍຈະເລີຍໄປ ງານແຕ່ງດອງໝູ່ຢູ່ໂພນໂຮງ, ດັ່ງນັ້ນຈັນທາຈຶ່ງແຕ່ງໂຕເປັນພິເສດ.

" ຫລືຈະເອີຄາງຊ້ຳສາບໍ "

ຈັນທາຄິດນ້ອຍໃຈຕົວເອງ, ບຶດໜຶ່ງສຽງໂທລະສັບກໍດັງກຣິ່ງ.
... ກິຣງ... ຂຶ້ນຈັນທາຟ້າວຍົກເອົາຫູໂທລະສັບຂຶ້ນມາຟັງ ພ້ອມທັງບອກຊື່ໄປກັບໂທລະສັບ

" ອາໂຫລ... ຈັນທາກຳລັງເວົ້າ "

ສຽງເວົ້າຈາກໂທລະສັບທາງຕົ້ນທາງດັງ ຕອບມາຕາມສາຍວ່າ

" ລໍຖ້າອ້າຍຈັກບຶດ ອ້າຍແວ່ແກ້ວຽກຢູ່ບໍລິສັດຄາວໜຶ່ງຈະອອກມາຫາ "

ຈັນທາຈື່ໄດ້ໂລດວ່າແມ່ນສຽງຂອງພູເພັດ, ພວມອາລົມບໍ່ດີ ຈັນທາຈຶ່ງຕອບຄືນໄປວ່າ

" ບໍລິສັດເຮັງຊວຍອີ່ຫຍັງ ວັນອາທິດກໍບໍ່ພັກ" ເວົ້າແລ້ວຈັນທາກໍວາງຫູໂທລະສັບລົງຢ່າງແຮງ ຈົນພູເພັດຜູ້ຟັງຢູ່ຕົ້ນທາງນັ້ນຕື່ນຍຸບ.

ປະມານ 15 ນາທີຕໍ່ມາ ພູເພັດກໍຂັບລົດມາຈອດຢູ່ໜ້າ ຮ້ານຕັ້ນລຳຂອງຈັນທາ ແລ້ວກໍບີບແກເປັນການສັນຍານວ່າມາຮອດແລ້ວ ພູເພັດພວມຈະໄຂປະຕູລົດອອກມາ ກໍພໍດີຈັນທາພາຍກະເປົາສີ ດຳຍ່າງອອກມາຫາກ່ອນ ພໍແຕ່ແນມເຫັນໜ້າຂອງພູເພັດ ຈັນທາກໍເວົ້າຂຶ້ນແບບບ່ອນໆວ່າ

" ຄອງຖ້າດົນຈະຕາຍ...ໝົດຄວາມຢາກໄປແລ້ວລະ " ທັງເວົ້າທັງພ່ອງໄຂປະຕູລົດເຂົ້າໄປນັ່ງລົງຂ້າງພູເພັດ ຝ່າຍພູເພັດກໍອັດປະຕູລົດເຂົ້າຄືນ ແລ້ວຖາມຈັນທາວ່າ

" ໄປເລີຍໂລດຫວະ ?"

ຈັນທາຍົກໂມງຢູ່ແຂນໃຫ້ພູເພັດເບິ່ງ ພ້ອມທັງຕອບວ່າ

" ໄປໂລດແຫລະ...ຈັກໂມງແລ້ວນີ້ ! "

" ຂໍໂທດນາຊາ ອ້າຍມີວຽກຈຳເປັນແທ້ຢູ່ບໍລິສັດ "

ຈາກນັ້ນ ພູເພັດກໍຂັບລົດພາຈັນທາມຸ່ງໜ້າອອກຈາກຕົວ ເມືອງວຽງຈັນ ໄປສູ່ສະຖານທີ່ນ້ຳຕົກຕາດທຳມະຊາດແຫ່ງໜຶ່ງ. ຢູ່ທີ່ ນ້ຳຕົກຕາດນີ້ນັ້ນ ຜູ້ຄົນບ່າວສາວຕະຫລອດເຖິງຜູ້ມີຄອບຄົວກໍພວມພາກັນຫລັ່ງໄຫລໄປຫລິ້ນໄປທ່ຽວ, ບາງຄົນບາງຄອບຄົວກໍພາກັນເລາະຊົມ

ຄວາມງາມຂອງທິວທັດທຳມະຊາດ, ບາງຄົນກໍລົງອາບນ້ຳໃຫ້ ເປັນການສະບາຍໃຈ. ພູເພັດ ແລະ ຈັນທາພາກັນເລາະຊົມຄວາມສວຍງາມສະຖານທີ່ນ້ຳຕົກຕາດ ດ້ວຍຄວາມເພີດເພີນ ແລະ ຖ່າຍຮູບໄວ້ເປັນທີ່ລະນຶກຫລາຍໂປ້ ແລ້ວກໍຊອກຊື້ຫນໍ່ໄມ້ ແລະ ຜັກປ່າຈຳ ນວນຫນຶ່ງ. ຈາກນັ້ນກໍໄປຮ່ວມງານດອງຫມູ່ຢູ່ໂພນໂຮງ.

4. ຄວາມຮັກເກີດຈາກຄວາມໃກ້ຊິດ ແລະ ເຫັນອົກເຫັນໃຈ, ຈາກນີ້ເປັນອາທິດຈາກອາທິດກໍເປັນເດືອນ ແລະ ຫລາຍເດືອນເຂົ້າເຫົ້າໃດຄວາມໃກ້ຊິດລະຫວ່າງພູເພັດ ກັບຈັນທາກໍຫຍັບເຂົ້າຫາກັນ. ພູເພັດກໍແມ່ນນັກທຸລະກິດ ຈັນທາກໍເປັນຜູ້ຈັດການບາເຕັ້ນລຳ ມັນຍິ່ງເຂົ້າໃກ້ກັນໄດ້ງ່າຍ, ການກັບບ້ານກັບເຮືອນຂອງພູເພັດ ກໍນັບ ມື້ຫ່າງເຫີນ ບາງອາທິດກໍຈະມາເຮືອນຫາເມຍຫາລູກສອງວັນ, ວຽງມະນີກໍເຄີຍໄດ້ເວົ້າໄດ້ລົມຫລາຍອັນກ່ຽວກັບຮີດຜົວຄອງເມຍທີ່ຈະປະຕິບັດຕໍ່ກັນ ແນວໃດ, ແຕ່ພູເພັດກໍບອກວ່າໄລຍະນີ້ເຂົາຫຍຸ້ງນຳວຽກທາງບໍລິສັດຫລາຍໂພດ ຫລາຍໆຄືນກໍຕ້ອງເຮັດວຽກຮອດກາງ ຄືນການຕົວະຂອງພູເພັດ ມັນບໍ່ສາມາດທີ່ຈະປິດຫູປັງຕາຂອງວຽງມະ ນີໄດ້; ມື້ນື່ອວຽງມະນີໄດ້ໂອກາດດີ ຈຶ່ງລົມກັບພູເພັດຜູ້ເປັນຜົວວ່າ

" ຍາມໃດອ້າຍກໍເຄີຍເວົ້າວ່າ ຍາກນຳວຽກບໍລິສັດບໍ່ສູ້ມີເວລາກັບເຮືອນຕາມປົກກະຕິໄດ້... ຖ້າຫາກຫຍຸ້ງວຽກບໍລິສັດແທ້ກໍຫາກດີຢູ່ດອກ ອັນນີ້ຢ້ານແຕ່ວ່າ..."

ວຽງມະນີເວົ້າມາຮອດແຕ່ພຽງນີ້ ພູເພັດຈຶ່ງຟ້າວເວົ້າຕັດບົດຂຶ້ນໂລດວ່າ

" ຄັນຊຸນນ້ອງເຂົ້າໃຈອ້າຍຄືແນວໃດ ?"

ວຽງມະນີຕອບແບບຕັ້ງຄຳຖາມໃຫ້ພູເພັດຄິດເອົາເອງ.

" ອ້າຍຄວນເຂົ້າໃຈອ້າຍເອງດີກວ່າທີ່ນ້ອງຈະບອກວ່າ ນ້ອງເຂົ້າໃຈອ້າຍຄືແນວໃດ "

ພູເພັດນິ່ງຊຶ່ງຢູ່ດົນເຕີບ ແລ້ວຈຶ່ງຖາມວຽງມະນີວ່າ

" ບົວສອນເວົ້າໃຫ້ນ້ອງຟັງຕີ "

ວຽງມະນີຕອບແບບຫ້ວນໆວ່າ

" ບໍ່ມີໃຜເວົ້າ ແຕ່ລົມມັນພັດມາກາຍຫູຂອງນ້ອງຊື່ໆ "

ພູເພັດທຳທ່າຫົວກາກໆຂຶ້ນແລ້ວເວົ້າວ່າ

" ບົວສອນອາດເຂົ້າໃຈອ້າຍຜິດ ທີ່ອ້າຍມັກໄປຫລິ້ນຢູ່ບາ ເຕັ້ນລຳ... ອ້າຍມັກໄປຫັ້ນກໍເພື່ອພົບພໍ້ຫມູ່ຄູ່ ໃນວົງການທຸລະກິດທໍ່ ນັ້ນເອງ "

ວຽງມະນີ ຈຶ່ງເວົ້າຕອບສັ້ນໆວ່າ

" ຄັນທໍ່ນັ້ນກໍແລ້ວໄປ "

ພູເພັດ ເຂົ້າໃຈດີວ່າວຽງມະນີ ໄດ້ຮູ້ເບື້ອງຫລັງຂອງເຂົາດີແຕ່ວ່າທຸກຄັ້ງທີ່ວຽງມະນີເວົ້າສຽດໆຂຶ້ນມາ ເພື່ອຢາກໃຫ້ພູເພັດ ສາລະພາບຜິດນັ້ນ ແຕ່ພູເພັດກໍໃຈແຂງພໍສົມກັບວ່ານັກເລງເຈົ້າສຳລານ , ແຕ່ສິ່ງທີ່ພູເພັດງຶດງໍ້ອັດສະຈັນຢູ່ໃນໃຈຂອງເຂົາກໍຄືວຽງມະນີບໍ່ ເຄີຍມີທ່າທີວ່າຈະເອົາຜິດເອົາແມ່ນ ພໍໃຫ້ມີປາກມີສຽງກັນຈົນຜິດບ້ານຜິດເມືອງ. ວຽງມະນີເວົ້າດ້ວຍຄວາມນິ້ມນວນອ່ອນຫວານ ນາງ ມັກຊອກຫາເຫດຜົນຫລາຍກວ່າທີ່ຈະວູບວາບໂວຍວາຍ. ຄວາມນິ້ມນວນອ່ອນຫວານຂອງວຽງມະນີ ບາງຄັ້ງມັນກໍເຮັດໃຫ້ພູເພັດຮູ້ສຶກລະອາຍໃຈໂຕເອງ ແຕ່ບາງຄັ້ງມັນພັດເຮັດໃຫ້ພູເພັດໄດ້ໃຈເຄີຍຕົວ,

ຈັນທາເຖິງຈະເປັນສາວແກ່ ແຕ່ກໍເປັນສາວຍຸກສະໄຫມຄອມພິວເຕີ ມີບົດບາດຢູ່ໃນວົງສັງຄົມກວ້າງຂວາງພໍສົມຄວນ, ເວົ້າງ່າຍໆກໍແມ່ນຈັນທາມີການດຳລົງຊີວິດແບບຄົນຣຸ່ນໃຫມ່ ທັນກັບສະພາບ ການເວົ້າເລື່ອງການນຸ່ງຖືເອີຍອງບໍ່ເຄີຍມີແບບເສື້ອຊຸດໃດທີ່ອອກ ແບບໃຫມ່ໆທີ່ບໍ່ເຄີຍໄດ້ປົກຄິງຂອງຈັນທາ. ວຽງມະນີເປັນຄົນມັກສະຫງົບສະຫງຽມດຳລົງຊີວິດເປັນແມ່ເຮືອນທີ່ດີ ຖ້າເບິ່ງແບບສາຍຕາ ຂອງຄົນຣຸ່ນໃຫມ່ກໍອາດຈະຄິດວ່າ ວຽງມະນີຮູ້ແຕ່ລ້ຽງລູກ ແລະ ການມັດຫມີ່ຕຳຫູກຕີນສິ້ນ ການແຕ່ງໂຕກໍເຮັດແບບທຳມະດາບໍ່ປະເຈີດປະເຈີ້

ພູເພັດບໍ່ພຽງແຕ່ຈະຫລົງໄຫລໃນຄວາມສາວຄວາມສວຍຂອງຈັນທາ ແຕ່ພູເພັດຍັງໄຝ່ຝັນນຳຄວາມຮັ່ງມີຂອງຈັນທາ ທີ່ສາມາດ ສ້າງໂຕເອງຂຶ້ນມາເຖິງຂັ້ນເປັນເຈົ້າຂອງຜູ້ຈັດການບາເຕັ້ນລຳ, ຈັນທາເຄີຍເວົ້ານຳພູເພັດວ່າ

" ຖ້າອ້າຍຕັດສິນໃຈຈະຮ່ວມຫມອນນອນຕຽງແທ້ຕຳແຫນ່ງເຈົ້າຂອງຜູ້ຈັດການກໍຈະເປັນຂອງອ້າຍ... ເວລານັ້ນກິດຈະການ ຂອງພວກເຮົາທັງບາເຕັ້ນລຳ ແລະບໍລິສັດກໍ່ສ້າງ ກໍຈະເດີນແມ່ນແລ່ນ ດີມີຫນ້າມີຕາຍິ່ງກວ່າເກົ່າ ຊື່ຂອງພູເພັດ ແລະ ຈັນທາກໍຈະດັງ ກ້ອງຟ້າເມືອງລາວ "

ຍ້ອນຄວາມງາມບວກກັບຖານະອັນດີ ຈຶ່ງເຮັດໃຫ້ພູເພັດຕິດເບັດສາຍແລບຂອງຈັນທາ ຫວັງຈະໄດ້ເປັນເຈົ້າຂອງຜູ້ຈັດການບາ ເຕັ້ນລຳ ແລະ ອຳນວຍການບໍລິສັດກໍ່ສ້າງ ລວມເປັນສອງຕຳແຫນ່ງ.ຕົກມາໃນໄລຍະນີ້ປະກົດວ່າກິດຈະການບໍລິສັດກໍ່ສ້າງກໍມັກຈະມີລາຍຈ່າຍຫລາຍກວ່າລາຍໄດ້ສະເຫມີ ທັງນີ້ຍ້ອນວ່າພູເພັດ ບໍ່ຄ່ອຍຈະເອົາໃຈ

ໃສ່ທຸລະກິດເຫົ້າທີ່ຄວນ ເຂົາພວມຫລົງໄຫລຢູ່ກັບການຫລິ້ນກິນ ແບບ ຟູມເຟືອຍ ແລະ ຖືກມົນຂັງຂອງຈັນທາແບບມືນຫູມືນຕາບໍ່ອື້ນ. ສ່ວນ ຈັນທາເອງກໍທຸ້ມເທທຸກຢ່າງເຂົ້າໃສ່ພູເພັດ ນາງຄິດວ່າການລົງ ທຶນ ຂອງນາງທັງຫມົດນັ້ນຕ້ອງກຸ້ມຄ່າ ເມື່ອໃດພູເພັດຫາກຕົກມາຢູ່ໃນກໍາ ມືຂອງນາງເຕັມຮ້ອຍເປີເຊັນແລ້ວ ເມື່ອນັ້ນນາງຈິ່ງຈະບີບໃຫ້ຜົນກໍາ ໄລມັນອອກມາຕາມຄວາມຕັ້ງໃຈ.

ໃນໄລຍະນີ້ພູເພັດ ກໍມັກບໍ່ຄ່ອຍຫ່າງເຫີນຈາກຄອບຄົວ ນົວເນົາ ຢູ່ ແຕ່ການຫລິ້ນ ມື້ໃດກໍຈະມີຫນ້າຢູ່ແຕ່ບາເຕັ້ນລໍາ, ວັນເສົາວັນທິດ ກໍ ຈະໄປຫລິ້ນໄປທ່ຽວຄູ່ກັບຈັນທາ. ຖ້າມື້ໃດມາເຮືອນກໍຕົວະເມຍ ວ່າ ວຽກບໍລິສັດຫຍຸ້ງຍາງອາທິດກໍໄດ້ໄປກວດວຽກຢູ່ຕ່າງແຂວງ, ເລື່ອງ ທັງຫມົດທີ່ພູເພັດ ເອົາມາເປັນຂໍ້ອ້າງນັ້ນ ບໍ່ແມ່ນວຽງມະນີຈະບໍ່ຮູ້ທັນ ນາງຮູ້ດີວ່າດຽວນີ້ພູເພັດພວມເຮັດຫຍັງ ເພື່ອອັນໃດ ແຕ່ວຽງມະ ນີ ບໍ່ຢາກຈະຜິດຖຽງກັນ ເປັນການອາຍຊາວບ້ານຮ້ານຫຍ້າ, ວຽງມະນີ ຕັ້ງໃຈເອົາໄວ້ວ່າ ຈະເອົາຄວາມດີຂອງນາງເປັນເຄື່ອງພິສູດໃຫ້ ພູ ເພັດໄດ້ເຫັນ. ແຕ່ກໍບໍ່ຫມາຍຄວາມວ່າ ວຽງມະນີຈະເຮັດຫູ ຫນວກ ກົ່ນຟານ ເມື່ອໃດມີໂອກາດ ນາງກໍໄດ້ຕັກເຕືອນ ແລະ ອ້າງ ເຫດ ຜົນໃຫ້ພູເພັດຮູ້, ແຕ່ພູເພັດຫາກບໍ່ຍອມເອົາຫູໂຕ່ງ ເຂົາຍິ່ງບີນເລິກ ເຂົ້າໄປສູ່ຫຸບເຫວຢ່າງບໍ່ຢ້ານກວາໃດໆ. ຫມູ່ຄູ່ຮັກແພງຫລາຍຄົນ ກໍ ເຄີຍໄດ້ເຕືອນພູເພັດ ແລະ ຍົກຍ້ອງວ່າ ວຽງມະນີເປັນຜູ້ຍິງທີ່ ດີ ເປັນເມຍຜູ້ປະເສີດ ແຕ່ພູເພັດກໍມັກຈະອ້າງເຫດຜົນສ່ວນຕົວວ່າ ຈັນ ທາກໍຍັງເປັນຜູ້ປະເສີດອີກຜູ້ຫນຶ່ງ ໃນຊີວິດຂອງເຂົາ.

**5.** ຄືນນັ້ນເວລາເກືອບ 11 ໂມງແລ້ວ ສິ່ງທີ່ວຽງມະນີບໍ່ເຄີຍ

ຄາດຄິດເອົາໄວ້ກ່ອນວ່າມັນຈະເກີດຂຶ້ນ ແຕ່ແລ້ວມັນກໍເກີດຂຶ້ນ ໂດຍບັງເອີນແທ້ໆ ເມື່ອສຽງກິ່ງຂອງໂທລະສັບຢູ່ຫ້ອງຮັບແຂກດັງ ຂຶ້ນ ວຽງມະນີຟ້າວລຸກອອກຈາກບ່ອນນອນ ຟ້າວໄປຮັບ ພໍແຕ່ຍົກຫູໂທລະສັບຂຶ້ນມາຟັງ ກໍໄດ້ຍິນສຽງຂອງຜູ້ຍິງເວົ້າມາຈາກຕົ້ນທາງວ່າ

" ອາໂຫລ... ຂໍໂທດນ້ຳເບີ... ແມ່ນບໍ ?"

ວຽງມະນີຈຶ່ງຟ້າວຕອບຮັບດ້ວຍນ້ຳສຽງ ອັນອ່ອນຫວານ

" ເຈົ້າ...ແມ່ນແລ້ວ... ຂໍໂທດມີວຽກຫຍັງນໍ ?"

ສຽງຂອງຜູ້ຍິງທາງຕົ້ນທາງຕອບຄືນມາວ່າ

" ນີ້ຢູ່ພະແນກສຸກເສີນ..."

ສຽງຂອງຜູ້ຍິງ (ນາງພະຍາບານ ) ເວົ້າບໍ່ທັນສຸດປະ ໂຫຍກເທື່ອ ວຽງມະນີກໍຖາມຕັດຕອນຂຶ້ນວ່າ

" ພະແນກສຸກເສີນ...ພະແນກສຸກເສີນມີຫຍັງກ່ຽວຂ້ອງ ກັບເຂື້ອຍບໍ ?"

ວຽງມະນີຕົກໃຈ ຈົນຫລົງໃຊ້ຄຳວ່າເຂື້ອຍ ທັງໆທີ່ບໍ່ຮູ້ວ່າຜູ້ ໂທລະສັບມານັ້ນອ່ອນແກ່ກວ່ານາງຫລືບໍ

" ເຮືອນນີ້ມີຄົນຊື່ພູເພັດບໍ ? "

" ມີແທ້... ລາວແມ່ນຜົວຂອງເຂື້ອຍ...ມີຫຍັງກ່ຽວຂ້ອງກັບລາວບໍ ?"

" ດຽວນີ້ລາວປະສົບອຸບັດເຫດ ເຈົ້າໜ້າທີ່ຕຳຫລວດນຳ ລາວມາສົ່ງຫ້ອງສຸກເສີນ ທາງໂຮງໝໍໄດ້ເຫັນນາມບັດຂອງລາວຢູ່ ຖົງເສື້ອຈຶ່ງໂທແຈ້ງມາ... ຖ້າເຂື້ອຍແມ່ນເມຍລາວ ຂໍໃຫ້ໄປທີ່ ພະແນກສຸກເສີນດ່ວນ "

ພຽງແຕ່ໄດ້ຍິນວ່າປະສົບອຸບັດເຫດ ວຽງມະນີເກືອບຈະເປັນລົມ ແຕ່ນາງຕັ້ງໃຈໄວ້ທັນຈຶ່ງຖາມຄືນໄປວ່າ

" ລາວເຈັບຫລາຍບໍ...ເປັນຫຍັງຈຶ່ງເກີດອຸບັດເຫດ" ແຕ່ທາງໂຮງຫມໍອາດຈະສົນລະວົນກັບຄົນເຈັບຈຶ່ງບໍ່ມີເວລາຈະຕອບລາຍ ລະອຽດໄດ້ ຈຶ່ງຕອບວ່າ

" ເຈັບຫລາຍສົມຄວນ ຂໍໃຫ້ເອື້ອຍຟ້າວໄປພະແນກສຸກ ເສີນຂອງໂຮງຫມໍ...ດ່ວນ "

ແລ້ວທາງຕົ້ນທາງກໍວາງຫູໂທລະສັບເປັນອັນວ່າການຕິດຕໍ່ ຜ່ານທາງໂທລະສັບຫມົດພຽງນີ້.

ຢູ່ທີ່ພະແນກສຸກເສີນຂອງໂຮງຫມໍ ມີທັງພໍ່ແມ່ຂອງວຽງມະນີແລະ ນາງບົວສອນ ພ້ອມດ້ວຍຜົວກໍໄດ້ໄປກັບວຽງມະນີ ເພື່ອເບິ່ງອາການເຈັບຂອງພູເພັດ. ພໍແຕ່ໄປຮອດ ແລະ ໄດ້ແຈ້ງໃຫ້ທາງໂຮງຫມໍ ຮູ້ວ່າ ນາງເປັນເມຍຂອງຄົນເຈັບ ພ້ອມພໍ່ແມ່ ແລະ ຫມູ່ຄູ່ໄດ້ມາຮອດແລ້ວ ທາງໂຮງຫມໍຈຶ່ງບອກໃຫ້ຮູ້ວ່າ ດຽວນີ້ຄົນເຈັບໄດ້ເອົາ ເຂົ້າຫ້ອງຜ່າຕັດ ອາດຈະໄດ້ຫຍິບຫລາຍບ່ອນ. ວຽງມະນີຈຶ່ງຟ້າວ ຖາມນາຍຫມໍທັງຮ້ອງໄຫ້ສະອຶກສະອື້ນວ່າ

" ລາວເຈັບຫນັກບໍ ເປັນຫຍັງຈຶ່ງເກີດອຸບັດເຫດ "

ນາຍຫມໍຈຶ່ງໄດ້ຕອບອະທິບາຍໃຫ້ຮູ້ວ່າ ອາການເຈັບຂອງ ລາວກໍຫນັກສົມຄວນ ແຕ່ຫາກບໍ່ເຖິງຂັ້ນອັນຕະລາຍດອກ ເພາະສ່ວນຫຼາຍມີແຕ່ຫນ້າຂອງລາວ ອາດຈະຖືກແກ້ວແວ່ນລົດແຕກຟັງບາດ, ສ່ວນສາເຫດນັ້ນ ຕາມການລາຍງານຂອງເຈົ້າຫນ້າທີ່ຕຳຫລວດທີ່ນຳ ມາສົ່ງນັ້ນ ບອກວ່າລາວເມົາເຫລົ້າຂັບລົດອາດຈະເຊືອບຫລັບ ລົດ ຈຶ່ງ

ເຈືອກອອກຈາກທາງໄຟທຳກັບເສົາໄຟຟ້າ ແລະ ລົດອາດຈະແລ່ນບໍ່ໄວປານໃດ ແລະ ລາວເອງອາດຈະຊວາດຮູ້ເມື່ອກ່ອນເວລາ ລົດພວມເຈືອກອອກຈາກທາງລາວອາດຈະຍັງມີສະຕິດີພໍຈະຢຽບຟະແລັງ ລົດທັນສ່ວນໃດສ່ວນໜຶ່ງ ລົດຈຶ່ງຕຳເສົາໄຟຟ້າບໍ່ແຮງປານໃດ ພຽງແຕ່ຫົວລົດບຸ້ມແກ້ວແວ່ນແຕກມຸ່ນ, ເວລາທີ່ເຈົ້າໜ້າທີ່ຕຳຫລວດເຂົ້າໄປຊ່ອຍເຫລືອນັ້ນ ເຫັນລາວນັ່ງຫລັບຄາພວງມາໄລລົດຢູ່. ຕາມໜ້າຕາຂອງລາວເຕັມແຕ່ເລືອດ ຈຶ່ງຟ້າວນຳສົ່ງຫ້ອງສຸກເສີນ. ທາງຫ້ອງສຸກເສີນໄດ້ພົບນາມບັດຂອງລາວ ຈຶ່ງໂທລະສັບໄປບອກ.

ປະກົດວ່າທັງວຽງມະນີ, ພໍ່ແມ່ ແລະ ນາງບົວສອນກັບຜົວຕ່າງກໍສະແດງຄວາມຂອບອົກຂອບໃຈຕໍ່ທາງໂຮງໝໍ ທີ່ໄດ້ແຈ້ງໃຫ້ຮູ້, ແຕ່ສິ່ງທີ່ໝາກຫົວໃຈຂອງທຸກຄົນພວມເຕັ້ນປານສຽງຕຳເຂົ້າຢູ່ນັ້ນ ແມ່ນການລໍຄອຍຄຳຕອບຈາກຫ້ອງຜ່າຕັດ ແລະ ຢາກເຫັນໜ້າພູເພັດວ່າເຈັບເຖິງຂັ້ນໃດແທ້, ໂດຍສະເພາະແມ່ນວຽງມະນີບໍ່ຈັກຊິລຸກຊິນັ່ງຢູ່ຢ່າງບໍ່ເປັນສຸກເລີຍ.

ປະມານເຄິ່ງຊົ່ວໂມງ ປະຕູຫ້ອງຜ່າຕັດກໍໄຂອອກຕຽງຂອງ ຄົນເຈັບກໍຖືກຍູ້ອອກມາ ຮ່າງຂອງພູເພັດກໍນອນຫງາຍຢູ່ເທິງຕຽງແຕ່ວ່າຕາມໃບໜ້າເຕັມແຕ່ນ້ຳຢາແດງ ເກືອບຈະຈື່ບໍ່ໄດ້ວ່າພູເພັດ, ພໍແຕ່ຕຽງຄົນເຈັບຍູ້ອອກຫວິດຫ້ອງຜ່າຕັດ ວຽງມະນີກໍແລ່ນຫລຸບເຂົ້າ ໃສ່ກ່ອນໝູ່ ທັງສະອຶກສະອື້ນໄຫ້ເຂົ້າກອດທັງປາກກໍໄດ້ແຕ່ເອີ້ນວ່າ

" ອ້າຍເພັດ...ອ້າຍເພັດ...ອ້າຍເປັນຫຍັງໄປ."

ພູເພັດໄດ້ຍິນສຽງຂອງວຽງມະນີ ພໍເປັນຫວາໆໃນຫູ ຈຶ່ງພະຍາຍາມມືນຕາມອຍຂຶ້ນເບິ່ງ ດ້ວຍຄວາມຍາກເຢັນແສນເຂັນເພາະມັນ

ເຈັບແສບໄປທົ່ວທັງໃບໜ້າ ນ້ຳຕາເມັດໃສໆຂອງເຂົາໄຫລຊຶມອອກມາປົນກັບຄາບຢາແດງ...

ເພື່ອສະດວກໃນການປະຕິບັດໜ້າທີ່ຂອງແພດໜໍ່ຕໍ່ຄົນເຈັບ ຈະໄດ້ຝາວນຳຄົນເຈັບໄປພັກຜ່ອນໃນຫ້ອງ ນາງໜໍ່ຈຶ່ງເວົ້າວ່າ

" ຂໍໂທດ...ພວກນ້ອງຈະນຳລາວໄປນອນຕຽງຫລວງຄົນ ເຈັບ...ດຽວນີ້ລາວຍັງເມົາເຫລົ້າຢູ່ ລາວເວົ້າຫຍັງນຳເຂື້ອຍບໍ່ທັນ ໄດ້ເທື່ອດອກ ໃຫ້ລາວໄດ້ພັກຜ່ອນກ່ອນ ລາວບໍ່ເຈັບຫຍັງຫລາຍ ດອກບ່ອນອື່ນ ມີແຕ່ໜ້າຂອງລາວຖືກແວ່ນລົດບາດ 2-3 ບ່ອນພວກນ້ອງໄດ້ຫຍິບໃຫ້ແລ້ວ."

ຈາກຄຳບອກກ່າວຂອງແພດຜ່າຕັດ ເຮັດໃຫ້ວຽງມະນີຍິ້ມນ້ອຍໆພ້ອມກັບຢາດນ້ຳຕາແຫ່ງຄວາມດີໃຈ. ສຳລັບພໍ່ແມ່ ແລະ ນາງບົວສອນກັບຜົວໃພງກໍວ່າ ສາທຸແລ້ວທ່ານໜໍ່ເອີຍຄັນຫາກເປັນແຕ່ ພຽງສໍ່ານັ້ນ.

ຄວາມຈິງແລ້ວອາການເຈັບຂອງພູເພັດນັ້ນ ຖ້າວ່າເຂົາບໍ່ ເມົາເຫລົ້າ ກໍອາດສາມາດທີ່ເວົ້າລົມກັບວຽງມະນີ, ບົວສອນ ແລະ ພໍ່ສ່ຽວໄດ້ສ່ວນໃດສ່ວນໜຶ່ງ ເພາະວ່າເວລາເຈົ້າໜ້າທີ່ຕຳຫລວດນຳສົ່ງຫ້ອງສຸກເສີນນັ້ນ ເຂົາຍັງພໍຕັ້ງສະຕິໄດ້ຢູ່, ເຂົາຍັງໄດ້ບອກ ກັບເຈົ້າໜ້າທີ່ຕຳຫລວດໃຫ້ຊ່ອຍເບິ່ງລົດໃຫ້ແນ່.

ຄືນນັ້ນ ວຽງມະນີ, ບົວສອນ ແລະ ຜົວຂອງນາງບົວສອນກໍໄດ້ຢູ່ເຝົ້າເບິ່ງຕິດຕາມອາການຂອງພູເພັດບໍ່ປະບໍ່ວາງ. ສຳລັບພູ ເພັດນັ້ນ ເຖິງແມ່ນອາການເຈັບບວກກັບຄວາມເມົາກໍຈິງ ແຕ່ເມື່ອ ລົດຊາດຂອງຄວາມເມົາເຫີຍໄປແນ່ແລ້ວ ເຂົາຈຶ່ງຄ່ອຍໆມືນຕາຂຶ້ນພ້ອມ

ຫົວຍົກແຂນຄ້າຍໆກັບວ່າຢາກພິກລີງ ດັ່ງນັ້ນວຽງມະນີຈຶ່ງຟ້າວ ຈັບແຂນຂອງເຂົາເອົາໄວ້ ແລ້ວເວົ້າກັບພູເພັດຄ່ອຍໆວ່າ.

" ອ້າຍເພັດ...ອ້າຍເພັດ...ອ້າຍຮູ້ເມື່ອແລ້ວຫວາອ້າຍ ພິກລີງບໍ່ໄດ້ເທື່ອດອກ ອ້າຍຖືກບາດເຈັບອ້າຍຮູ້ບໍ່... ອ້າຍຈື່ນ້ອງ ບໍ່ ອ້າຍຈື່ບົວສອນ ແລະ ພໍ່ສ້ຽວບໍ່ ?"

ພູເພັດຫລຽວຕາເບິ່ງໜ້າຂອງວຽງມະນີ, ບົວສອນ ແລະ ພໍ່ສ້ຽວ ແລ້ວກໍງຶກຫົວຄ່ອຍໆສະແດງວ່າຈື່ໄດ້ດີ ເຮັດໃຫ້ວຽງມະນີ ຍິ້ມທັງນ້ຳຕາ ເພາະຄວາມດີໃຈແລ້ວຄ່ອຍໆວາງແຂນພູເພັດລົງພາດ ຢູ່ໜ້າເອິກ.

ຈາກນັ້ນ, ພູເພັດກໍຈຶ່ງຄ່ອຍໆເຊື່ອບຫລັບລົງແລ້ວມາຕື່ນ ຕອນເກືອບ 5 ໂມງເຊົ້າ, ເຂົາຫລັບຕາວາດພາບຍ້ອນຄືນເຖິງ ເຫດການທີ່ເກີດຂຶ້ນ ເຂົາຈື່ໄດ້ວ່າ ກ່ອນຈະອອກຈາກບາຕັ້ນລຳຂອງຈັນທາ ເພື່ອເມືອເຮືອນທາວຽງມະນີ ແລະ ແອນ້ອຍ ເຊິ່ງບໍ່ໄດ້ ພົບເກືອບອາທິດໜຶ່ງແລ້ວ ເພາະເຂົາໄດ້ຕົວະວຽງມະນີວ່າຈະໄປກອດວຽກຢູ່ປາກເຊ, ເຂົາຈື່ໄດ້ວ່າໄດ້ມີປາກມີສຽງກັນກັບຈັນທາກ່ຽວກັບເລື່ອງວຽກບໍລິສັດ ເຊິ່ງຈັນທາຢາກໃຫ້ເຂົາໂອນກິດຈະການທັງໝົດເປັນຂອງຈັນທາ ແຕ່ເຂົາບໍ່ຍອມ ເພາະຄິດວ່າມັນຍັງບໍ່ທັນເຖິງ ເວລາເທື່ອ ຈຶ່ງເກີດມີປາກ ມີສຽງກັນແລ້ວເຂົາກໍຂັບລົດອອກມາ.ເຂົາຈື່ວ່າເຂົາເມົາໜັກສົມຄວນ ແຕ່ເຊື່ອວ່າພໍຈະຂັບລົດກັບເຮືອນໄດ້ . ແຕ່ພໍຂັບມາຕາມທາງເຂົາໄດ້ຫລົງເຊື່ອບໄປວູບດຽວ ຊວາດຮູ້ເມື່ອກໍພໍດີລົດອອກຈາກທາງຈະແລ່ນເຂົ້າໃສ່ເສົາໄຟຟ້າ ເຂົາຕັ້ງສະຕິ ໄດ້ທັນ ຈຶ່ງຢຽບຜະແລັງພໍດີກັບບາດ ຫົວລົດຕຳກັບເສົາໄຟ ຖ້າບໍ່ດັ່ງນັ້ນ

ຄົງຈະ...ຄິດມາຮອດຕອນນີ້ ເຂົາຖອນຫາຍໃຈ ບາດຍາວ ເຄືອ ເພາະມັນຫວາດສຽວປານກັບວ່າເສັ້ນຢາແດງຜ່າແປດເອົາໂລດ , ເຂົາຄິດຕໍ່ໄປອີກວ່າຫລັງຈາກຫົວລົດຕຳເຂົ້າໃສ່ເສົາໄຟຟ້າແລ້ວເຂົາ ຈື່ວ່າແວ່ນລົດຈຳນວນຫນຶ່ງໄດ້ແຕກຟົ້ງມາຕຳໃສ່ໃບຫນ້າຂອງເຂົາ , ຈັກຂອງລົດມອດປິບ ເຂົາໄດ້ຫມູບຫນ້າໃສ່ພວງມາໄລລົດ ແລ້ວກໍມືນ ງົງຫົວຮູ້ສຶກແສບທີ່ບໍລິເວນໃບຫນ້າ, ຕໍ່ມາກໍມີສຽງຄົນດັງຈໍແຈ ຂຶ້ນ ແລ້ວກໍມີຄົນໄຂປະຕູລົດໂຊມເອົາເຂົາອອກມາຂຶ້ນລົດອີກຄັນຫນຶ່ງ.

**6.** ພູເພັດໄດ້ນອນປິ່ນປົວບາດແຜຢູ່ໂຮງຫມໍເປັນເວລາ 3 ວັນ ຈິ່ງອອກມາຢູ່ເຮືອນ, ຕະຫລອດເວລາ 3 ວັນ 3 ຄືນຢູ່ໂຮງຫມໍນັ້ນ ວຽງມະນີໄດ້ເອົາໃຈໃສ່ບົວລະບັດພູເພັດທຸກຢ່າງເຖິງແມ່ນພູເພັດຈະ ເຄີຍເຮັດໃຫ້ນາງມີຄວາມທຸກໃຈມາແລ້ວກໍຕາມ ແຕ່ນາງຖືວ່າພູເພັດ ຍັງເປັນຜົວຂອງນາງທີ່ຖືກຕ້ອງຕາມກົດຫມາຍ ແລະ ຮີດຄອງປະເພ ນີສົມທຳ. ສ່ວນຈັນທານັ້ນ ເຖິງຈະຮູ້ວ່າ ພູເພັດປະສົບອຸບັດເຫດ ກໍ ຕາມ ແຕ່ກໍບໍ່ເຄີຍອາໄລໄຍດີ ເພາະຄວາມຮັກຂອງຈັນທາທີ່ມີຕໍ່ ພູ ເພັດນັ້ນ ມັນເກີດຈາກຖານະສົມບັດຄວາມລ້ຳລວຍເປັນສື່ຮັກ ເມື່ອ ມັນບໍ່ເປັນໄປຕາມຄວາມຄາດຄິດແລ້ວ ກໍຖືວ່າທຸກສິ່ງຢ່າງສົມສຸດ ກັນ ແບບຫມາກນາວບໍ່ມີນ້ຳ.

ເວລາຢູ່ໂຮງຫມໍນັ້ນ ວຽງມະນີໄດ້ສະແດງຄວາມບໍລິສຸດໃຈແລະ ຫ່ວງໄຍຕໍ່ເຫດການທີ່ເກີດຂຶ້ນກັບພູເພັດວ່າ.

" ອ້າຍເພັດ... ຖ້າຫາກອ້າຍເປັນຫຍັງໄປນ້ອງຄົງຈະ ເປັນ ບ້າ ແລະ ແອນ້ອຍລູກຂອງເຮົາກໍຈະ..."

" ອ້າຍຮູ້ສຶກເສຍໃຈ...ເສຍໃຈໃຫ້ອ້າຍເອງທີ່ໄດ້ຫລົງ ມົວ

ເມົາ ແລະ ເຮັດທຸກສິ່ງທຸກຢ່າງຕາມແຕ່ໃຈຂອງອ້າຍຄິດ... ຖ້າອ້າຍຟັງຄວາມນ້ອງ ອ້າຍຄົງຈະບໍ່ມີວັນນີ້...ຕໍ່ນີ້ໄປອ້າຍຈະຕັ້ງໃຈເຮັດວຽກເພື່ອເມຍເພື່ອລູກ ຈະຕັ້ງຕົນເປັນພໍ່, ເປັນພໍ່ທີ່ດີ "

" ຖ້າອ້າຍຮູ້ສຶກຕົວໄດ້ ນ້ອງກໍ່ສາທຸນຳ ເພື່ອວ່າຄອບຄົວຂອງເຮົາຈະໄດ້ເປັນຝັ່ງເປັນຝາ "

" ວຽງມະນີ...ນ້ອງຈະລົງໂທດອ້າຍແນວໃດ ອ້າຍກໍ່ຍອມ "

" ນ້ອງຈະບໍ່ລົງໂທດອ້າຍດອກ...ອ້າຍລົງໂທດຂອງອ້າຍເອງ ສຳນຶກຫນັກຫນາພໍແຮງແລ້ວ "

ພູເພັດຈັບມືຂອງວຽງມະນີມາກຳໄວ້ແຫນ້ນໆ ທັງພອງແນມເບິ່ງຫນ້າຂອງວຽງມະນີ ດ້ວຍແວວຕາຂອງຄົນທີ່ຮູ້ສຶກຮັບຜິດ ແລະ ຈະເລີ່ມຕົ້ນຊີວິດທີ່ຮັກດຽວໃຈດຽວ.

" ແຕ່ນີ້ໄປອ້າຍຈະມີແຕ່ນ້ອງຄົນດຽວເທົ່ານັ້ນໃນຊີວິດ "

ວຽງມະນີຍິ້ມບາງໆໃຫ້ກັບພູເພັດ, ສ່ວນພູເພັດກໍ່ຍິ້ມໆຈົນແກ້ມບີ່ທັງໆທີ່ຮອຍຫຍິບຢູ່ໃບຫນ້າຍັງມີອາການເຄືອງໆຢູ່.

ຄືນນັ້ນ ພູເພັດນອນຢ່າງສະບາຍ ເຂົາບໍ່ເມົາອີກແລ້ວ ຂ້າງ ໆ ເຂົາກໍ່ມີວຽງມະນີ ແລະ ແອນ້ອຍຜູ້ຫນ້າຮັກ. ພູເພັດເອົາແຂນກ່າຍຫນ້າຜາກແລ້ວວາດພາບຍ້ອນຄືນເຖິງວິວັດຊີວິດຂອງເຂົາ ໃນເວລາຜ່ານມາເກືອບຫນຶ່ງປີເຕັມໆ ເຂົາຮູ້ສຶກເສຍໃຈທີ່ໄດ້ເຮັດໃຫ້ວຽງມະນີຕ້ອງເປັນທຸກໃຈ, ແຕ່ເຂົາກໍ່ອົດຊົມເຊີຍນ້ຳໃຈອັນບໍລິສຸດ ຜ່ອງໃສຂອງວຽງມະນີບໍ່ໄດ້ ເພາະວ່າຕະຫລອດເວລາທີ່ເຂົາຫລົງໄຫລຢູ່ໃນຄວາມມືດມົວເຫັນແກ່ຕົວນັ້ນ ວຽງມະນີກໍ່ບໍ່ເຄີຍຈະມີປາກ ມີສຽງອັນໃດຮຸນແຮງ ພໍໃຫ້ຊາວບ້ານໄດ້ກ່າວຂ້ອນນິນທາ ວຽງມະ ນີ

ເຄີຍເວົ້າ ແລະ ເຕືອນເຂົາແຕ່ໃນທາງດີ ມັກອ້າງເຫດຜົນເປັນສຳຄັນ...ໃນທີ່ສຸດຄວາມດີຂອງວຽງມະນີ ກໍເອົາຊະນະຄວາມຊົ່ວຂອງເຂົາໄດ້, ບັດນີ້ຈຶ່ງຮູ້ວ່າ ເສັ້ນທາງທີ່ເຂົາຫລົງເດີນໄປໃນໄລ ຍະໜຶ່ງນັ້ນ ມັນແມ່ນທຸບເຫວອັນບໍ່ເພິງປາຖະໜາຂອງວຽງມະນີກໍ ຄືສັງຄົມຮີດຄອງປະເພນີສົນທຳ, ບັດນີ້ຈຶ່ງຮູ້ວ່າຜູ້ຍິງຄືຈັນທານັ້ນ ມີແຕ່ຄວາມຮັກອັນຈອມປອມ ແຕ່ວຽງມະນີບໍ່ແມ່ນຜູ້ຍິງແນວນັ້ນ ວຽງມະນີສົມເປັນກຸລະສະຕີສົມເປັນແມ່ສີເຮືອນ

ພູເພັດງວາກໄປຫາວຽງມະນີ ທີ່ພວມນອນຫລັບຢູ່ຂ້າງໆກິ່ນຫອມຈາກເຮືອນຜົມຂອງນາງສົ່ງກິ່ນອ່ອນໆມາຕຳໃສ່ຮູດັງ ປະສານກັບກິ່ນຫອມຂອງດອກຊ້ອນ ທີ່ວຽງມະນີເກັບມາບູຊາເທິງຫົວບ່ອນນອນ ມັນຊ່າງກົມກືນກັນເອົາແທ້ເອົາວ່າ, ທັງສອງກິ່ນມັນແມ່ນກິ່ນຫອມອັນ ບໍລິສຸດຜຸດຜ່ອງ ມັນບໍ່ແມ່ນກິ່ນຫອມທີ່ປອມແປງ ຫລືແອບແຝງໄວ້ ເຊິ່ງຢາພິດ. ແລະ ກິ່ນນີ້ຈະຫອມໄປຄຽງຄູ່ກັບເຂົາຈົນວິນາທີ ສຸດທ້າຍຂອງຊີວິດ.

# ໃຈຕາ

+ ດວງຕາໃຜຄູ່ນັ້ນ ວັນໜຶ່ງທີ່ຮ່ຽມເຫັນ
ເປັນແສງຕາປະກາຍແສງ ແບ່ງເບົາບາງຮ້ອນ
ຕາອ່ອນຫວານຂານຂໍ້ ຍົກອນກອຍກ່າວ
ແຍງຕາເຈົ້າມີມົນ ກະສັນພໍ້ຢູ່ບໍ່ເຊົາ

+ ແສງຕາເຈົ້າປາກເວົ້າ ບົນບອກຄວາມໃນ
ໃຈຕານາງໂຣມຮັກ ໂອບອາລີຕອມຕຸ້ມ
ດວງຕາໃສບໍ່ມີຂຸ່ນ ຊິວຊົ່ວແໜງໜ່າຍ ຫຍັງແລ້ວ
ໃຈຕາໝາຍຜູກຝັນ ຂັນຊ້ອານແບ່ງເບົາ

+ ຍາມແສງຕາຍາ່ວຍິ້ມ ປານພິມບອກຄວາມໝາຍ
ເພື່ອຜ່ອນຄາຍຄວາມທຸກ ທັ້ງແທງໂທມທ້ອນ
ຕາປັ້ນທອນຄວາມເສົ້າ ໃຫ້ບົກເບົາບາງປົ່ນ
ດວງຕາຍິນອາດຖອຍ ຄຳນ້ອຍທໍ່ໃຈ

+ ຕາໃຜນໍ້ອ່ານີ້ ທີ່ຍຶບຍຶນຄວາມຮັກ
ປັກປູກເປັນທຳມະທານ ຫວ່ານກຸສົນຜົນຄ້ຳ
ດວງຕາດຳເຜີຍໃຫ້ ເຫັນຫົວໃຈຮັກທໍ່

ບໍ່ແມ່ນເອືອຍກໍເລດໄວ້ ໃນຫ້ອງແຫ່ງຕາ

\+ ຕາຕໍ່ຕາເມື່ອຈ້ອງ ທັງສອງຄູ່ດວງຕາ

ຄູ່ໜຶ່ງຕາວອນຂໍ ນ່ຽວນາງນົງໄທ້

ຄູ່ໜຶ່ງດວງຕາໃຫ້ ຄວາມຫວັງອົບອຸ່ນ

ປຸນດັ່ງພື້ນແຜ່ນຜ້າ ສະໄບຕຸ້ມຕ່ອນຄີງ

\+ ຫລີງລໍ່າຕາຄູ່ນັ້ນ ສໍາພັນຜູກດວງຈິດ

ເປັນດວງຕາພະໄມມິດ ຍື່ນເຍືອງແຍງຊວານ

ອວນແອ່ວວອນວານເວົ້າ ເອົາດວງຕາບິນບອກ

ບໍ່ແມ່ນຕາຫລອກລ້ຽວ ລວງລໍ້ຫລ່ຽມຊຸບາຍ

\+ ເປັນສາຍຕາເຊື້ອງຊອນ ຊອນສອດໃຈຈິງ

ອີງໂອບອອມຫອມຮັກ ເພື່ອນແພງບໍ່ວາງເວັ້ນ

ເປັນແສງຕາປະສານສາວ ຄວາມດີດາແຕ່ງ

ໃຜໄດ້ແຍງກໍກ່າວຍ້ອງ ຍໍເຈົ້າວ່າຜູ້ດີ

\+ ເຈົ້າຂອງຕາຄູ່ນີ້ ມີນາມຊື່ສິນໃດ

ໃຜບໍ່ທັນພານພົບ ຄູ່ຕາຊິເຜີຍໃຫ້

ນາງນັ້ນເນົາໃນຫ້ອງ ໂຮງພະຍາບານຂານຂ່າວ

ເປັນແພດລາວຜູ້ພຽບພ້ອມ ຫອມຊ້ອຍຊື່ນໃຈ ເຈົ້າເອີຍ

./.

# ຊົມເດືອນ

+ ເດືອນເອີຍ ຄືນເດືອນແຈ້ງ ປະກາຍແສງສົດຊື່ນ ງາມເດ
ດູດຫມື່ນດວງປະທີບໄຕ້ ເຍືອງໃຫ້ຮຸ່ງເຫັນ
+ ຄືນນີ້ຮຸ່ມນັ່ງສົ່ງ ຫລິງລຳດູເດືອນ
ແສງຕາເລືອນແລລອຍ ປ່ອຍໄປຕາມເກົ້າ
ເບິ່ງບໍ່ໄລລາເອື້ອນ ຍາມເດືອນປະກາຍສ່ອງ
ສອງຕາມອງໄຟຟົ້ນ ກະສັນໃກ້ກ່ອນເດືອນ
+ ຄືນໃດເດືອນມືດອ້ຳ ເມໂຄກ້ຳເຕັງຕັນ
ດວງພະຈັນບໍ່ມີແສງ ມືດເສຍສູນເສົ້າ
ຫົວໃຈເຮົາລະທົມກົ້ມ ດອມພະຈັນອົມຍື້ມ
ສອງຕາຊຶມປຊູກຈົ້ນ ຍິ້ມຍ້ອຍຍ່າວໄຫລ
+ ຄືນນີ້ພະຈັນໃສແຈ່ມຟ້າ ປະກາຍເປັ່ງເຕັມດວງ
ຫາຍຫ່ວງໃນມະໂນຫມອງ ຫມື່ນກອງກວມກຸ້ມ
ຫຸ້ມຫໍ່ຍໍແຍງເຈົ້າ ດວງເດືອນບໍ່ຮູ້ເບື່ອ
ງາມເຫລືອເມື່ອລຳສົ່ງ ຫລິງເຈົ້າບໍ່ຫ່າງໄລ
+ ເດືອນເຫມືອນມີຄູ່ໄວ້ ບັນເທົາໂສກຫວອຍເຫງົາ

ຄອຍແບ່ງເບົາຍາມທຸກ　　ໝູ່ປະຊາແດນດ້າວ
ຍາມເຫງົາເອົາເດືອນຕ້ານ　　ຄວາມໃນງ້ຳເຫງືອນ
ເດືອນເອີຍເດືອນໜ່ວຍແຈ້ງ　　ແຍງເຈົ້າເບື່ອບໍ່ເປັນ
+ ໃຜທ່ອນລະຫວ່າງເວັ້ນ　　ຮານຕ່າງໄລເດືອນ ໄດ້ນໍ
ເດືອນເອີຍເດືອນດວງໃສ　　ແຈ່ມນະພາເພັງແຈ້ງ
ແຍງລຳເດືອນບິນຟ້າ　　ນິດາລາຄຽງຄູ່
ຜູ້ໃດເດ ແຕ່ງປັ້ນ　　ພະຈັນເຈົ້າຈິ່ງແຈ່ມໃສ
+ ໃຕ້ຕ່ຳເດືອນພາກພື້ນ　　ພາຍລຸ່ມຊຸມມະນຸດ
ສິດຊື່ນຊົມສົມຫວັງ　　ນິ້ງແລພະຈັນແຈ້ງ
ເນໂຄຫາຍເຫີຍແຫ້ງ　　ແສງພະຈັນໃສສ່ອງ
ທົ່ວທຸກທິນແຫ່ງຫ້ອງ　　ຊົມຊ້ອຍຊື່ນສະບາຍ
+ ຫລາຍຮູບການຢູ່ໃຕ້　　ພະຈັນສ່ອງແສງເຖິງ ງານເດ
ບໍ່ລະເຫລີງຊິງຊັງ　　ຂະນອດດິພິ້ຮາຍ
ຫມາຍແຕ່ເບື່ອງແຍງໃຫ້　　ໂລກາໃສສະຫວ່າງ
ເດືອນບໍ່ຫມາງຫນ່າຍເວັ້ນ　　ຮານຮ້າງຕ່າງດິນ ດອກນາ

. / .

# ສາລະບານ


| | |
|---|---|
| ພາກຮັງ | 1 |
| ຫອມກິ່ນເຂົ້າຫນຽວ | 10 |
| ໂຮງລະຄອນໃຫຍ່ | 12 |
| ຮູບຖ່າຍ | 13 |
| ແມງວັນ | 21 |
| ຄ່າຂອງຄູ | 22 |
| ປູ່ແຫວນ | 24 |
| ຂອງຝາກ | 35 |
| ຫລານສອນປູ່ | 37 |
| ຄວາຍແມ່ນາງ | 39 |
| ເຫລົ້າ | 45 |
| ຂອງຂະລຳ | 47 |
| ແຮງໃຈ | 49 |
| ຮີກຄືນຮີກຫຍ້າ | 58 |
| ຈົ່ງກ້າວໄປ | 60 |
| ກິ່ນນາງ | 61 |
| ໃຈຕາ | 87 |
| ຊຶມເດືອນ | 89 |

## ຂໍ້ມູນກ່ຽວກັບ (?)

ຂໍ້ມູນກ່ຽວກັບ

ບໍລິສັດກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ

ເຊິ່ງແມ່ນລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກຳ ແລະ ຫັດຖະກຳ, ມີທະບຽນ ກໍ່ສ້າງແລະຕິດຕັ້ງໄຟຟ້າຊັ້ນ _7_, ດຳເນີນກິດຈະການກໍ່ສ້າງແລະຕິດຕັ້ງໄຟຟ້າທົ່ວປະເທດ, ກໍ່ສ້າງ ຕາຄ່າຍແຮງກາງ, ແຮງຕ່ຳ, ຕິດຕັ້ງໝໍ້ແປງ, ຕິດຕັ້ງໄຟໃນເຮືອນສ້ອມແປງອຸປະກອນໄຟຟ້າ, ບໍລິການຮ້ານຄ້າຈຳໜ່າຍ ແລະ ການ ຄ້າຂາເຂົ້າ ຂາອອກ, ສຳຫລວດໂຄງການໄຟຟ້ານ້ຳຕົກຂະ ໜາດນ້ອຍມີພະນັກງານທັງໝົດເກີນ 500 ຄົນ, ວິຊາການຊັ້ນສູງຫລາຍກ່ວາ 50 ຄົນ. ບໍລິສັດກໍ່ສ້າງແລະຕິດຕັ້ງໄຟຟ້າມີສາຂາກອງຕ່າງໆ ເຊັ່ນ : ກອງໄຟຟ້ານະຄອນຫລວງ, ກອງໄຟຟ້າອຸດສາຫະກຳກອງໄຟຟ້າຊົນນະບົດ, ກອງໄຟຟ້າຄຳມ່ວນ, ກອງສະຫວັນນະເຂດ, ກອງຈຳປາສັກ ແລະສາລະວັນ.

ໂຄງການຕ່າງໆທີ່ໄດ້ກໍ່ສ້າງແລະຕິດຕັ້ງໄຟຟ້າຜ່ານມາຄື: ໂຄງການຂະຫຍາຍໄຟຟ້າຊົນນະບົດທົ່ງຮາຍວຽງຈັນ, ໂຄງການທ່າແຂກໂພນຕິ້ວ, ໂຄງການເຊບັ້ງໄຟ, ໂຄງການຂະຫຍາຍໄຟຟ້າຢູ່ບັນ ດາແຂວງພາກໃຕ້, ຄຳມ່ວນ, ສະຫວັນນະເຂດ, ສາລະວັນແລະຈຳ ປາສັກ, ໂຄງການໄຟຟ້າອຸດົມໄຊ, ຫລວງນ້ຳທາ ບໍ່ແກ້ວຫ້ວຍຊາຍ, ໄຊຍະບູລີ, ຊະນະຄາມແຂວງວຽງຈັນແລະອັດຕະປື, ນອກນັ້ນຍັງມີວຽກບໍລິການອີກ.





ບໍລິສັດ ກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ

**ELECTRICAL CONSTRUCTION & INSTALLATION**

116-118 Luang pra bang Road, P.O. Box 3184, Vientiane
Tel: 5454, 5019, 16-9040

116-118 ຖະໜົນຫລວງພະບາງ, ຕູ້ ປ.ນ. 3184 ວຽງຈັນ
ໂທ: 5454, 5019, 16-9040